# ບົດທີ 1

# ການປ່າວປະກາດຂ່າວປະເສີດ ຂອງພຣະເຢຊູຄຣິສ

## ບົດນຳ

ກິຈການທີ່ໃຫຍ່ທີ່ສຸດ ທີ່ພຣະເຈົ້າໄດ້ມອບຫມາຍໃຫ້ແກ່ຄຣິສຈັກ ຄືການປ່າວປະກາດຂ່າວປະເສີດ ແລະນຳເອົາຈິດວິນຍານທີ່ຫລົງຫາຍມາເຖິງພຣະເຢຊູຄຣິສ ວຽກການປ່າວປະກາດຂ່າວປະເສີດເປັນຫົວໃຈສຳຄັນຂອງຄຣິສຈັກ ແລະຕ້ອງຖືວ່າເປັນງານເອກທີ່ບໍ່ດ້ອຍໄປກວ່າງານດ້ານຄຣິສຕຽນສຶກສາ ຫລືດ້ານອື່ນ ໆ ຂອງຄຣິສຈັກ ເພາະວ່າການປະກາດຂ່າວປະເສີດເປັນງານເອກທີ່ພຣະເຈົ້າໄດ້ມອບຫມາຍໃຫ້ແກ່ຄຣິສຕຽນທຸກຄົນ ຜູ້ເຊື່ອທຸກຄົນມີຫນ້າທີ່ຕ້ອງປະກາດພຣະຄຣິສ ທັງໃນດ້ານຄວາມປະພຶດ ກິຣິຍາອາຈາ ແລະການດຳເນີນຊີວິດ ຫລາຍກວ່ານີ້ອີກຄື ຕ້ອງກ້າຫານອອກຊັກຊວນໃຫ້ຜູ້ຄົນມາເຖິງຄວາມຣອດພົ້ນໃນພຣະເຢຊູຄຣິສ ຫລືອຸທິດຖວາຍເວລາຂອງຕົນໃນການຢ້ຽມຢາມ ແລະເປີດເຜີຍເຖິງຄວາມຮັກຂອງພຣະເຈົ້າທີ່ມີຕໍ່ມະນຸດທຸກຄົນ ຄຣິສຕຽນທຸກຄົນສົມຄວນໄດ້ຮັບການຝຶກແອບອົບຮົມຕົວໃຫ້ຮູ້ຈັກການເປັນພຍານ ຕ້ອງຮູ້ຈັກບອກເລົ່າໃຫ້ຜູ້ອື່ນຮູ້ເຖິງພຣະຄຸນຂອງການໄຖ່ບາບໃນພຣະເຢຊູຄຣິສ ການປ່າວປະກາດຂ່າວປະເສີດຂອງຄຣິສຕຽນຜູ້ນຶ່ງຜູ້ໃດກໍ່ຕາມ ຖືວ່າເປັນການຮັບໃຊ້ພຣະເຈົ້າໂດຍຕົງ ແລະເປັນການຊ່ວຍຈິດວິນຍານຂອງເພື່ອນມະນຸດໃຫ້ຫລຸດພົ້ນຈາກໂທດບາບນໍຣົກອີກດ້ວຍ

### I. ຄຳສັ່ງໃຫ້ອອກໄປປ່າວປະກາດຂ່າວປະເສີດ

ໃນພຣະຄຣິສທັມຄັມພີໄດ້ຈາຣຶກເຖິງຄວາມສຳຄັນຂອງການປະກາດຂ່າວປະເສີດໄວ້ຫລາຍບົດຫລາຍຕອນດັ່ງນີ້

1. ມັດທາຍ 28:19-20
2. ມາຣະໂກ 16:15
3. ລູກາ 24:47, 48
4. ໂຢຮັນ 20:21
5. ກິຈການ 1:8
6. ມັດທາຍ 4:19: 9:37-38
7. ມັດທາຍ 22:9
8. ໂຢຮັນ 4:35

ຈາກຂໍພຣະຄັມພີຕົວຢ່າງຂ້າງຕົ້ນນີ້ ຈະເຫັນໄດ້ວ່າກິຈການປ່າວປະກາດຂ່າວປະເສີດຂອງພຣະເຢຊູຄຣິສເປັນເຣື້ອງທີ່ສຳຄັນທີ່ສຸດຂອງການຂຍາຍຄຣິສຈັກ ແລະເພື່ອໃຫ້ສຳເຣັດໄປຕາມນ້ຳພຣະທັຍຂອງພຣະເຈົ້າເພື່ອນຳເອົາຜູ້ຫລົງຫາຍມາເຖິງຄວາມຮັກຂອງພຣະເຈົ້າ ໂດຍທີ່ພຣະເຢຊູໄດ້ຊົງຕາຍໄຖ່ບາບເທິງໄມ້ກາແຂນ ອັນເປັນແຜນການຊ່ວຍມະນຸດທົ່ວໃຕ້ຟ້າໃຫ້ໄດ້ຮັບຄວາມຣອດພົ້ນ ແລະໄດ້ກັບຄືນສູ່ອ້ອມອົກຂອງພຣະເຈົ້າອີກ ເພາະເຫດວ່າມະນຸດໄດ້ຫລົງຫາຍ ແລະຫນີໄປຈາກທາງຂອງພຣະອົງ ແຕ່

ວ່າມະນຸດບໍ່ສາມາດຊ່ວຍຕົນເອງໃຫ້ພົ້ນຈາກບາບແລະເວນກັມຂອງຕົວ ຈຶ່ງຕ້ອງຮັບໂທດໄປຕາມກົດເກນແຫ່ງຄວາມບາບ ຕາມທີ່ຕົວເອງໄດ້ເຮັດໄວ້ ໂດຍສະເພາະຢ່າງຍິ່ງບາບໃຫຍ່ທີ່ສຸດ ຄືການທີ່ມະນຸດປະຕິເສດ ບໍ່ຍອມຮັບເອົາພຣະເຈົ້າ ຜູ້ເປັນເຈົ້າຂອງຊີວິດ ຜູ້ເປັນເຈົ້າຂອງຟ້າສວັນ ແລະແຜ່ນດິນໂລກ ແລະທົ່ວພິພົບໃນຈັກກະວານ ມະນຸດຫລົງລືມພຣະເຈົ້າ ມະນຸດຍອມຮັບວ່າພຣະເຈົ້າຜູ້ເປັນຕົ້ນເຫດໃຫ້ເກີດຊີວິດທັງມວລ ດັ່ງນັ້ນພຣະເຈົ້າຜູ້ຊົງຮັກມະນຸດຢ່າງຫລວງຫລາຍຈຶ່ງມີພຣະປະສົງທີ່ຈະໃຫ້ມະນຸດກັບຄືນດີຫາພຣະອົງ ແຕ່ແມ່ນໃຜທີ່ຈະເປັນຜູ້ບອກເລົ່າຂ່າວປະເສີດນີ້ແມ່ນໃຜຈະເປັນຜູ້ຖືກສົ່ງອອກໄປປະກາດ ແລະແມ່ນໃຜຈະເປັນຜູ້ສນັບສນຸນໃຫ້ເກີດການປ່າວປະກາດ

ຄຳຕອບ ຄືວ່າ ພຣະເຈົ້າເປັນຜູ້ເລີ້ມຕົ້ນ ພຣະອົງຈະເປັນຜູ້ນຳພາຈິດໃຈຂອງທ່ານໃຫ້ປ່າວປະກາດຂ່າວປະເສີດ ພຣະອົງໄດ້ຊົງເອີ້ນທ່ານ ພຣະອົງເອງຈະເປັນຜູ້ທີ່ສົ່ງທ່ານອອກໄປ ແລະພຣະອົງເອງຈະເປັນຜູ້ສນັບສນຸນທ່ານ ພຣະອົງໄດ້ເອີ້ນຜູ້ນຳຄົນສຳຄັນຫລາຍ ໆ ຄົນໃນພຣະຄັມພີພາກພັນທະສັນຍາເດີມ ໃນພຣະຄັມພີພາກພັນທະສັນຍາໃຫມ່ ໃນປວັດສາດຄຣິສຈັກ ພຣະອົງກຳລັງເອີ້ນທ່ານໃນບັດນີ້ ຢູ່ທີ່ວ່າທ່ານພ້ອມທີ່ຈະຕອບຮັບ ແລະຕອບສນອງພຣະຄຸນອັນຍິ່ງໃຫຍ່ຫລືບໍ່ ອັນນີ້ຢູ່ທີ່ການຕັດສິນໃຈຂອງທ່ານ ແຕ່ວ່າພຣະອົງຊົງຣໍຄອຍທ່ານ ເພື່ອທ່ານຈະເປັນດັ່ງທູຕຂອງພຣະເຈົ້າ ທີ່ຈະປະຕິບັດວຽກການຂອງພຣະເຈົ້າໃຫ້ສຳເຣັດ

## II. ຄວາມໝາຍຂອງການປ່າວປະກາດຂ່າວປະເສີດ

ຄຳວ່າ "ການປ່າວປະກາດຂ່າວປະເສີດ" (Evangelism) ມາຈາກຄຳໃນພາສາກຣີກຊຶ່ງມີຄວາມໝາຍວ່າ "ການນຳອອກໄປສູ່" ຫລື "ການບອກເລົ່າໃຫ້ຮູ້"

ດັ່ງນັ້ນ ການປະກາດຂ່າວປະເສີດແຫ່ງພຣະເຢຊູຄຣິສຕ໌ ການປ່າວປະກາດເຣື່ອງຣາວຂ່າວປະເສີດ ການຕາຍໄຖ່ບາບຂອງພຣະເຢຊູຄຣິສ ການເປັນຂຶ້ນມາຈາກຕາຍ ການຊ່ວຍມະນຸດໃຫ້ໄດ້ຮັບຄວາມຣອດພົ້ນ (1 ກທ 15:3-8, ກທ 1:4) ອັນເປັນການນຳເອົາຂ່າວດີ (Good News) ນຳເອົາຂ່າວປະເສີດສູ່ມວລຊົນ ແລະເປັນການບອກເລົ່າໃຫ້ມະນຸດທຸກຄົນ ໄດ້ຮູ້ຈັກເຖິງຄວາມຮັກຂອງພຣະເຈົ້າຄືຂ່າວປະເສີດເຣື່ອງການຕາຍໄຖ່ບາບຂອງພຣະເຢຊູເທິງໄມ້ກາງແຂນ ເພື່ອຍົກໂທດໂຜດມະນຸດທຸກຄົນທີ່ເຊື່ອຖືທີ່ຍອມຕ້ອນຮັບພຣະອົງໄວ້ໃນຈິດໃຈ ແລະເກີດການປ່ຽນແປງຊີວິດ ເກີດການຖິ້ມໃຈເກົ່າເອົາໃຈໃຫມ່ຕັ້ງຕົ້ນຊີວິດໃຫມ່ກັບພຣະອົງ ແລ້ວພຣະອົງຈະປະທານພຣະພອນ ປະທານບຳເໜັດລາງວັລອັນສູງສຸດແກ່ເຮົາ ເຮົາທັງຫລາຍຈະໄດ້ຮັບຊີວິດຖາວອນອັນຕລອດໄປເປັນນິດ ຖານະເປັນບຸດຂອງພຣະເຈົ້າແລະຮັບເອົາແຜ່ນດິນສວັນເປັນມໍຣະດົກ ອາເມນ

## III. ສ່ວນປະກອບຂອງການປະກາດຂ່າວປະເສີດ

1. ເນື້ອຫາຂອງຂ່າວປະເສີດ (ຂ່າວປະເສີດຂອງພຣະເຢຊູຄຣິສ)
2. ຜູ້ປ່າວປະກາດຂ່າວຫລືຜູ້ນຳຂ່າວອອກໄປສູ່ມວລມະນຸດ
3. ຜູ້ຮັບຟັງຂ່າວພຣະເສີດ
4. ຜູ້ເຮັດໃຫ້ຂ່າວປະເສີດເກີດຜົນໃນຕົວຜູ້ຟັງ

1. **ເນື້ອຫາຂອງຂ່າວປະເສີດ** ຂ່າວປະເສີດ ແມ່ນເຣື້ອງຣາວການຕາຍໄຖ່ບາບຂອງພຣະເຢຊູຄຣິສ

ກ. ຂ່າວປະເສີດນີ້ເປັນຂ່າວປະເສີດດຽວ (ກທ 1:7-8, ກຈ 4:12) ຄືບໍ່ມີຂ່າວປະເສີດເຣື້ອງອື່ນໃດອີກ ນອກຈາກເຣື້ອງຄວາມຮັກຂອງພຣະເຈົ້າ ແລະການທີ່ພຣະອົງໄດ້ສົ່ງພຣະບຸດອົງດຽວແມ່ນພຣະເຢຊູຄຣິສ ມາຕາຍໄຖ່ບາບມະນຸດ ອັນນີ້ເປັນຂ່າວປະເສີດແທ້ແຕ່ອັນດຽວ

ຂ. ຂ່າວປະເສີດນີ້ບໍ່ມີການປ່ຽນແປງ (ຢຮ 3:16) ຄວາມຮັກຂອງພຣະເຈົ້າທີ່ມີຕໍ່ມະນຸດແລະແຜນການຊ່ວຍໃຫ້ຣອດພົ້ນຂອງພຣະອົງຕັ້ງແຕ່ອາດີດກາລຈົນເຖິງປັດຈຸບັນແລະອານາຄົດທີ່ຈະມານັ້ນບໍ່ປ່ຽນແປງ ພຣະອົງໄດ້ຕັ້ງພຣະທັຍໄວ້ແລ້ວ ແລະມີພຣະສັນຍາທີ່ຈະຊ່ວຍມະນຸດໃຫ້ຣອດພົ້ນພຣະບໍ່ປ່ຽນແປງ

ຄ. ເນື້ອນັຍແກ່ນແທ້ຂອງຂ່າວປະເສີດ ຄື

(1) ພຣະເຈົ້າຊົງຮັກໂລກ

(2) ພຣະເຢຊູຄຣິສຊົງເປັນພຣະບຸດຂອງພຣະເຈົ້າ

(3) ພຣະເຢຊູຄຣິສຊົງຕາຍໄຖ່ບາບມະນຸດເທິງໄມ້ກາງແຂນ

(4) ພຣະເຢຊູຄຣິສຊົງເປັນຂຶ້ນມາຈາກຕາຍ

(5) ພຣະເຢຊູຄຣິສຈະສເດັດກັບມາໃຫມ່ ເພື່ອພິພາກສາໂລກ

(6) ຜູ້ເຊື່ອຈະໄດ້ເຂົ້າໃນສງ່າຣາສີຮ່ວມກັບພຣະເຈົ້າ

ເຣື້ອງຣາວຂ່າວປະເສີດແຫ່ງການຊ່ວຍມະນຸດໃຫ້ຣອດພົ້ນນັ້ນ ພຣະເຈົ້າໄດ້ຈັດຕຽມໄວ້ລ່ວງຫນ້າແລ້ວ ຕັ້ງແຕ່ເມື່ອເລີ້ມສ້າງໂລກ ເມື່ອມະນຸດບໍ່ເຊື່ອຟັງພຣະເຈົ້າ ແລະຫລົງຜິດຕົກໃນບາບ ແຜນການຊ່ວຍມະນຸດໃຫ້ຣອດພົ້ນນັ້ນ ພຣະເຈົ້າໄດ້ຕັ້ງຕົ້ນກະທຳເລື້ອຍມາໃນປວັດສາດ ໃນຊົນຊາດອິສຣາເອລ ເພື່ອເປັນການເປີດເຜີຍນ້ຳພຣະທັຍແລະຄວາມຮັກຂອງພຣະອົງທີ່ມີຕໍ່ມວລມະນຸດ (ປຖກ 12:1-3) ພຣະເຈົ້າໄດ້ຊົງເລືອກອັບຣາຣາມຜູ້ເປັນບັນພະບຸຣຸດຕົ້ນຕະກູລຂອງອິສຣາເອລ ເພື່ອເປັນຕົວຢ່າງແຫ່ງພັນທະສັນຍາ ພຣະເຈົ້າໄດ້ຮັກສາພັນທະສັນຍາແລະຊົງສຳແດງການຊ່ວຍມະນຸດໃຫ້ຣອດພົ້ນ ໂດຍພຣະເຢຊູຄຣິສຜູ້ເປັນເຊື້ອສາຍຂອງອັບຣາຣາມ (ປຖກ 15:1-6) ພຣະເຈົ້າໄດ້ຕຽມທຸກສິ່ງໄວ້ແລະເມື່ອເວລາກຳຫນົດໄດ້ມາເຖິງ ພຣະເຈົ້າໄດ້ສົ່ງພຣະບຸດອົງດຽວຂອງພຣະອົງມາຕາຍໄຖ່ບາບມະນຸດ (ກທ 4:4-7)

ໄດ້ຊົງສະແດງຄວາມຮັກຕໍ່ມະນຸດ

ພຣະເຈົ້າເປັນຜູ້ເລີ້ມຕົ້ນ -------------------------→  ສຳເຣັດ ທີ່ໄມ້ກາງແຂນ ຢຮ 3:16

2. **ຜູ້ປ່າວປະກາດຂ່າວຫລືຜູ້ນຳຂ່າວອອກໄປສູ່ມວລມະນຸດ**

ແນ່ນອນທີ່ສຸດວ່າ ຜູ້ທີ່ປະກາດຂ່າວປະເສີດຂອງພຣະເຢຊູຄຣິສ ຈຳເປັນຕ້ອງເປັນຜູ້ມີຄວາມເຊື່ອໃນຂ່າວປະເສີດ ເປັນຜູ້ມີປະສົບການຂອງການກັບໃຈບັງເກີດໃຫມ່ ມີຄວາມແນ່ໃຈໃນຄວາມຣອດພົ້ນ

ຂອງຕົນເອງ ມີຈິດໃຈຮັກພຣະເຈົ້າ ແລະເປັນຫ່ວງເຖິງຈິດວິນຍານທີ່ຫລົງຫາຍຂອງຜູ້ອື່ນ ຖ້າຜູ້ປະກາດເຜີຍແຜ່ບໍ່ແນ່ໃຈໃນຄວາມພົ້ນຂອງຕົນເອງແລ້ວ ການປະກາດຂອງຜູ້ນັ້ນກໍບໍ່ມີອໍານາດ ຂາດຄວາມແນ່ໃຈຕໍ່ຄໍາພຍານຂອງຕົນເອງ

ທ່ານໂປໂລໄດ້ກ່າວໄວ້ວ່າ "ສໍາລັບຂ່າວປະເສີດນັ້ນ ເຮົາໄດ້ຮັບຊົງແຕ່ງຕັ້ງໃຫ້ເປັນຜູ້ປະກາດ . . . ເພາະວ່າເຮົາຮູ້ຈັກພຣະອົງຜູ້ທີ່ເຮົາໄດ້ເຊື່ອແລະໄວ້ວາງໃຈນັ້ນ ແລະເຮົາເຊື່ອໝັ້ນວ່າພຣະອົງຊົງສາມາດຮັກສາ ຊຶ່ງເຮົາໄດ້ມອບໄວ້ກັບພຣະອົງຈົນເຖິງວັນນັ້ນ" (2 ຕທ 1:11-12)

**ຊີວິດແລະຈິດວິນຍານຂອງຜູ້ປະກາດ ຫລືຜູ້ນໍາວິນຍານ**

ດັ່ງນັ້ນ ຜູ້ປ່າວປະກາດຂ່າວປະເສີດຈໍາເປັນຕ້ອງມີຊີວິດ ແລະຈິດວິນຍານທີ່ເປັນແບບຢ່າງດັ່ງນີ້

ກ. ເຊື່ອຟັງ

ຂ. ຖ່ອມຕົວ

ຄ. ປະຕິບັດຕາມພຣະມຫາບັນຊາ

ງ. ມີຊີວິດທີ່ມັກການອະທິຖານໄຫວ້ວອນພຣະເຈົ້າ

ຈ. ເຊື່ອວ່າພຣະຄໍາຂອງພຣະເຈົ້າມີຣິດເດດ

ສ. ມີຊີວິດທີ່ຮ້ອນຮົນຢາກຮັບໃຊ້

**ກ. ເຊື່ອຟັງ**

ຜູ້ທີ່ເຊື່ອຟັງພຣະເຈົ້າ ເປັນຜູ້ທີ່ມີຊີວິດທີ່ໄດ້ຮັບການຊໍາຣະຈາກພຣະເຈົ້າ 1 ຊມອ 15:12, 1 ທຊ 5:23, ມທ 5:8, 48, 1 ຢຮ 3:6-9 ຜູ້ປະກາດຄວນຈະໄດ້ພິຈາຣະນາຕົວເອງ ໃນຖານະທີ່ເປັນເໝືອນຕົວແທນຂອງພຣະເຈົ້າ ໃນການເປັນພຍານແລະເປີດເຜີຍຂ່າວເຣື້ອງຄວາມຣອດພົ້ນທີ່ເວົ້າມານີ້ບໍ່ໄດ້ໝາຍຄວາມວ່າ ຜູ້ປະກາດນັ້ນຕ້ອງດີຄົບຖ້ວນສົມບູນບໍ່ມີຂໍ້ຜິດພາດໃນຊີວິດ ແຕ່ຊີວິດທີ່ເຊື່ອຟັງແລະຍອມຮັບການຊໍາຣະຈາກພຣະເຈົ້າ ນັ້ນເປັນຊີວິດທີ່ຈະເຣີ່ມເຕີບໂຕໃນຝ່າຍວິນຍານ ເຮົາທຸກຄົນຈໍາຕ້ອງຮຽນຮູ້ແລະປ່ຽນແປງຊີວິດທຸກວັນ ດັ່ງນັ້ນຈຶ່ງສົມຄວນຂໍການຊໍາຣະຈາກພຣະເຈົ້າ ດັ່ງພຣະທັມເພງສັຣເສີນ 51:7-13 ໄດ້ກ່າວວ່າ

ຂໍຊົງປັດເຊັ່ຽຄວາມບາບຂອງຂ້ານ້ອຍອອກໄປ<br>
ເພື່ອຂ້ານ້ອຍຈະຂາວສະອາດສົດໃສ<br>
ຂໍພຣະອົງຊົງຊໍາຣະລ້າງຂ້ານ້ອຍ ແລະຂ້ານ້ອຍກໍຂາວກວ່ານວນຝ້າຍ<br>
ຂໍຊົງໂຜດໃຫ້ຂ້ານ້ອຍໄດ້ຍິນສຽງອັນມ່ວນຊື່ນແລະຍິນດີ<br>
ເຖິງແມ່ນວ່າພຣະອົງໄດ້ຢຽບຢໍ່າທໍາລາຍ ຂ້ານ້ອຍກໍຕາມ<br>
ຂ້ານ້ອຍກໍຍັງຈະມີຄວາມສຸກຢູ່ອີກ<br>
ຂໍພຣະອົງຢ່າຫລຽວເບິ່ງຄວາມຜິດຂອງຂ້ານ້ອຍ<br>
ແລະກໍາຈັດຄວາມຊົ່ວທັງໝົດຂອງຂ້ານ້ອຍອອກໄປ<br>
ພຣະເຈົ້າຂາ ຂໍຊົງສ້າງຈິດໃຈຂ້ານ້ອຍໃຫ້ບໍຣິສຸດ<br>
ຂໍພຣະອົງຊົງສວມຈິດວິນຍານທີ່ສັດຊື່ໃຫ້ແກ່ຂ້ານ້ອຍ<br>
ຂໍຢ່າຂັບໄລ່ຂ້ານ້ອຍຈາກພຣະພັກພຣະອົງ

ແລະຢ່າຖອນເອົາພຣະວິນຍານບໍຣິສຸດຂອງພຣະອົງໄປຈາກຂ້ານ້ອຍ
ຂໍພຣະອົງຊົງປະທານຄວາມປິຕິຍິນດີອີກ
ຄືຄວາມຍິນດີທີ່ມາຈາກການຊ່ວຍໃຫ້ພົ້ນຂອງພຣະອົງ
ແລະຂໍຊົງກະທໍາໃຫ້ຈິດວິນຍານຂອງຂ້ານ້ອຍເຊື່ອຟັງ
ແລ້ວຂ້ານ້ອຍຈະສອນພຣະຄໍາຣັດຂອງພຣະອົງແກ່ຜູ້ທີ່ເຮັດຜິດ
ເພື່ອພວກເຂົາຈະກັບຄືນມາຫາພຣະອົງ"

## ຂ. ຖວາຍຕົວ

ຜູ້ປະກາດຂ່າວປະເສີດຂອງພຣະເຈົ້າຕ້ອງຍອມຖວາຍຕົວ ເພື່ອຮັບໃຊ້ການຖວາຍຕົວນີ້ ຫມາຍຮອມເຖິງ ການແຍກຕົວ ຫລືຍອມຕົວ ຍອມເສັຽສລະເວລາເສັຽສລະການດໍາເນີນຊີວິດ ແນວເກົ່າທີ່ມັກມ່ວນຊື່ນຕາມສັງຄົມ ເພື່ອຖວາຍການຮັບໃຊ້ແດ່ພຣະເຈົ້າ (ຣມ 12:1-2, ກທ 2:20, 1 ກທ 6:17-19, 1 ຢຮ 2:15, ອຟ 5:18) ເມື່ອເຮັດໄດ້ດັ່ງນີ້ແລ້ວຈະເປັນການຖວາຍກຽດແດ່ພຣະເຈົ້າ ດັ່ງເຄື່ອງຫອມທີ່ຖວາຍແດ່ພຣະອົງ ເພາະວ່າແຕ່ເດີມນັ້ນເຮົາເອົາດອກໄມ້ທູບທຽນຖວາຍແດ່ພຣະທີ່ເຮົາບໍ່ຮູ້ຈັກ ແຕ່ບັດນີ້ເຮົາເອົາກາຍ ໃຈ ແລະວິນຍານຈິດຂອງເຮົາຖວາຍແດ່ພຣະເຈົ້າທີ່ເຮົາຮູ້ຈັກ ແລ້ວພຣະເຈົ້າຈະຕອບແທນຄືນ ດ້ວຍບໍາເນັດຣາງວັລມົງກຸດຊີວິດ ກຽດຕິຍົດ ແລະສງ່າຣາສີໃນພາຍພາກໜ້າ ອັນເປັນຊີວິດທີ່ຫຍັ່ງຍືນຖາວອນກັບພຣະອົງ

## ຄ. ປະຕິບັດຕາມພຣະມຫາບັນຊາ (The Great Commandment) ທີ່ມາຈາກພຣະເຈົ້າ

ໃນເມື່ອເຮົາຮູ້ຈັກແລ້ວວ່າ ພຣະເຈົ້າຊົງສັພພັນຍູຮູ້ຈັກທຸກສິ່ງ ພຣະອົງຊົງຮູ້ຈັກສິ່ງທີ່ດີທີ່ສຸດສໍາລັບມະນຸດ ແລະພຣະອົງຕ້ອງການມອບສິ່ງທີ່ດີທີ່ສຸດແກ່ມະນຸດ ດັ່ງນີ້ແລ້ວການທີ່ເຮົາຈະເຮັດຕາມຄໍາສັ່ງຂອງພຣະອົງຕ້ອງເປັນສິ່ງທີ່ດີເລີດ ແລະໄວ້ວາງໃຈໃນຄໍາສັ່ງຂອງພຣະອົງ ພຣະເຈົ້າຊົງເປັນເຈົ້າຊີວິດເປັນເຈົ້າເຫນືອຫົວ ເປັນນາຍ ເຮົາຕ້ອງຍອມຕົວເຮັດຕາມຄໍາສັ່ງຂອງພຣະອົງທີ່ປາກົດໃນ:

- ພຣະທັມມັດທາຍ 28:18.20
- ພຣະທັມມາຣະໂກ 16:15
- ພຣະທັມລູກາ 24:47
- ພຣະທັມໂຢຮັນ 20:21
- ພຣະທັມກິຈການ 1:8

## ງ. ເປັນຜູ້ທີ່ມັກການອະທິຖານໄຫວ້ວອນພຣະເຈົ້າ (ມທ 6:6, ມກ 11:24, ລກ 11:13)

ພຣະເຢຊູຊົງມີຊີວິດທີ່ເປັນແບບຢ່າງແກ່ເຮົາ ພຣະອົງຊົງອະທິຖານຢູ່ສເມີຕລອດເວລາ ໃນຍາມທີ່ພຣະອົງປະກາດນໍາວິນຍານ ໃນເວລາສ່ວນຕົວແລະໃນເວລາທີ່ຢູ່ນໍາເຫລົ່າອັຄສາວົກ ທ່ານໂປໂລໄດ້ກ່າວວ່າ "ຈົ່ງອ້ອນວອນ ແລະໄຫວ້ວອນທຸກຢ່າງ ຈົ່ງອ້ອນວອນໂດຍພຣະວິນຍານທຸກເວລາ ແລະຈົ່ງເຝົ້າລະວັງໃນການນັ້ນດ້ວຍຄວາມພຽນທຸກຢ່າງ ຈົ່ງອ້ອນວອນເພື່ອໄພ່ພົນທັງປວງຂອງພຣະເຈົ້າ ແລະຈົ່ງ

ອ້ອນວອນເພື່ອຂ້າພະເຈົ້າດ້ວຍ ເພື່ອຈະຊົງໂຜດໃຫ້ຂ້າພະເຈົ້າເກີດໃຈກ້າຫານ ອອກປາກສະແດງ ຂໍ້ລັບເລິກເຣື່ອງຂ່າວປະເສີດ ເພື່ອຂ້າພະເຈົ້າຈະເລົ່າຂ່າວປະເສີດນັ້ນດ້ວຍໃຈກ້າຫານ ຕາມທີ່ຂ້າພະເຈົ້າຄວນຈະກ່າວ" (ອຟ 6:18-20)

## ຈ. ເປັນຜູ້ທີ່ມີຄວາມເຊື່ອໃນພຣະຄຳຂອງພຣະເຈົ້າ

ພຣະຄຳຂອງພຣະເຈົ້າມີຣິດເດດສາມາດປ່ຽນແປງຊີວິດຂອງຄົນໄດ້ ເຮົາສົມຄວນຮູ້ຈັກຝຶກແອບ ແລະຮຽນຮູ້ການໃຊ້ພຣະຄຳແຫ່ງຄວາມຈິງຂອງພຣະເຈົ້າຊຶ່ງປຽບເຫມືອນອາວຸດ ເຮັດໃຫ້ຜູ້ຟັງເກີດການສຳນຶກບາບ ແລະຍອມຮັບຄວາມຈິງແຫ່ງຂ່າວປະເສີດ ຍອມຮັບຄວາມຊ່ວຍເຫລືອຈາກພຣະເຈົ້າ (2 ຕທ 3:1, ອຟ 6:17, 2 ປຕ 20:21) ຜູ້ປະກາດຂ່າວປະເສີດຕ້ອງຮູ້ຈັກໃຊ້ຄຳພູດຂອງຕົນແລະບໍ່ເວົ້າຫລາຍຈົນເກີນໄປບໍ່ເຮັດໃຫ້ຜູ້ຟັງເກີດຄວາມຮູ້ສຶກຕໍ່ຕ້ານ ແຕ່ຜູ້ປະກາດສົມຄວນຈະເປີດພຣະຄັມພີໃຫ້ເຂົາໄດ້ອ່ານດ້ວຍຕົວເອງ ຊຶ່ງດີກວ່າຄຳພູດຂອງມະນຸດ ແຕ່ເພາະວ່າ ພຣະຄຳຂອງພຣະເຈົ້າມີຣິດເດດສາມາດຊຳຣະລ້າງຈິດໃຈຂອງຄົນໄດ້

## ສ. ມີຊີວິດທີ່ຮ້ອນຮົນຢາກຮັບໃຊ້

ຜູ້ນັ້ນເປັນຜູ້ທີ່ປາຖນາແລະຕັ້ງໃຈໃນການນຳຈິດວິນຍານຂອງຜູ້ຫລົງຫາຍ ຢາກເຫັນຜູ້ອື່ນໄດ້ຮັບຄວາມພົ້ນ ຮູ້ສຶກເປັນຫ່ວງຕໍ່ຈິດວິນຍານຂອງຄົນທີ່ກຳລັງຈິບຫາຍ ເມື່ອເຮົາເບິ່ງຈາກບຸກຄົນເຫລົ່ານີ້ທີ່ບໍ່ໄດ້ເສັຍເມີຍໃນການນຳຜູ້ອື່ນມາເຖິງພຣະຄຣິສ ຕົວຢ່າງ ອັນເດອາ ນຳຊີໂມນ (ຢຮ 1:39-42) ນາງຢູນີສ ຜູ້ເປັນແມ່ຕູ້ນຳຫລານຊາຍ ຕີໂມທຽວມາເຊື່ອພຣະເຈົ້າ ທ່ານໂປໂລເປັນຫ່ວງຍາດພີ່ນ້ອງຕາມເນື້ອຫນັງຂອງທ່ານ (ຣມ 9:2-3) ເຮົາຜູ້ທີ່ເປັນຜູ້ປະກາດຕ້ອງມີຄວາມຮູ້ສຶກຢາກເຫັນຜູ້ອື່ນເຂົ້າມາໃນຄຣິສຈັກ ເຂົ້າມາເປັນພີ່ນ້ອງກັນໃນພຣະຄຣິສ ແລະຮ່ວມກັນສ້າງຣາຊແຜ່ນດິນຂອງພຣະເຈົ້າ

## 3. ຜູ້ຮັບຟັງຂ່າວປະເສີດ

ຕາມທີ່ພຣະເຢຊູຄຣິສໄດ້ຊົງສັ່ງແກ່ຜູ້ເຊື່ອທຸກຄົນໃຫ້ອອກໄປ ສິດສອນ ປະກາດແກ່ຊົນທຸກຊາດໃຫ້ເປັນສາວົກຂອງພຣະອົງນັ້ນ (The Great Commandment, ມກ 16:15) ຈະເຫັນໄດ້ວ່າຕາມຄຳສັ່ງຂອງພຣະອົງໄດ້ບອກໃຫ້ແຈ່ມແຈ້ງແລ້ວວ່າ ຜູ້ຮັບຟັງຂ່າວປະເສີດແຫ່ງຄວາມຣອດພົ້ນນັ້ນຫມາຍເຖິງມະນຸດທຸກຄົນໃນໂລກນີ້ ບໍ່ວ່າຈະເປັນຊົນຊາດໃດກໍຕາມ ຈຳເປັນຕ້ອງໄດ້ຮັບໂອກາດທີ່ຈະມີຜູ້ໄປເປີດເຜີຍ ເພື່ອເຂົາຈະໄດ້ຍິນໄດ້ຟັງ (ຣມ 10:14-15) ໄດ້ກ່າວຕັກເຕືອນຜູ້ເຊື່ອວ່າ ຜູ້ຮັບຟັງຈະໄດ້ຍິນແລະສາມາດຕັດສິນໃຈຕ້ອນຮັບຂ່າວປະເສີດໄດ້ກໍຕໍ່ເມື່ອມີຜູ້ຍອມເສັຽສລະອອກໄປປະກາດ ພຣະທັມໂຣມ 10:17 ກ່າວວ່າ "ດັ່ງນັ້ນຄວາມເຊື່ອເກີດຂຶ້ນໄດ້ ກໍ່ເພາະການໄດ້ຍິນ ແລະການໄດ້ຍິນເກີດຂຶ້ນໄດ້ກໍເພາະການປະກາດເຣື່ອງຂອງພຣະຄຣິສ ຫາກວ່າເຮົາບໍ່ປະກາດກໍຈະບໍ່ມີຜູ້ໃດໄດ້ຍິນ ແລ້ວຈະເກີດມີຜູ້ເຊື່ອເຕີ່ມເຂົ້າມາໄດ້ຢ່າງໃດ

## ກ. ຜູ້ຟັງຂ່າວປະເສີດ (ມທ 13:1-9, ມກ 4:1-9, ລກ 8:4-8, ຣມ 11:7-12)

ເມື່ອໄດ້ສຶກສາເຖິງພຣະທັມເຫລົ່ານີ້ຈະພົບວ່າ ບໍ່ແມ່ນທຸກເທື່ອທີ່ຜູ້ຟັງໄດ້ຮັບຟັງຂ່າວປະເສີດ ແລະເຊື່ອຕາມຂ່າວປະເສີດຫມົດທຸກຄົນ ຄໍາອຸປມາຂອງພຣະເຢຊູໄດ້ບອກໄວ້ແກ່ຜູ້ປະກາດວ່າ ບາງຄັ້ງຈະເກີດຜົນໃນຜູ້ຟັງ 100 ເທົ່າ 60 ເທົ່າ 30 ເທົ່າ ຫລືອາດບໍ່ເກີດຜົນເລີຍ ພຣະທັມໂຣມ 10:16, ມັດທາຍ 13:15 ທັງນີ້ເພາະຜູ້ຟັງປະຕິເສດບໍ່ສົນໃຈຮັບເອົາຂ່າວປະເສີດ

## ໓. ສິ່ງທີ່ຂັດຂວາງຂ່າວປະເສີດບໍ່ໃຫ້ໄປເຖິງຜູ້ຟັງ

- ບໍ່ມີຜູ້ເສັຽສລະອອກໄປປ່າວປະກາດ
- ຂ່າວປະເສີດບໍ່ແຈ່ມແຈ້ງ ເຊັ່ນ ບໍ່ເຄີຍເວົ້າເຖິງການໂຜດໃຫ້ພົ້ນທີ່ໄມ້ກາງແຂນ
- ພາສາ ວັທນະທັມທີ່ບໍ່ສອດຄ້ອງກັບຜູ້ຟັງ ຫລືຟັງບໍ່ເຂົ້າໃຈ
- ຜູ້ຟັງສແວງຫາສິ່ງອື່ນ ບໍ່ໄດ້ສແວງຫາຄວາມຮອດພົ້ນ ມີຜູ້ນຶ່ງເທສນາວ່າ ຖ້າຜູ້ຟັງມາຮອດຄຣິສຈັກ ສແວງຫາເຄື່ອງນຸ່ງກໍຈະໄດ້ເຄື່ອງນຸ່ງກັບເມືອເຮືອນ ຖ້າຜູ້ຟັງສແວງຫາພຣະເຈົ້າກໍຈະໄດ້ຮັບຄວາມຮອດພົ້ນເມືອເຮືອນ ນີ້ເປັນຄວາມຈິງອີຫລີ
- ບໍ່ໄດ້ນໍາໃຫ້ຜູ້ຟັງໃຫ້ສາຣະພາບບາບ
- ບໍ່ເຄີຍເຊີນຊວນໃຫ້ຜູ້ຟັງເກີດການຕິດສິນໃຈ ຕ້ອນຮັບພຣະເຢຊູເປັນຜູ້ໂຜດໃຫ້ພົ້ນ

## 4. ຜູ້ທີ່ເຮັດໃຫ້ຂ່າວປະເສີດເກີດຜົນໃນຜູ້ຟັງ

ພຣະວິນຍານບໍຣິສຸດເປັນຜູ້ເຮັດໃຫ້ເກີດຜົນ ຜູ້ປະກາດແມ່ນຜູ້ເຊື່ອທັງຫລາຍ ຊຶ່ງເປັນພຽງຜູ້ຫວ່ານພືດ ແຕ່ສ່ວນຜົນທີ່ຈະເກີດຂຶ້ນນັ້ນ ເຮົາຕ້ອງຝາກມອບໄວ້ກັບພຣະເຈົ້າ ເຮົາທຸກຄົນເປັນທູດ ເປັນຂ້າທາດອັນສັດຊື່ຕໍ່ພຣະເຈົ້າ ເຮັດຕາມຄໍາສັ່ງຂອງພຣະອົງດ້ວຍໃຈຮັກ ແຕ່ສ່ວນຜົນທີ່ຈະເກີດຂຶ້ນນັ້ນ ພຣະອົງຈະເປັນຜູ້ເກັບກ່ຽວເອົາ ໂດຍພຣະວິນຍານຂອງພຣະອົງ ດັ່ງພຣະທັມ ເສຄາຣິຍາ 4:6 "ບໍ່ແມ່ນດ້ວຍກໍາລັງ ບໍ່ແມ່ນດ້ວຍຣິດທານຸພາບ ແຕ່ດ້ວຍວິນຍານຂອງເຮົາ" ພຣະເຈົ້າຈອມໂຍທາຕັດດັ່ງນີ້ແຫລະ ອັນນີ້ເປັນຫລັກແຫ່ງການເຜີຍແຜ່ຂ່າວປະເສີດ ອໍານາດແຫ່ງພຣະວິນຍານບໍຣິສຸດເທົ່ານັ້ນທີ່ຈະເຮັດໃຫ້ຜູ້ຟັງຫັນຫນ້າ ຫນີຈາກບາບ ແລະບັງເກີດໃຫມ່ແທ້ຈິງ

| | |
|---|---|
| ກິຈການ 1:8 | ພຣະເຈົ້າຊົງສັນຍາປະທານຣິດເດດແກ່ຜູ້ປະກາດ |
| ໂຢຮັນ 16:8 | ພຣະວິນຍານທໍາໃຫ້ຜູ້ຟັງເກີດການສໍານຶກບາບ ຮັບເອົາຄວາມຊອບທັມ ຕ້ອນຮັບເອົາພຣະເຢຊູຜູ້ຮັບການພິພາກສາເທິງໄມ້ກາງແຂນ |
| ໂຢຮັນ 14:26 | ພຣະວິນຍານຈະເຮັດໃຫ້ຜູ້ຟັງເຂົ້າໃຈຄໍາສອນຂອງພຣະເຢຊູ |
| ໂຣມ 5:5 | ຄວາມຮັກຂອງພຣະເຈົ້າຊົງຊາບຊຶ້ງໃນຈິດໃຈຂອງຜູ້ຟັງໂດຍຣິດອໍານາດຂອງພຣະວິນຍານ |

# ບົດທີ 2

# ແບບຢ່າງຂອງການປ່າວປະກາດຂ່າວປະເສີດ ແລະການນຳວິນຍານ

ແມ່ນໃຜເປັນແບບຢ່າງທີ່ດີທີ່ສຸດໃນເຣື່ອງການປ່າວປະກາດ ແລະການນຳຈິດວິນຍານຂອງຜູ້ທີ່ຫລົງຫາຍກັບຄືນຫາພຣະເຈົ້າ ນັກສຶກສາຄົງຈະມີຄຳຖາມ ຖາມຕົນເອງວ່າ ຂ້ານ້ອຍຢາກເປັນຜູ້ປະກາດ ຂ້ານ້ອຍຢາກນຳຈິດວິນຍານຂອງຜູ້ທີ່ຫລົງຫາຍມາຖວາຍແດ່ອົງພຣະຜູ້ເປັນເຈົ້າ ແຕ່ຂ້ານ້ອຍບໍ່ຮູ້ຈັກວິທີ ບໍ່ຮູ້ຈັກເຮັດ ບໍ່ໄດ້ເຫັນແບບຢ່າງຈາກຜູ້ໃດ ແລ້ວຂ້ານ້ອຍຈະເຮັດໄດ້ຢ່າງໃດ ຄຳຖາມຫລືຄວາມຮູ້ສຶກແບບນີ້ໄດ້ເກີດຂຶ້ນກັບທຸກຄົນທີ່ເລີ່ມຕົ້ນທີ່ຢາກຈະເປັນຜູ້ປະກາດ ນັກສຶກສາຜູ້ທີ່ສົນໃຈແທ້ຈິງໃນເຣື່ອງການປ່າວປະກາດຂ່າວປະເສີດ ແລະຖືວ່າເຣື່ອງນີ້ເປັນເຣື່ອງສຳຄັນໃນຖານະທີ່ເຮົາເປັນທູດຂອງພຣະຄຣິສແລ້ວ ຈຳເປັນຕ້ອງໝັ່ນພາກັນສຶກສາຄົ້ນຄວ້າ ເບິ່ງຫາແບບຢ່າງທີ່ດີທີ່ຈະນຳເຮົາໄດ້ເຂົ້າໃຈ ແລະຮຽນຮູ້ຈັກໃຫ້ເລິກຊຶ້ງເຖິງລັກສະນະຂອງບຸກຄົນສຳຄັນໃນພຣະຄັມພີ ໃນປະຫວັດສາດຄຣິສຈັກ ຫລືໃນປັດຈຸບັນນີ້ກໍດີກໍມີແບບຢ່າງໃຫ້ເຮົາໄດ້ເບິ່ງ ນອກຈາກນີ້ແລ້ວນັກສຶກສາບາງຄົນອາດຈະໄດ້ຄົ້ນພົບຂອງປະທານພິເສດໃນຕົນເອງຊຶ່ງເປັນພຣະພອນທີ່ພຣະເຈົ້າປະທານໃຫ້ສະເພາະແຕ່ລະຄົນ ຊຶ່ງບາງຄົນອາດຈະມີພຣະພອນໃນເຣື່ອງການປະກາດເປັນພິເສດ ທີ່ຈະນຳເອົາພຣະພອນຫລືຄວາມສາມາດອັນນັ້ນມາຮັບໃຊ້ພຣະເຈົ້າໃຫ້ເກີດຜົລເປັນການຂຍາຍແຜ່ນດິນ ແລະຣາຊອານາຈັກຂອງພຣະເຈົ້າໃຫ້ເຕີບໃຫຍ່ຂຍາຍຕົວອອກໄປ

## I. ພຣະເຢຊູຄຣິສຜູ້ເປັນແບບຢ່າງແກ່ເຮົາ

ພຣະເຢຊູຄຣິສເປັນແບບຢ່າງທີ່ສົມບູນທີ່ສຸດ ໃນເຣື່ອງການນຳວິນຍານຂອງຜູ້ທີ່ຫລົງຫາຍໃຫ້ຖິ້ມໃຈເກົ່າເອົາໃຈໃໝ່ ພຣະອົງເປັນແບບຢ່າງທີ່ດີເລີດ ບໍ່ມີໃຜປຽບໄດ້ ພຣະອົງສະເດັດມາເພື່ອສະແຫວງຫາ ແລະຊ່ວຍຜູ້ທີ່ຫລົງທາງໃຫ້ໄດ້ຮັບຄວາມຣອດພົ້ນ

ພຣະທັມລູກາ 19:10 "ດ້ວຍວ່າບຸດມະນຸດໄດ້ມາເພື່ອຈະຊອກຫາ ແລະໂຜດເອົາຜູ້ທີ່ຫລົງເສັຽໄປແລ້ວນັ້ນໃຫ້ລອດພົ້ນ" ພຣະເຢຊູໄດ້ຊົງເປັນແບບຢ່າງທີ່ດີໃນການຮຽກຮ້ອງໃຫ້ຜູ້ອື່ນອອກໄປເປັນຜູ້ປະກາດນຳວິນຍານຂອງຜູ້ທີ່ຫລົງເສັຽໄປ

ມັດທາຍ 4:19 "ຈົ່ງຕາມເຮົາມາ ແລະເຮົາຈະບັນດານໃຫ້ພວກເຈົ້າເປັນຜູ້ຫາຄົນ"

ເອເຟໂຊ 5:2 "ຈົ່ງດຳເນີນຊີວິດນັ້ນໃນຄວາມຮັກ ເໝືອນດັ່ງພຣະຄຣິສໄດ້ຊົງຮັກທ່ານທັງຫລາຍ ແລະຊົງສະລະພຣະອົງເອງເພື່ອພວກເຮົາ ໃຫ້ເປັນເຄື່ອງບູຊາ ແລະເຄື່ອງຖວາຍທີ່ມີກິ່ນຫອມຫວານແກ່ພຣະເຈົ້າ

ການຮຽນແບບພຣະເຢຊູນີ້ ເປັນສິ່ງທີ່ຜູ້ນຳທຸກຍຸກທຸກສມັຍໄດ້ຮຽນຮູ້ ແລະມີປະສົບການໂດຍການເຫັນຜູ້ອື່ນໃຊ້ຊີວິດຕາມແບບພຣະເຢຊູ ຫລືບາງເທື່ອຕົວເຮົາເອງອາດຈະມີປະສົບການທີ່ຄົນອື່ນໄດ້ເບິ່ງເຫັນພຣະເຢຊູໃນຕົວເຮົາເອງ ຂ້າພະເຈົ້າຈຳໄດ້ວ່າ ເມື່ອຍັງໜຸ່ມສາວ ຂ້າພະເຈົ້າມັກອາສາສະມັກ

ອອກໄປສອນພຣະຄັມພີແກ່ເດັກນ້ອຍທີ່ຢູ່ໃນຍ່ານຊູມຊົນແອອັດ ຍາກແຄ້ນໃນກຸງເທພ ເວລາຂ້າພະເຈົ້າເດີນຜ່ານແຄມທາງແຄບ ໆ ທີ່ເຕັມໄປດ້ວຍຮ່ອງນ້ຳທີ່ເໝັນເນົ່ານັ້ນ ຂ້າພະເຈົ້າໄດ້ຍິນສຽງຂອງເດັກນ້ອຍທັງຊາຍ ແລະຍິງຮ້ອງຫາກັນວ່າ "**ພຣະເຢຊູມາແລ້ວ**" ເຮັດໃຫ້ຂ້າພະເຈົ້າດີໃຈຫລາຍວ່າ ເດັກນ້ອຍເຫລົ່ານັ້ນຮູ້ຈັກຂ້າພະເຈົ້າໃນຖານະຕົວແທນຂອງພຣະເຢຊູ ດັ່ງນັ້ນໃຫ້ເຮົາມາຮຽນແບບຢ່າງຂອງພຣະເຢຊູດັ່ງນີ້

**1. ຊີວິດຂອງພຣະເຢຊູຊົງເປັນພະຍານເຖິງຕົວຂອງພຣະອົງເອງ**

1.1 ກ່ອນທີ່ພຣະເຢຊູຈະບັງເກີດມາ ໄດ້ມີຜູ້ເຜີຍພຣະຄຳກ່າວຄຳທຳນວຍໄວ້ລ່ວງໜ້າວ່າພຣະອົງຈະເປັນຜູ້ນຳວິນຍານທີ່ຫລົງຫາຍກັບຄືນຫາພຣະເຈົ້າ (ເອຊາຢາ 59:20, 62:11, ຊາຄາຣີອາ 9:9, 13:1, ມັດທາຍ 1:21

1.2 ໃນຍາມທີ່ພຣະເຢຊູເກີດ ໄດ້ມີຄົນຫລາຍໝູ່ເປັນພະຍານເຖິງພຣະເຢຊູວ່າເປັນພຣະມາຊີອາ ຕົວຢ່າງ

- ນາງ ມາຣີອາ ກັບນາງອີລີຊາເບັດ
- ທູດສວັນ ກັບຄົນລ້ຽງແກະ
- ອັນນາ ກັບຊີເມໂອນ
- ນັກໂຫຣາຈານ (Wiseman) ທີ່ມາຈາກພາກຕາວັນອອກ
- ໂຢຮັນ ບັບຕິສໂຕ ຜູ້ໃຫ້ບັບຕິສມາ

1.3 ມານຜູ້ຕໍ່ຕ້ານພຣະເຢຊູ ໃນເວລາທີ່ພຣະອົງປະກາດ

1.4 ການບັບຕິສມາ ຂອງພຣະອົງຢ່າງເປີດເຜີຍ ແລະເກີດການອັສຈັນ

1.5 ພຣະເຢຊູນຳເຫລົ່າສາວົກມາເຊື່ອ ແລະຕັ້ງໃຫ້ສາວົກເຫລົ່ານັ້ນອອກໄປເປັນພະຍານ

1.6 ພຣະອົງເປັນພະຍານໂດຍສ່ວນຕົວເຣື່ອງຄວາມຣອດພົ້ນກັບ

- ຟີລິບ
- ນີໂກເດໂມ
- ຊັກຄາຍ
- ບາຣະທີມາຍ
- ແມ່ຍິງຊາວສະມາເລັຽ
- ຟາຣີຊາຍ
- ພວກອາລັກ
- ພວກປະໂຣຫິດ
- ຄົນເກັບພາສີ
- ເດັກນ້ອຍ ແລະຊາວໜຸ່ມ

1.7 ພຣະອົງຊົງເທສນາ ແລະເຮັດການອັສຈັນ ໃນທີ່ກາງແຈ້ງເປັນພະຍານເຖິງພຣະບິດາ ແລະຣິດເດດອຳນາດ ຂອງພຣະເຈົ້າ.

1.8 ພຣະເຢຊູຊົງເປັນພະຍານດ້ວຍຊີວິດຂອງພຣະອົງຕັ້ງແຕ່ເກີດ ກະທັ້ງຕາຍເທິງໄມ້ກາງແຂນ ແລະເປັນຂຶ້ນຈາກຕາຍ ປາກົດເປັນພະຍານຕໍ່ໜ້າມະນຸດ

2. ພຣະເຢຊູເປັນພະຍານໂດຍການດຳເນີນຊີວິດທີ່ເປັນແບບຢ່າງ

2.1 ຄວາມເຊື່ອຂອງພຣະອົງເປັນພະຍານແກ່ຄົນທັງຫລາຍ

2.2 ພຣະອົງໃຊ້ຊີວິດທີ່ບໍລິສຸດ ບໍ່ຍອມເຮັດບາບ ມີໄຊຊະຫນືອການທົດລອງຂອງມານຮ້າຍ

2.3 ມີຄວາມຮູ້ຄວາມເຂົ້າໃຈໃນພຣະເຈົ້າຢ່າງແຈ່ມແຈ້ງ.

2.4 ພຣະອົງຊົງຖວາຍຕົວຢ່າງຫມົດສິ້ນ ແລະຍອມເຊື່ອຟັງພຣະເຈົ້າຈົນສິ້ນສຸດ

2.3 ພຣະອົງເຂົ້າໃຈມະນຸດ ມີຄວາມເມດຕາສົງສານຜູ້ເຈັບປ່ວຍ

2.4 ພຣະອົງແສດງ ແລະຊົງມີຄວາມເມດຕາ ມີຄວາມຫວັງໃຫ້ທຸກຄົນໄດ້ຕັ້ງຕົ້ນຊີວິດໃຫມ່

2.5 ພຣະອົງບໍ່ເຫັນແກ່ຕົວ ບໍ່ເຫັນແກ່ຄວາມສຸກສະບາຍສ່ວນຕົວ

2.6 ພຣະອົງຊົງເປັນຫ່ວງ ແລະເສົ້າໃຈເພື່ອຄົນບາບ

2.7 ພຣະອົງອ້ອນວອນເພື່ອຄົນບາບ

2.8 ພຣະອົງຊົງປຮູ້ມຢາມ ກ່າວຄຳພະຍານບໍ່ຂາດເພື່ອນຳຄົນມາເຖິງພຣະເຈົ້າ

2.9 ພຣະອົງໃຊ້ຄວາມສາມາດ ຣິດທານຸພາບແຫ່ງພຣະວິນຍານເພື່ອຊ່ວຍເຫລືອຜູ້ອື່ນ

2.10 ພຣະອົງຊົງຍອມເສັຽສະລະທຸກສິ່ງຢ່າງຫມົດສິ້ນຈົນຕາຍເທິງໄມ້ກາງແຂນເພື່ອເປັນຄ່າໄຖ່ແກ່ມວນມະນຸດ.

3. ພຣະເຢຊູເປັນພະຍານຢ່າງເປັນຫລັກການ

3.1 ພຣະເຢຊູໃຊ້ວິທີທັງທາງຕົງ ແລະທາງອອ້ມ ເພື່ອຊ່ວຍໃຫ້ຜູ້ຟັງໄດ້ເຫັນຄວາມຈິງ

3.2 ພຣະເຢຊູຊົງສົງສານ ແລະຍົກໂທດຜູ້ທີ່ຍອມສາຣະພາບຜິດໂດຽບໍ່ຊ້ຳເຕີມ

3.3 ພຣະອົງບໍ່ໄດ້ປະນາມບາບຂອງຜູ້ໃດ ບໍ່ໄດ້ເຮັດໃຫ້ຜູ້ຟັງຮູ້ສຶກລະອາຍ ແຕ່ນຳເຂົາໃຫ້ສາຣະພາບບາບ

3.4 ພຣະອົງນຳຜູ້ຟັງໃຫ້ເຂົ້າໃຈເຖິງເຣື່ອງຄວາມພົ້ນໂດຽບໍ່ອອກນອກລູ່ທາງ

3.5 ພຣະອົງຊົງໃຊ້ສະພາບຊີວິດຈິງຂອງຜູ້ຟັງ ແລະສິ່ງທີ່ຢູ່ລ້ອມຮອບຕົວເພື່ອສົມທຽບໃຫ້ຜູ້ຟັງໄດ້ເຂົ້າໃຈ

3.6 ພຣະອົງບອກຜູ້ຟັງເຖິງໂທດແຫ່ງການຜິດບາບ ແລະຄວາມຈຳເປັນທີ່ທຸກຄົນຕ້ອງບັງເກີດໃຫມ່ ເພື່ອຈະໄດ້ເຂົ້າໃນແຜ່ນດິນພຣະເຈົ້າ

3.7 ພຣະອົງຊົງຮັບບັບຕິສມາ ເພື່ອເປັນແບບຢ່າງແກ່ຜູ້ເຊື່ອໃຫ້ໄດ້ຮັບບັບຕິສມາ

3.8 ພຣະອົງເປັນພະຍານໂດຽພຣະຄຳຂອງພຣະເຈົ້າ ແລະໃຊ້ຄຳອຸປະມາເພື່ອໃຫ້ເກີດຄວາມເຂົ້າໃຈ

3.9 ພຣະເຢຊູຊົງປະກາດດ້ວຍຄວາມຈິງໃຈໂດຍການຖວາຍຊີວິດຂອງພຣະອົງບໍ່ເຫັນແກ່ສິ່ງອັນໃດເປັນການຕອບແທນ.

II. ທ່ານໂຢຮັນ ບັບຕິສໂຕ

ຜູ້ປະກາດທີ່ເປັນແບບຢ່າງແກ່ເຮົາຕັ້ງແຕ່ອາດີຕກາລຈົນເຖິງປັດຈຸບັນແມ່ນທ່ານໂຢຮັນ ບັບຕິສໂຕ ຜູ້ບຸກເບີກທາງນຳຫນ້າພຣະເຢຊູ ທ່ານເປັນນັກປ່າວປະກາດປຽບຄືກັບໂຄມໄຟທີ່ສ່ອງແຈ້ງໃຫ້ ຜູ້ຄົນໄດ້ເຫັນ ທາງນັ້ນ ຄວາມຈິງ ແລະຊີວິດທີ່ມີຢູ່ໃນພຣະເຢຊູຄຣິສ ໂຢຮັນ ບັບຕິສໂຕບໍ່ເຄີຍອ້າງຕົວເອງວ່າ

ເໜືອພຣະເຢຊູຄຣິສ ບໍ່ອວດອ້າງຄວາມສຳຄັນຂອງຕົນທີ່ມາປູທາງເພື່ອນຳຜູ້ຄົນໄດ້ເຫັນພຣະເຢຊູຄຣິສ ທ່ານໃຊ້ຊີວິດງ່າຍ ໆ ແລະຖ່ອມຕົວຢູ່ເທິງພູເຂົາຄືກັບລີສີຜູ້ຖືສິລແລະສັຈທັມຂອງພຣະເຈົ້າ ອາຫານຂອງເພິ່ນຄືຕັກແຕນແລະນໍ້າເຜີ້ງປ່າ

ທ່ານໂຢຮັນ ປ່າວປະກາດພຣະຄຳຂອງພຣະເຈົ້າ ໃຫ້ຄົນຖິ້ມໃຈເກົ່າເອົາໃຈໃໝ່ ດັ່ງສຽງຄຳຣາມຈາກຟ້າ ທ່ານມີສິດອຳນາດຈາກສວັນກ້າກ່າວຄຳປະນາມຕໍ່ຜູ້ນຳອິສຣາເອລທີ່ປະພຶດຊີວິດຜິດສິລທັມ ທ່ານມີຄວາມກ້າຫານບໍ່ຢ້ານແມ້ແຕ່ຜູ້ໃດ ຈະເປັນພວກຟາຣີຊາຍ ພວກອາລັກ ພວກຊາດູກາຍ ພວກທະຫານ ກະທັ້ງເຈົ້າຊີວິດເຮໂຣດ ຄົນພວກນີ້ໄດ້ຍິນຄຳປ່າວປະກາດຂອງທ່ານໂຢຮັນ ທ່ານກ່າວເຖິງການລົງໂທດຂອງພຣະເຈົ້າ ທີ່ຈະມາສຳລັບຄົນໜ້າຊື່ໃຈຄົດ ທີ່ອ້າງວ່າມີພຣະເຈົ້າພຽງແຕ່ປາກແຕ່ຈິດໃຈບໍ່ໄດ້ມີຫຍັງດີບໍ່ມີການຖິ້ມໃຈເກົ່າເອົາໃຈໃໝ່ ບໍ່ໄດ້ປ່ຽນແປງຊີວິດຂອງຕົນ ທ່ານໂຢຮັນ ບັບຕິສໂຕ ໄດ້ໃຊ້ເທິງພູເຂົາປູດາຍເປັນທັມມາສ ປະກາດເຜີຍແຜ່ພຣະຄຳຂອງພຣະເຈົ້າ ໃຫ້ພວກຊາວໄຮ່ ຊາວນາ ຊາວພູເຂົາ ຄົນເກັບພາສີ ຄົນບາບ ແລະຄົນທຸກຊັ້ນທຸກລະດັບຟັງ ໂດຽບໍ່ຢ້ານກົວວ່າຕ້ອງພົບກັບອັນຕະລາຍຈົນເຖິງຊີວິດ ຊຶ່ງເປັນແບບຢ່າງ (Model) ສຳລັບຄົນໃນຍຸກນັ້ນ ໃນຍຸກນີ້ ແລະອານາຄົດ ອ່ານໃນພຣະທັມມັດທາຍ 3:1-7, ມາຣະໂກ 1:1-8, ລູກາ 3:1-9, 15, ໂຢຮັນ 1:19-28

1. ຄຳປະກາດຄຳເທສນາຂອງທ່ານໂຢຮັນບັບຕິສໂຕມີຈຸດສູນກາງຢູ່ທີ່
   1.1 ຈົ່ງກັບໃຈໃໝ່ໃຫ້ປະຖິ້ມຊີວິດແນວເກົ່າ ແລະຫັນຫາພຣະເຈົ້າເພື່ອພົບຊີວິດໃໝ່
   1.2 ຈົ່ງສາຣະພາບບາບ ເພື່ອຮັບການຍົກໂທດໂຜດໃຫ້ພົ້ນຈາກພຣະເຈົ້າ
   1.3 ຈົ່ງຮັບບັບຕິສມາ ເພື່ອເປັນພະຍານປະກາດຕົວຕໍ່ໜ້າມະນຸດແລະຕໍ່ໜ້າພຣະເຈົ້າເຖິງການສາຣະພາບບາບ ແລະການກັບໃຈໃໝ່

2. ຊີວິດຂອງທ່ານໂຢຮັນບັບ ຕິສໂຕ
   2.1 ເຕັມລົ້ນດ້ວຍພຣະວິນຍານບໍຣິສຸດ ມີຄວາມກ້າຫານໃນຝ່າຍວິນຍານ ທ່ານຖວາຍຊີວິດເພື່ອຮັບໃຊ້ພຣະເຈົ້າຈົນໝົດສິ້ນ ຍອມໃຫ້ພຣະວິນຍານນຳພາ ປະກາດເຣື່ອງແຜ່ນດິນສວັນ ການປະຖິ້ມໃຈເກົ່າເອົາໃຈໃໝ່ ສາຣະພາບບາບເພື່ອຮັບການໂຜດໃຫ້ພົ້ນຈາກພຣະເຈົ້າ ຈົນກະທັ້ງປະຊາຊົນທົ່ວແຂວງປູດາຍທຸກຄົນຮູ້ຈັກ ແລະໄດ້ຍິນຄຳປະກາດຈາກທ່ານໂຢຮັນບັບຕິສໂຕ
   2.2 ມີຊີວິດທີ່ຖ່ອມໃຈ ແມ່ນວ່າທ່ານປະກາດດ້ວຍສິດອຳນາດຂອງພຣະເຈົ້າ ແຕ່ທ່ານຖ່ອມໃຈເພື່ອຍົກພຣະເຢຊູຄຣິສໃຫ້ສູງເດັ່ນ
   2.3 ມີຊີວິດການເປັນຢູ່ງ່າຍ ໆ ທັ້ງການແຕ່ງກາຍ ການກິນຢູ່ ມີຄວາມຄິດ ມີກິຣິຍາວາຈາທີ່ຕົງໄປຕົງມາແຈ່ມແຈ້ງໃນຄຳປະກາດ ມີຄວາມຈິງໃຈຕໍ່ມະນຸດ ແລະຕໍ່ພຣະເຈົ້າ

3. ທ່ານໂຢຮັນປະກາດດ້ວຍຄວາມເຊື່ອ
   3.1 ທ່ານເຊື່ອວ່າ ໂທດຂອງບາບຄູ່ກັບໄຟນາຣົກ ພຣະເຈົ້າຈະທຳລາຍບາບ
   3.2 ທ່ານເຊື່ອວ່າ ຈຳເປັນຕ້ອງສາຣະພາບບາບຖິ້ມໃຈເກົ່າເອົາໃຈໃໝ່ເພື່ອຊຳຣະລ້າງຈິດວິນຍານ ຈິດໃຈ ແລະເກີດການປ່ຽນແປງຊີວິດໃໝ່
   3.3 ທ່ານເຊື່ອວ່າ ພຣະເຢຊູຄຣິສແມ່ນພຣະເມຊີອາຜູ້ໂຜດໃຫ້ໂລກໄດ້ພົ້ນ
   3.4 ທ່ານເຊື່ອວ່າ ພຣະເຢຊູຄຣິສແມ່ນແກະນ້ອຍຂອງພຣະເຈົ້າ ເພື່ອໄຖ່ບາບມະນຸດ ທ່ານໂຢ

ຮັບບັບຕິສະໂຕຮ້ອງພຣະເຢຊູວ່າ "ເບິ່ງແມ ພຣະເມສານ້ອຍ(ລູກແກະ)ຂອງພຣະເຈົ້າ ຜູ້ຊົງຮັບເອົາຄວາມຜິດບາບຂອງມະນຸສໂລກໄປເສັຽ" ໂຢຮັນ 1:29

3.5 ທ່ານເຊື່ອວ່າການບັບຕິສມາຕໍ່ໜ້າມະນຸດເປັນການແສດງເຖິງຄໍາພະຍານຂອງຜູ້ນັ້ນໃນການກັບໃຈໃໝ່ ແລະມີຊີວິດໃໝ່ໃນພຣະເຈົ້າ

## 4. ປັດຈັຍທີ່ເຮັດໃຫ້ທ່ານໂຢຮັນ ເປັນຜູ້ປະກາດທີ່ຍິ່ງໃຫຍ່

4.1 ທ່ານປະກາດຕາມການຊົງນໍາຂອງພຣະວິນຍານ
4.2 ທ່ານຕັດຂາດຈາກບາບ ແລະຫຍັບເຂົ້າໃກ້ພຣະເຈົ້າ
4.3 ທ່ານກ້າຫານ ແລະຖ່ອມໃຈ
4.4 ທ່ານເຊື່ອໝັ້ນໃນຄວາມຈິງ ແລະຄໍາໝັ້ນສັນຍາຂອງພຣະເຈົ້າ
4.5 ທ່ານຖວາຍຕົວ ແລະຮັບໃຊ້ພຣະເຈົ້າດ້ວຍຊີວິດ
4.6 ທ່ານຮ້ອນໃຈທີ່ເຫັນມະນຸດຫລົງຫາຍໃນຄວາມຜິດບາບ
4.7 ທ່ານຕ້ອງປະກາດຄວາມຈິງເພື່ອຜູ້ຫລົງຫາຍຈະໄດ້ສາຣະພາບບາບກັບໃຈໃໝ່
4.8 ທ່ານຮູ້ຈັກພຣະຄໍາຂອງພຣະເຈົ້າ ແລະໃຊ້ໃນການປະກາດຢ່າງຖືກຕ້ອງ
4.9 ທ່ານບໍ່ຫລົງຕົວເອງ ບໍ່ຫລົງກຽດ ຫລືຍຶດສັກ ອໍານາດ ຄວາມເປັນໃຫຍ່
4.10 ທ່ານເຕັມລົ້ນໄປດ້ວຍພຣະວິນຍານບໍຣິສຸດ

## 5. ຊີວິດຂອງທ່ານໂຢຮັນ ບັບຕິສະໂຕເປັນພະຍານເຖິງພຣະເຢຊູ

ທ່ານໂຢຮັນບັບຕິສະໂຕ ເປັນຜູ້ນໍາວິນຍານທີ່ເຕັມລົ້ນໄປດ້ວຍພຣະວິນຍານບໍຣິສຸດຂອງພຣະເຈົ້າ ທ່ານໄດ້ຖວາຍຊີວິດຂອງທ່ານເພື່ອການຮັບໃຊ້ຈົນໝົດຕົວບໍ່ມີຫຍັງເຫລືອໄວ້ສໍາລັບຕົນເອງ ທ່ານມີຊີວິດການເປັນຢູ່ທີ່ງ່າຍ ທັ້ງໃນການແຕ່ງຕົວ ການກິນການຢູ່ ທ່ານມີກິຣິຍາວາຈາສະລາດລັກແຫລມ ຄວາມຄິດ ແລະຄໍາເວົ້າທີ່ງ່າຍ ໆ ຕົງໄປຕົງມາ ແລະແຈ່ມແຈ້ງ ປະກາດເຣື້ອງການຮັບບັບຕິສມາຖິ້ມໃຈເກົ່າເອົາໃຈໃໝ່ ເພື່ອເຂົ້າໃນແຜ່ນດິນສວັນຂອງພຣະເຈົ້າ ທ່ານມີລັກສະນະນິສັຍທີ່ບໍ່ຢ້ານ ປະກາດດ້ວຍສິດອໍານາດທີ່ປະຊາຊົນທົ່ວແຂວງຢູດາຍຮູ້ຈັກ ແລະໄດ້ຍິນຄໍາປະກາດຈາກທ່ານ ແຕ່ທ່ານກໍ່ມີຄວາມຖ່ອມໃຈເພື່ອຍົກພຣະເຢຊູຄຣິສໃຫ້ສູງເດັ່ນຂຶ້ນ ເພື່ອໃຫ້ຄົນທັງຫລາຍໄດ້ເຫັນ

ຊີວິດຂອງທ່ານໂຢຮັນໄດ້ເປັນແບບຢ່າງແກ່ເຮົາທັງຫລາຍ ຊຶ່ງເປັນບົດຮຽນແກ່ເຮົາໄດ້ວ່າ ຊີວິດນັ້ນບໍ່ແມ່ນແຕ່ ການກິນ ການດື່ມ ການແຕ່ງກາຍ ການມີກຽດ ແລະການຊື່ສຽງ ຫລືປ່ອຍໃຫ້ວັນເວລາເສັຽໄປຢ່າງບໍ່ມີປໂຍດ ແຕ່ຊີວິດແມ່ນການເຮັດຕາມນໍ້າພຣະທັຍ ແລະພຣະປະສົງຂອງພຣະເຈົ້າ ມີຊີວິດຢູ່ເພື່ອພຣະເຈົ້າ ແລະໂດຍອາສັຍຣິດທານຸພາບຂອງພຣະເຈົ້າຊ່ວຍເຫລືອເຮົາໃນການປ່ຽນແປງຊີວິດໃໝ່ ແລະສາມາດເຂົ້າສ່ວນໃນການຮັບໃຊ້ພຣະອົງ ໃນການປະກາດຂ່າວປະເສີດແຫ່ງການໂຜດໃຫ້ພົ້ນຂອງອົງພຣະຜູ້ເປັນເຈົ້າ ອາເມນ

## III. ທ່ານຊີໂມນເປໂຕ

ທ່ານຊີໂມນເປໂຕ ອັຄສາວົກຜູ້ໃກ້ຊິດພຣະເຢຊູ ຜູ້ມີລັກສະນະນິສັຍຕົງໄປຕົງມາ ແຕ່ເປັນຄົນອ່ອນ

ໄຫວບໍ່ມີຄວາມໝັ້ນໃຈ ທ່ານຊີໂມນເປໂຕເປັນຄົນປາກໄວ ແລະເຮັດໄວ ເຣື້ອງລາວຂອງທ່ານຈາຣຶກໄວ້ໃນພຣະທັມຂ່າວປະເສີດຫລາຍກວ່າອັຄສາວົກຄົນອື່ນ ໆ ທ່ານເປໂຕ ມີບຸຄລິກພາບນິສັຍໃຈຄໍທີ່ຊັບຊ້ອນປະສົມກັນຫລາຍແບບຢູ່ໃນຕົວຂອງທ່ານ ທ່ານມີຄວາມເຂັ້ມແຂງ ແຕ່ກໍ່ເປັນຄົນທີ່ອ່ອນແອທີ່ສຸດເຖິງຂັ້ນຍັງປະຕິເສດພຣະເຢຊູຄຣິສ ທ່ານເວົ້າຈາຜິດພາດໂດຽບໍ່ໄດ້ຄິດ ແຕ່ສາມາດມີຄໍາຕອບທີ່ຖືກຕ້ອງທີ່ສຸດ ດັ່ງຄໍາຕອບມາຈາກສວັນ ທ່ານເປັນຄົນຕົງໄປຕົງມາບໍ່ເປັນຄົນໜ້າຊື່ໃຈຄົດ ທ່ານກ້າເປັນພະຍານເພື່ອພຣະເຢຊູຄຣິສ ແລະກ້າສາຣະພາບຜິດເມື່ອຮູ້ຕົວວ່າຕົນເຮັດຜິດ ທ່ານຮູ້ວ່າທ່ານອ່ອນແອ ແຕ່ທ່ານກໍກັບໃຈໃໝ່ແລະຕັ້ງຕົ້ນຊີວິດໃໝ່ ຖວາຍຕົວເປັນຜູ້ຮັບໃຊ້ທີ່ຊື່ສັດ ຊີວິດຂອງທ່ານເປໂຕຄ້າຍຄືກັບສາມັນຊົນຄົນທົ່ວໄປຢ່າງພວກເຮົາທັງຫລາຍ ມີຜິດ ມີຖືກ ມີຄວາມກ້າຫານແຕ່ກໍມີຄວາມອ່ອນແອ ເຖິງຢ່າງໃດກໍຕາມ ທ່ານຊີໂມນເປໂຕ ເປັນອັຄສາວົກຮູ້ນທໍາອິດທີ່ກິນຢູ່ຮ່ວມສຸກຮ່ວມທຸກ ເດີນທາງໄປກັບພຣະເຢຊູຕັ້ງແຕ່ຕົ້ນຈົນເຖິງຍາມສຸດທ້າຍ ທ່ານເປໂຕມີຄວາມຮັກຕໍ່ພຣະເຢຊູຫລາຍທີ່ສຸດ ທ່ານຊີໂມນເປໂຕໄດ້ຟັງຄໍາເທສນາຄໍາອຸປະມາ ແລະເຫັນການອັສຈັນທັງໝົດຈາກພຣະເຢຊູ ທ່ານໄດ້ເຫັນລາຊະໂຣ ເປັນຂຶ້ນຈາກຕາຍທ່ານໄດ້ເຫັນພຣະເຢຊູຊົງແປງກາຍຢູ່ເທິງພູ ທ່ານຢູ່ໃນສວນເຄັດເຊມາເນ ແລະຕິດຕາມພຣະອົງໄປຈົນເຖິງການສິ້ນພຣະຊົນຂອງພຣະເຢຊູເທິງໄມ້ກາງແຂນ ທ່ານເປັນອັຄສາວົກທີ່ແລ່ນໄປເຖິງອຸໂມງຝັງສົບເມື່ອພຣະເຢຊູເປັນຂຶ້ນຈາກຕາຍ ທ່ານໄດ້ຢູ່ກັບພຣະເຢຊູທຸກບ່ອນ ທີ່ພຣະອົງປາກົດພຣະກາຍ ຫລັງຈາກເປັນຂຶ້ນຈາກຕາຍ ແລະສິ່ງທີ່ສໍາຄັນທີ່ສຸດ ທ່ານໄດ້ຟັງ ໂອວາດຄໍາສັ່ງສຸດທ້າຍ ໃຫ້ອອກໄປປະກາດເປັນພະຍານແກ່ມະນຸດທັງຫລາຍທົ່ວໃຕ້ຟ້າ ທ່ານໄດ້ຖືຄໍາສັ່ງນີ້ດັ່ງຊີວິດຈິດໃຈ ແລະລົງມືປະຕິບັດທັນທີທ່ານປະກາດຂ່າວປະເສີດຕໍ່ໜ້າປະຊາຊົນຫລາຍພັນຄົນ ທີ່ມາຈາກຫລາຍເມືອງ ແລະເວົ້າພາສາຕ່າງ ໆກັນ ຄໍາເທສນາບົດທໍາອິດຂອງທ່ານໄດ້ຮວບຮວມຄວາມຈິງທັງໝົດຢ່າງສົມບູນ ໄດ້ນໍາເອົາຄົນກວ່າສາມພັນຄົນກັບໃຈໃໝ່ໃນວັນດຽວ (ກິຈການ 2:41) ທ່ານເປໂຕປະກາດແກ່ເຂົາວ່າ "ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລະຮັບບັບຕິສມາໃນພຣະນາມຂອງພຣະເຢຊູຄຣິສທຸກຄົນ ເພື່ອການຊົງຍົກບາບໂທດຂອງພວກທ່ານແລ້ວພວກທ່ານຈະໄດ້ຮັບຂອງພຣະຣາຊທານ ຄືພຣະວິນຍານບໍຣິສຸດ" (ກິຈການ 2:38) ຄໍາປະກາດເທສນາຂອງທ່ານຖືກຈາລຶກໄວ້ໃນພຣະຄັມພີຢ່າງຄົບຖ້ວນ ແລະເປັນແບບຢ່າງທີ່ສົມບູນແບບ ທີ່ຄວບຄູມເຣື້ອງຣາວຂ່າວປະເສີດໄວ້ຢ່າງແຈ່ມແຈ້ງທີ່ສຸດ

**ຊີວິດຂອງທ່ານເປໂຕເປັນແບບຢ່າງແກ່ເຮົາ**

ຊີວິດຂອງທ່ານເປໂຕໄດ້ເດີນຕາມເສັ້ນທາງຂອງພຣະເຈົ້າ ແລະໄດ້ເປັນແບບຢ່າງແກ່ເຮົາທັງຫລາຍຈົນເຖິງທຸກວັນນີ້ ທ່ານເປັນແບບຢ່າງແກ່ເຮົາໃນດ້ານຄວາມເຂັ້ມແຂງ ແລະຄວາມອ່ອນແອ ໃນດ້ານຄວາມກ້າຫານ ແລະຄວາມຢ້ານກົວ ທ່ານເປັນແບບຢ່າງແກ່ເຮົາທັງຫລາຍໃນຖານະເປັນມະນຸດຄົນທໍາມະດາສາມັນ ທີ່ພົບທັງໄຊຊະນະ ແລະການພ່າຍແພ້ ທ່ານໄດ້ເປັນແບບຢ່າງໃນເຣື້ອງການປ່າວປະກາດ ແລະເປັນພະຍານເພື່ອພຣະເຢຊູຄຣິສ ທ່ານໄດ້ນໍາເອົາໝາກຜົລຝ່າຍວິນຍານມາຖວາຍອົງພຣະຜູ້ເປັນເຈົ້າ ສິ່ງສໍາຄັນທີ່ສຸດໃນຊີວິດຂອງທ່ານເປໂຕຄື ທ່ານເປັນຄົນຈິງໃຈບໍ່ໄດ້ແສແສ້ງແກ້ງເຮັດ ທ່ານບໍ່ມີຄວາມຄິດຊົ່ວທີ່ແອບແຝງໄວ້ໃນຈິດໃຈ ດ້ວຍເຫດນີ້ທ່ານເປໂຕຈຶ່ງມີຣິດເດດຂອງພຣະເຈົ້າ ແລະສາມາດເປັນພະຍານເພື່ອພຣະເຢຊູໄດ້ຢ່າງເຕັມຕົວ ທ່ານປະຖິ້ມຄວາມຮູ້ສຶກຢ້ານກົວ ຄວາມອ່ອນແອກາຍມາເປັນຄວາມເຂັ້ມແຂງກ້າພະເຊີນກັບຄວາມຕາຍ ຍ້ອນເພາະຄວາມແນ່ນອນໃຈ ແລະປະສົບການໃນຊີວິດຂອງທ່ານ ທ່ານໄດ້ພົບໄດ້ເຫັນທຸກສິ່ງເຖິງການອັສຈັນ ແລະຣິດເດດຂອງພຣະເຈົ້າ ເຖິງວ່າຄວາມຕາຍກໍບໍ່ສາມາດບັງຄັບປິດປາກຂອງທ່ານໄດ້ ທ່ານເປໂຕໄດ້ເປັນແບບຢ່າງແກ່ພວກເຮົາທັງຫລາຍ ໃນເຣື້ອງການ

ເປັນພະຍານເຖິງພຣະເຢຊູຄຣິສດັ່ງນີ້

1. ທ່ານເຊື່ອຟັງພຣະເຈົ້າຫລາຍກວ່າເຊື່ອຟັງມະນຸດ
2. ເມື່ອທ່ານຮູ້ຕົວວ່າເຮັດຜິດ ທ່ານຮີບກັບໃຈໃຫມ່
3. ທ່ານອອກສະແຫວງຫາຄົນບາບ ດັ່ງກັບທ່ານອອກຫາປາ
4. ທ່ານເທສນາຄວາມຈິງຂອງພຣະເຈົ້າຈົນສິ້ນສຸດໂດຍບໍ່ໄດ້ປິດບັງໄວ້ (ກິຈການ2:14-40)
5. ທ່ານຍອມທົນທຸກລຳບາກເພື່ອເຫັນແກ່ຂ່າວປະເສີດ ທ່ານຖືກຕິດຄຸກບໍ່ຢ້ານຕາຍ
6. ທ່ານເຕັມລົ້ນດ້ວຍພຣະວິນຍານຂອງພຣະເຈົ້າ ແລະໄດ້ເຫັນຣິດເດດຂອງພຣະເຈົ້າ
7. ທ່ານໄດ້ອອກໄປຮັບໃຊ້ທັນທີໂດຍບໍ່ລໍຊັກຊ້າ
8. ທ່ານເປັນຜູ້ນຳແຕ່ຮູ້ຈັກຖ່ອມໃຈຟັງຜູ້ອື່ນທີ່ຫນຸ່ມນ້ອຍກວ່າ ຫລືຜູ້ທີ່ມານຳຫລັງ
9. ທ່ານຍອມຮັບຟັງຄວາມຄິດເຫັນຂອງຜູ້ອື່ນ ແລະຮັບໄວ້ພິຈາຣະນາໄຕ່ຕອງ
10. ທ່ານໄດ້ຖວາຍຕົວຮັບໃຊ້ພຣະເຈົ້າຈົນຫມົດສິ້ນ

## IV. ທ່ານໂປໂລຜູ້ປະກາດທີ່ສຳຄັນຄົນນຶ່ງ

ທ່ານໂປໂລກ່າວໄວ້ໃນພຣະທັມກິຈການ 20:24, 26-28 "ແຕ່ເຮົາບໍ່ໄດ້ຖືວ່າຊີວິດຂອງເຮົາເປັນຂອງມີຄ່າແກ່ເຮົາຢ່າງໃດ ເພື່ອເຮົາຈະເຮັດຫນ້າທີ່ຂອງເຮົາ ແລະຈະໄດ້ປະຕິບັດງານທີ່ໄດ້ຮັບມອບຫມາຍຈາກອົງພຣະຜູ້ເປັນເຈົ້າໃຫ້ສຳເຣັດ ຄືທີ່ຈະເປັນພະຍານຢ່າງຄົບຖ້ວນເຖິງເຣື້ອງຂ່າວປະເສີດກ່ຽວກັບພຣະຄຸນຂອງພຣະເຈົ້ານັ້ນ ... ເຫດສະນັ້ນ ວັນນີ້ເຮົາຢືນຢັນຕໍ່ທ່ານທັງຫລາຍວ່າ ເຮົາບໍ່ມີໂທດໃນຊາຕາກັມຂອງທ່ານທຸກຄົນ ດ້ວຍວ່າເຮົາບໍ່ໄດ້ຖົດຖອຍຈາກການປະກາດພຣະປະສົງຂອງພຣະເຈົ້າໃຫ້ພວກທ່ານຮູ້ ທ່ານທັງຫລາຍຈົ່ງລະວັງຕົວເອງໃຫ້ດີ ແລະລະວັງຮັກສາຝູງແກະທີ່ພຣະວິນຍານບໍຣິສຸດໄດ້ຊົງຕັ້ງພວກທ່ານໄວ້ໃຫ້ເປັນຜູ້ດູແລ ເພື່ອບຳຣຸງລ້ຽງຄຣິສຈັກຂອງພຣະເຈົ້າທີ່ພຣະອົງຊົງໄຖ່ມາດ້ວຍພຣະໂລຫິດຂອງພຣະອົງເອງ"

ພຣະທັມກິຈການ 22:12-15 "ມີຊາຍຜູ້ນຶ່ງຊື່ອານາເນັຽເປັນຄົນຢຳເກງພຣະເຈົ້າຕາມພຣະບັນຍັດ ແລະມີຊື່ສຽງດີໃນຖ້າມກາງພວກຢິວທີ່ອາສັຍຢູ່ໃນທີ່ນັ້ນ ທ່ານໄດ້ມາຫາ ແລະຢືນຢູ່ໃກ້ຂ້າພະເຈົ້າກ່າວວ່າ ໂຊໂລ ນ້ອງຂອງເຮົາເອີຍ ຈົ່ງເຫັນຮຸ່ງອີກເສັຽ ໃນທັນໃດນັ້ນຂ້າພະເຈົ້າໄດ້ເງີຍຫນ້າຂຶ້ນ ຈຶ່ງໄດ້ເຫັນທ່ານ ແລ້ວທ່ານໄດ້ກ່າວວ່າ ພຣະເຈົ້າແຫ່ງບັນພະບຸຣຸດຂອງພວກເຮົາໄດ້ຊົງເລືອກເຈົ້າໄວ້ ໃຫ້ຮູ້ຈັກນ້ຳພຣະທັຍຂອງພຣະອົງ ໃຫ້ເຫັນພຣະອົງຜູ້ຊອບທັມນັ້ນ ແລະໃຫ້ໄດ້ຍິນພຣະສຸຣະສຽງຈາກພຣະໂອດຂອງພຣະອົງດ້ວຍວ່າ ເຈົ້າຈະເປັນພະຍານຝ່າຍພຣະອົງ ໃຫ້ຄົນທັງຫລາຍຮູ້ເຖິງເຣື້ອງເຫດການຊຶ່ງເຈົ້າໄດ້ ເຫັນ ແລະໄດ້ຍິນນັ້ນ

ພຣະທັມໂຣມ 1:14-16 "ເຮົາເປັນຫນີ້ພວກທີ່ສີວິໄລ ແລະພວກຕ່ຳຊ້າ ເປັນຫນີ້ທັງພວກນັກປາດ ແລະພວກຄົນໂງ່ດ້ວຍ ເພາະເຫດນັ້ນ ເຮົາຮີບຮ້ອນທີ່ຈະປະກາດຂ່າວປະເສີດແກ່ເຈົ້າທັງຫລາຍທີ່ຢູ່ໃນກຸງໂຣມເຫມືອນກັນ ເພາະວ່າເຮົາບໍ່ມີຄວາມລະອາຍໃນຂ່າວປະເສີດ ດ້ວຍວ່າຂ່າວປະເສີດນັ້ນເປັນຣິດເດດຂອງພຣະເຈົ້າ ເພື່ອໃຫ້ທຸກຄົນທີ່ເຊື່ອໄດ້ຮັບຄວາມພົ້ນ ພວກຢິວກ່ອນ ແລະພວກຕ່າງຊາດດ້ວຍ

ພຣະທັມໂຣມ 9:1-3 "ເຮົາຢູ່ໃນພຣະຄຣິສ ເຮົາເວົ້າຄວາມຈິງ ເຮົາບໍ່ໄດ້ເວົ້າມຸສາ ໃຈສຳນຶກຜິດ ແລະຊອບຂອງເຮົາກໍເປັນພະຍານຝ່າຍເຮົາດ້ວຍພຣະວິນຍານບໍຣິສຸດ ວ່າເຮົາມີຄວາມທຸກໂສກຫນັກ ແລະມີຄວາມເຈັບຮ້ອນໃຈບໍ່ຂາດ ເພາະຖ້າເປັນປະໂຍດເຮົາປາຖນາຢາກໃຫ້ເຮົາເອງຖືກຊົງສາບ ແລະ

ຖືກຊົງຕັດຂາດຈາກພຣະຄຣິສເພາະເຫັນແກ່ພີ່ນ້ອງຂອງເຮົາ ຄືຍາດຂອງເຮົາຕາມເຊື້ອຊາດ"

ພຣະທັມ 1 ໂກຣິນໂທ 9:22 "ຕໍ່ຄົນອ່ອນແອເຮົາກໍເຮັດເໝືອນຄົນອ່ອນແອ ເພື່ອຈະໄດ້ໃຈຄົນອ່ອນແອ ເຮົາຍອມເປັນຄົນທຸກຊະນິດເພາະເຫັນແກ່ຄົນທັງປວງ ເພື່ອເຮົາຈະໄດ້ຊ່ອຍບາງຄົນໃຫ້ພົ້ນດ້ວຍທຸກວິທີທາງ"

ນັກສຶກສາພຣະຄັມພີຫລາຍທ່ານໃຫ້ຄວາມຄິດເຫັນກັນວ່າ ອາຈານໂປໂລອັຄສາວົກຂອງພຣະເຢຊູມີຜົລງານການປະກາດຂ່າວປະເສີດເດັ່ນກວ່າໝູ່ ເປັນບຸກຄົນທີ່ຮັບໃຊ້ພຣະເຈົ້າ ໂດຽອາສັຍຣິດທານຸພາບຂອງພຣະເຈົ້າ ທ່ານໂປໂລມີອຸປະນິສັຍບໍ່ຄືຄົນອື່ນ ແລະໃນຖານະທີ່ເປັນນັກປັດສະຍາຝ່າຍສາສນາ ຍິ່ງທ່ານໄດ້ຮັບການຊົງເອີ້ນຈາກພຣະເຈົ້າໃຫ້ມາເປັນຜູ້ນຳໃນຄຣິສສາສນາ ເປັນຜູ້ນຳໃນການເຜີຍແຜ່ຂ່າວປະເສີດໄປຍັງຄົນຕ່າງຊາດເປັນຜູ້ກໍ່ຕັ້ງຄຣິສຈັກ ເປັນຜູ້ຂຽນພຣະຄຣິສທັມຄັມພີ ເປັນນັກສາສນາສາດເປັນນັກເທສນາ ເປັນສາສນາຈານ ແລະເປັນຜູ້ປະກາດທີ່ນຳວິນຍານ ທ່ານເປັນຜູ້ນຳວິນຍານຊຶ່ງພຣະເຢຊູຄຣິສຊົງພໍພຣະທັຍ ທຸກມື້ນີ້ຊື່ສຽງອິດທິພົລຂອງທ່ານໂປໂລເປັນອັນດັບສອງຮອງຈາກພຣະເຢຊູຄຣິສ ທ່ານມີອຳນາດຫລາຍກວ່າມະນຸດອື່ນ ໆ ໃນເຣື້ອງການຢືນຢູ່ຝ່າຍພຣະເຈົ້າ ແລະການເປັນພະຍານຝ່າຍພຣະຄຣິສທີ່ມີສະງ່າຣາສີຫລາຍກວ່າຄົນທັງປວງ ທ່ານຍອມຮັບວ່າທ່ານເປັນຕົວແທນໃຫ້ພວກຄົນບາບໄດ້ເບິ່ງເພື່ອເປັນແບບຢ່າງ ໃນເຣື້ອງການກລັບໃຈໃໝ່ແລະການຖວາຍຕົວຮັບໃຊ້ພຣະເຈົ້ນ

**1. ສາເຫດທີ່ນຳໃຫ້ທ່ານໂປໂລກັບໃຈໃໝ່**

1.1 ຄວາມຮັກຂອງພຣະເຈົ້າແລະການຊົງເອີ້ນຮຽກຂອງພຣະເຈົ້າທ່ານໄດ້ບອກວ່າ "ແຕ່ພຣະເຈົ້າໄດ້ຊົງໂຜດເລືອກຂ້າພະເຈົ້າໄວ້ແຕ່ໃນທ້ອງມານດາຂອງຂ້າພະເຈົ້າ ແລະໄດ້ຊົງເອີ້ນຂ້າພະເຈົ້າດ້ວຍພຣະຄຸນມາຮັບໃຊ້ພຣະອົງ ແລະເມື່ອພຣະອົງຊົງຊອບພຣະທັຍ ທີ່ຈະໂຜດສະແດງພຣະບຸດຂອງພຣະບຸດຂອງພຣະອົງໃຫ້ປາກົດແກ່ຂ້າພະເຈົ້າ ເພື່ອໃຫ້ຂ້າພະເຈົ້າໄດ້ປະກາດຂ່າວປະເສີດເຣື້ອງພຣະບຸດນັ້ນໃນຖ້າມກາງພວກຕ່າງຊາດ ເຮົາບໍ່ໄດ້ປຶກສາກັນກັບມະນຸດຄົນໃດ (ຄາລາເຕັຽ 1:15-16) ພຣະຄຸນອັນມີຣິດເດດແຫ່ງການເລືອກຕັ້ງຂອງພຣະເຈົ້າໄດ້ຊົງດົນບັນດານໃນຕົວທ່ານ ຈຶ່ງໄດ້ເຮັດໃຫ້ພຣະປະສົງອັນດຳລົງຢູ່ເປັນນິດຂອງພຣະເຈົ້າໃຫ້ສຳເຣັດ (ໂຣມ 8:29-30)

1.2 ທ່ານໂປໂລໄດ້ສຳນຶກບາບ ພຣະວິນຍານຂອງພຣະເຈົ້າໄດ້ຊົງທຳງານໃນຈິດໃຈຂອງທ່ານໂປໂລດ້ວຍຣິດເດດ ຊຶ່ງເຮັດໃຫ້ທ່ານສຳນຶກບາບ ພຣະສຸຣສຽງຂອງພຣະເຈົ້າໄດ້ຮຽກຮ້ອງທ່ານໃຫ້ຖວາຍຊີວິດຈິດວິນຍານແກ່ພຣະອົງ (ໂຣມ 8:30 ໂຢຮັນ 16:8-9)

1.3 ການເທສນາ ແລະຄຳພະຍານຂອງອັຄສາວົກໄດ້ ມີສ່ວນນຶ່ງໃນການນຳທ່ານໂປໂລມາເຖິງຄວາມຣອດພົ້ນ ໂດຽສະເພາະຄຳເທສນາກັບຄຳພະຍານຂອງຊະເຕຟາໂນໄດ້ສຽບແທງຈິດໃຈຂອງທ່ານ (ກິຈການ 7:59-60) ຫລັງຈາກທີ່ທ່ານໂປໂລໄດ້ພົບພຣະເຢຊູແລ້ວ ມີຊາຍຄົນນຶ່ງຊື່ຢູດາ ໄດ້ຕ້ອນຮັບທ່ານໄວ້ໃນເຮືອນຂອງລາວ ແລ້ວອານາເນັຽຊຶ່ງເປັນຄຣິສຕຽນທີ່ດີກໍມາເພື່ອຈະຊ່ວຍໂປໂລຜູ້ເປັນຄົນບາບທີ່ໄດ້ສຳນຶກແລ້ວນີ້ໃຫ້ເຫັນຮູ້ງໄດ້

1.4 ຄຳວິງວອນຂອງທ່ານໂປໂລເອງໃນເວລາທີ່ທ່ານຮູ້ສຶກເສົ້າໃຈ ເພາະບາບຂອງຕົນ ກໍເປັນປັດຈັຍນຶ່ງໃນການກັບໃຈໃໝ່ຂອງທ່ານໂປໂລ "ອົງພຣະຜູ້ເປັນເຈົ້າຊົງບອກທ່ານວ່າ ຈົ່ງລຸກຂຶ້ນໄປເຖິງຖນົນສາຍທີ່ຊື່ວ່າຖນົນຊື່ ແລ້ວຈົ່ງຖາມຫາຜູ້ນຶ່ງທີ່ຢູ່ໃນເຮືອນຂອງຢູດາ ຊື່ວ່າໂຊໂລໄທເມືອງຕາໂຊ ເພາະເບິ່ງແມ ລາວກຳລັງໄຫ້ວອນຢູ່ (ກິຈການ 9:11)

1.5 ການປາກົດຕົວຂອງພຣະເຢຊູຕໍ່ໜ້າທ່ານໂປໂລຜູ້ຂົ່ມເຫັງພຣະອົງໄດ້ຊົງຊະນະຈິດໃຈຂອງ

ທ່ານ  ທ່ານໂປໂລໄດ້ພົບກັບພຣະອົງຜູ້ຖືກຂຶງຕາຍທີ່ໄມ້ກາງແຂນ ເຮັດໃຫ້ທ່ານຍອມການຖວາຍຕົວດ້ວຍສິ້ນສຸດໃຈ ທ່ານໂປໂລຖາມວ່າ "ພຣະອົງເຈົ້າເອີຍ ຂ້າພະເຈົ້າຈະຕ້ອງທຳປະການໃດ?" ໂດຍຂ່າວຂອງພຣະເຢຊູຄຣິສໄດ້ຊົງນຳບຸກຄົນທີ່ຍິ່ງໃຫຍ່ທີ່ສຸດ ຖ່າມກາງມະນຸດມາເຖິງຄວາມຣອດພົ້ນ ແລະຊົງສ້າງທ່ານເປັນຄົນໃຫມ່ ຊົງຄວບຄອງຫົວໃຈຂອງທ່ານໂປໂລຈົນຫມົດສິ້ນ ຊົງເຕີມພຣະວິນຍານບໍຣິສຸດໃນຈິດໃຈຂອງທ່ານໃຫ້ເຕັມ ແລະຊົງສົ່ງທ່ານອອກໄປເພື່ອເປັນພະຍານຕໍ່ມະນຸດທັງຫລາຍ

**2. ທ່ານໂລໂປພົບຄວາມສຳເຣັດໃນການເປັນພະຍານແລະນຳວິນຍານດັ່ງນີ້**

2.1 ເມື່ອທ່ານໂປໂລພໍ້ກັບພຣະເຢຊູຄຣິສທ່ານເຫັນວ່າ

ກ. ຕົວເອງເປັນຄົນບາບ ຮູ້ຈັກວ່າຕົວເອງກຳລັງຫລົງທາງ ແລະກຳລັງຈະພິນາດ ເປັນຄົນບາບທີ່ຕາຍໃນຄວາມຜິດບາບ ແລະປາສຈາກພຣະເຈົ້າ ປາສຈາກພຣະຄຣິສ ປາສຈາກຄວາມຫວັງ

ຂ. ພຣະຄຣິສແລະຂ່າວປະເສີດຂອງພຣະອົງຊົງເປັນຣິດທານຸພາບແຫ່ງພຣະເຈົ້າ ສາມາດຊ່ວຍໃຫ້ມະນຸດໄດ້ຣອດພົ້ນ (ໂຣມ 1:16)

ຄ. ພຣະຄຣິສ ຜູ້ຊົງມີຊັຍຈະຕ້ອງເປັນເຈົ້າຊີວິດແຫ່ງຈິດໃຈ ແລະທ່ານຈຳເປັນຕ້ອງເຊື່ອຟັງຄຳສັ່ງທຸກຂໍ້ຂອງພຣະອົງ ແລະທຳຕາມນ້ຳພຣະທັຍຂອງພຣະອົງທຸກປະການ

ງ. ໂລກທີ່ຄອບຄຸມໄປດ້ວຍຄວາມບາບ ແລະກຳລັງຂໍຄວາມຊ່ວຍເຫລືອຝ່າຍວິນຍານຈິດ ທ່ານຈຶ່ງໄດ້ຖວາຍຊີວິດເພື່ອການຮັບໃຊ້ ທ່ານກ່າວວ່າ "ເມື່ອເປັນດັ່ງນັ້ນແລ້ວຂ້າພຣະບາດບໍ່ໄດ້ຂັດຂືນນິມິດຊຶ່ງມາຈາກຟ້າສວັນນັ້ນ" (ກິຈການ 26:19)

2.2 ທ່ານໂປໂລມີຄວາມກ້າຫານອັນບໍຣິສຸດໃຈ ທ່ານມີຄວາມຢ້ານຢູ່ຢ່າງດຽວຄື ຢ້ານພຣະເຈົ້າບໍ່ພໍພຣະທັຍ ເຮົາເຫັນໄດ້ວ່າທ່ານມີຄວາມກ້າຫານດັ່ງຕໍ່ໄປນີ້

ກ. ທ່ານໂປໂລພ້ອມແລ້ວທີ່ຈະຕາຍຊ່ວຍເພື່ອຕົວເອງແລະໂລກໃຫ້ຣອດພົ້ນ

ຂ. ທ່ານພ້ອມທີ່ຈະມີຊີວິດຢູ່ເພື່ອພຣະຄຣິສເທົ່ານັ້ນ

ຄ. ທ່ານພ້ອມທີ່ຈະຍອມທຸກທໍຣະມານເພາະເຫັນແກ່ພຣະຄຣິສ (ຟີລິບປອຍ 1:29)

ງ. ທ່ານພ້ອມທີ່ຈະຍອມພະເຊີນອັນຕະລາຍໃດ ໆ ໃນການຮັບໃຊ້ກິຈການໃດ ໆ ເພື່ອພຣະຄຣິສ

ຈ. ທ່ານພ້ອມທີ່ຈະມີຄວາມພາກພຽນໃນການກະທຳກິຈການຂອງພຣະເຢຊູເຖິງແມ່ນວ່າກິຈການນັ້ນຈະຍາກພຽງໃດກໍ່ບໍ່ທໍ້ຖອຍ

ສ. ພ້ອມທີ່ຈະເທສນາຄວາມຈິງຂອງພຣະເຈົ້າອັນທ່ຽງແທ້ ແລະພ້ອມທີ່ຈະສນັບສະນຸນຄຳສັ່ງສອນຂອງພຣະອົງ ເຖິງແມ່ນວ່າມະນຸດທັງໂລກຈະປະຕິເສດພຣະອົງກໍຕາມ

2.3 ທ່ານໂປໂລມີຄວາມເຊື່ອໄວ້ວາງໃຈໃນພຣະເຢຊູສເມີ ຊຶ່ງເປັນເຫດໃຫ້ທ່ານຮ້ອງສັລເສີນພຣະເຈົ້າ ເມື່ອຖືກບາດເຈັບເພາະຖືກໂບຍຕີ ແລະເມື່ອຖືກຈຳໄວ້ໃນຄຸກ

2.4 ທ່ານເຫັນໂລກໃນແຕ່ແງ່ດີ ຊຶ່ງຢູ່ບົນຮາກຖານແຫ່ງພຣະຄຳຂອງພຣະເຈົ້າທີ່ຊົງຕັດໄວ້ລ່ວງຫນ້າ ແລະພຣະຄຳສັນຍາຂອງພຣະຄຣິສ ທີ່ບໍ່ຊົງປ່ຽນແປງ

5. ທ່ານໂປໂລມີຄວາມຮັກຕໍ່ພຣະເຢຊູຄຣິສທີ່ຮ້ອນຮົນ ແລະຄວາມເອັນດູຕໍ່ມະນຸດທີ່ຫລົງທາງເຮັດໃຫ້ທ່ານເຕັມໄປດ້ວຍຄວາມເດືອດຮ້ອນໃຈ (2 ໂກຣິນໂທ 5:14 ໂຣມ 9:1-3)

6. ທ່ານມີຄວາມເຊື່ອຫມັ້ນຄວາມຈິງໃນພຣະເຈົ້າເປັນຫລັກສຳຄັນຄື

ກ. ພຣະຄຳຂອງພຣະເຈົ້າຖືກຂຽນໂດຍການບັນດົນໃຈຂອງພຣະເຈົ້າຕາມທີ່ພຣະອົງຊົງສັ່ງ

ແລະມີອຳນາດເໜືອຊີວິດຂອງເຮົາ

ຂ. ມະນຸດທຸກຄົນເປັນຄົນບາບຕາມທັມຊາດຕັ້ງແຕ່ກຳເນີດ

ຄ. ພຣະເຢຊູຄຣິສຊົງສະພາບເປັນພຣະເຈົ້າ

ງ. ພຣະໂລຫິດຂອງພຣະເຢຊູມີຣິດເດດລ້າງບາບໄດ້

ຈ. ສວັນ ແລະນາຣົກເປັນສະຖານທີ່ມີຈິງ

ສ. ພຣະເຢຊູຊົງຟື້ນຄືນພຣະຊົນຈິງ

ຊ. ພຣະເຢຊູຄຣິສຊົງຣິດເດດ ຊົງຄຸ້ມຄອງຮັກສາວິນຍານຂອງເຮົາໄວ້ຕລອດໄປເປັນນິດ

ຢ. ພຣະເຢຊູຈະສເດັດມາຄັ້ງທີ່ສອງ

ຄວາມຈິງເຫລົ່ານີ້ເປັນຂໍ້ເຊື່ອເປັນສ່ວນນຶ່ງຂອງວິນຍານຈິດຂອງທ່ານໂປໂລ ຄວາມເຊື່ອຂອງທ່ານປະກອບດ້ວຍສິ່ງເຫລົ່ານີ້ ທ່ານໄດ້ເວົ້າເຖິງທຸກຄັ້ງ ໃນການເທສນາຂອງທ່ານ

2.7 ທ່ານໃຊ້ວິທີການຕ່າງກັນໃນກໍຣະນີຕ່າງ ໆ ທ່ານຍອມເປັນຄົນທຸກຊນິດ ເພາະເຫັນແກ່ຄົນທັງປວງ ເພື່ອຈະຊ່ວຍເຂົາໃຫ້ຣອດພົ້ນໄດ້ ທ່ານເຊື່ອວ່າຄວນຈະນຳຄົນມາເຊື່ອໂດຍການເທສນາຕໍ່ປວງຊົນ ແລະການສິດສອນແຕ່ລະບຸກຄົນ ທຸກເວລາ ທຸກແຫ່ງ

2.8 ຊີວິດຂອງທ່ານທີ່ໄດ້ຖວາຍແດ່ພຣະຄຣິສເປັນຊີວິດບໍຣິສຸດ ທ່ານໄດ້ດຳເນີນຊີວິດໃນຄວາມບໍຣິສຸດ ທ່ານວາງແຜນການສຳລັບຊີວິດທີ່ບໍຣິສຸດຂອງຄຣິສຕຽນໃນພຣະທັມໂຣມ ບົດທີ 12, ພຣະທັມ 2 ໂກຣິນໂທ ບົດທີ 6 ພຣະທັມຄາລາເຕັຽ ບົດທີ 5 ແລະພຣະທັມເອເຟໂຊ 4:11-5:11 ທ່ານກໍໄດ້ປະພຶດຕາມແບບແຜນນີ້ດ້ວຍ

ເຮົາເຫັນໄດ້ວ່າ ທ່ານໂປໂລເປັນຄົນທີ່ມີຊີວິດເຕັມໄປດ້ວຍພຣະວິນຍານບໍຣິສຸດ ແລະຊີວິດແຫ່ງການຮັບໃຊ້ຂອງທ່ານກໍ່ຂຶ້ນບົນຮາກຖານອັນທ່ຽງແທ້ຄືພຣະເຢຊູຄຣິສ ຜູ້ຊົງຕາຍເທິງໄມ້ກາງແຂນ ແຕ່ໄດ້ຟື້ນຄືນພຣະຊົນແລ້ວ ທ່ານໂປໂລເທສນາ ສັ່ງສອນ ແລະດຳລົງຊີວິດໂດຽຣິດເດດແຫ່ງພຣະວິນຍານ

ສະບັບແກ້ໄຂໃໝ່

# ບົດທີ 3

## ຂ້າພະເຈົ້າປ່າວປະກາດພຣະຄຣິສ ຄຣິສຈັກຂອງຂ້າພະເຈົ້າປ່າວປະກາດພຣະຄຣິສ

ຂໍ້ຄວາມຂ້າງເທິງເປັນຄຳເຕືອນຈິດເຕືອນໃຈ ຄຣິສຕຽນທຸກຄົນໃຫ້ອອກໄປປ່າວປະກາດພຣະຄຣິສ ຖ້າວ່າຄຣິສຕຽນທຸກຄົນປ່າວປະກາດພຣະຄຣິສແລ້ວ ຄຣິສຈັກທົ່ວທຸກແຫ່ງກໍຈະກາຍເປັນຄຣິສຈັກທີ່ຮ້ອນຮົນກະຕືລືລົ້ນໃນການປະກາດຂ່າວປະເສີດຂອງພຣະເຢຊູຄຣິສ ຄວາມເຂັ້ມແຂງຂອງຄຣິສຈັກແລະການຈະເລີນເຕີບໃຫຍ່ຂອງຄຣິສຈັກນັ້ນ ຂຶ້ນຢູ່ກັບຄວາມພ້ອມອົກພ້ອມໃຈຂອງສະມາຊິກທີ່ເຫັນເຖິງຄວາມສຳຄັນຂອງການປ່າວປະກາດ ແລະໃຫ້ຄວາມຮ່ວມໄມ້ຮ່ວມມືກັນໃນການຈັດຕັ້ງໃຫ້ເກີດການປ່າວປະກາດຂ່າວປະເສີດຂອງພຣະຄຣິສ ຄຣິສຕຽນທີ່ບໍ່ສົນໃຈເຣື່ອງການປ່າວປະກາດແມ່ນເພາະວ່າບໍ່ເຂົ້າໃຈເຖິງເຫດຜົນຫລືຄວາມສຳຄັນຂອງການປ່າວປະກາດ

### ນຶ່ງ. ເຫດໃດຂ້າພະເຈົ້າຈຶ່ງຕ້ອງປ່າວປະກາດພຣະຄຣິສ

1. ພຣະຄຳຂອງພຣະເຈົ້າບອກເຮົາແຈ້ງວ່າພວກເຮົາຕ້ອງປ່າວປະກາດພຣະຄຣິສ

1.1 ພຣະຄຳທີ່ເຕືອນໃຈເຮົາ

ດານີເອນ 12:3 "ຄົນທັງຫລາຍທີ່ສະຫລາດຈະຣຸ່ງເຮືອງເໝືອນດວງດາວສວ່າງເທິງທ້ອງຟ້າ ແລະຜູ້ທີ່ສັ່ງສອນຄົນທັງຫລາຍໃຫ້ເປັນຄົນຊອບທັມ ຈະຣຸ່ງເຮືອງເໝືອນດວງດາວອັນຕລອດໄປ"

ຄາລາເຕັຽ 6:9 "ຢ່າໃຫ້ພວກເຮົາເມື່ອຍລ້າໃນການເຮັດດີ ເພາະວ່າຖ້າ ໃຈພວກເຮົາບໍ່ທໍ້ຖອຍ ເຮົາກໍຈະໄດ້ເກັບກ່ຽວຜົນຕາມເວລາສົມຄວນ"

ຢູດາ 23 "ຈົ່ງຊ່ວຍຍາດບາງຄົນໃຫ້ພົ້ນດ້ວຍດຶງເຂົາອອກຈາກໄຟ ຈົ່ງເມດຕາອີກບາງຄົນດ້ວຍຄວາມຈຽມຕົວ ແລະຈົ່ງໜ່າຍຊັງຍັງເສື້ອຜ້າທີ່ເປື້ອນເປິະດ້ວຍຣາຄະຕັນຫາ"

1.2 ພຣະຄຳຂອງພຣະເຈົ້າທີ່ຊົງແຕ່ງຕັ້ງເຮົາໃຫ້ອອກປ່າວປະກາດ

ມັດທາຍ 4:19 "ຈົ່ງຕາມເຮົາມາ ແລະເຮົາຈະບັນດານໃຫ້ພວກເຈົ້າເປັນຜູ້ຫາຄົນ"

ໂຢຮັນ 20:21 "ສັນຕິສຸກຈົ່ງມີຢູ່ກັບທ່ານທັງຫລາຍ ພຣະບິດາໄດ້ຊົງໃຊ້ເຮົາມາຢ່າງໃດຝ່າຍເຮົາກໍໃຊ້ທ່ານທັງຫລາຍໄປຢ່າງນັ້ນ"

ມັດທາຍ 22:9 "ເຫດສັນນີ້ຈົ່ງອອກໄປທີ່ທາງຄົບ ເມື່ອພົບຄົນໃດກໍໃຫ້ເຊີນມາໃນງານນີ້"

1.3 ພຣະຄຳຂອງພຣະເຈົ້າເຕືອນໃຫ້ພວກເຮົາມີຄວາມອົດທົນ

ບົດເພັງສັຣເສີນ 126:5-6 "ຂໍໃຫ້ຜູ້ທີ່ຮ້ອງໄຫ້ເສັຍໃຈໃນຂະນະທີ່ປູກຝັງນັ້ນ ໄດ້ກ່ຽວ

ເຂົ້າດ້ວຍຄວາມຍິນດີ  ຜູ້ທີ່ຮ້ອງໄຫ້ໃນເວລາທີ່ອອກໄປຫວ່ານກ້າ ຈະນຳຜົນປູກກັບມາດ້ວຍການຮ້ອງເພງຢ່າງມ່ວນຊື່ນ"

ເອຊາຢາ 39:5 "ຈົ່ງໄປບອກຮິສຄີຢາ ພຣະຍະໂຮວາ ພຣະເຈົ້າຂອງດາວິດຣາຊບິດາຂອງທ່ານວ່າ ເຮົາໄດ້ຍິນຄຳອະທິຖານຂອງເຈົ້າແລ້ວ ເຮົາໄດ້ເຫັນນ້ຳຕາຂອງເຈົ້າແລ້ວ"

1 ໂກຣິນໂທ 9:22-23 "ຕໍ່ຄົນທີ່ອ່ອນແອເຮົາກໍເຮັດເຫມືອນຄົນອ່ອນແອ ເພື່ອຈະໄດ້ໃຈຄົນອ່ອນແອ ເຮົາຍອມເປັນຄົນທຸກຊະນິດເພາະເຫັນແກ່ຄົນທັງປວງ ເພື່ອເຮົາຈະໄດ້ຊ່ວຍບາງຄົນໃຫ້ພົ້ນດ້ວຍທຸກວິທີທາງ ເຮົາເຮັດຕາມສິ່ງເຫລົ່ານີ້ເພາະເຫັນແກ່ຂ່າວປະເສີດເພື່ອເຮົາຈະໄດ້ມີສ່ວນໃນຂ່າວປະເສີດນັ້ນ"

1.4 ຄຳສັ່ງຂອງພຣະເຈົ້າທີ່ປາກົດແກ່ເຮົາ

ມາຣະໂກ 16:15 "ຝ່າຍພຣະອົງຊົງສັ່ງສາວົກວ່າ "ທ່ານທັງຫລາຍຈົ່ງໄປທົ່ວໂລກ ປະກາດຂ່າວປະເສີດແກ່ມະນຸສໂລກທັງຫມົດ"

ໂຢຮັນ 4:35 "ທ່ານທັງຫລາຍເວົ້າວ່າ ອີກສີ່ເດືອນຈະເຖິງຣະດູກ່ຽວເຂົ້າບໍ່ແມ່ນຫລືນີ້ແຫລະ ເຮົາບອກທ່ານທັງຫລາຍວ່າ ຈົ່ງເງີຍຫນ້າເບິ່ງທົ່ງນາເພາະເຂົ້າກໍເຫລືອງພໍກ່ຽວແລ້ວ"

ມັດທາຍ 9:37-38 ແລ້ວພຣະອົງຊົງກ່າວແກ່ພວກສິດຂອງພຣະອົງວ່າ "ເຂົ້າທີ່ຈະກ່ຽວນັ້ນກໍຫລາຍແທ້ ແຕ່ຄົນງານມີຫນ້ອຍຢູ່ ເພາະສັນນັ້ນພວກທ່ານຈົ່ງອ້ອນວອນຜູ້ເປັນເຈົ້າຂອງນາ ໃຫ້ຈຳຄົນງານມາໃນການກ່ຽວຂອງເພິ່ນເສັຽ"

1.5 ພຣະສັນຍາຂອງພຣະເຈົ້າ ມອບໃຫ້ພວກເຮົາປ່າວປະກາດ ຈະປາກົດຜົນສຳເຣັດ

ກິຈການ 1:8 "ແຕ່ທ່ານທັງຫລາຍຈະໄດ້ຮັບພຣະຣາຊທານຣິດເດດ ເມື່ອພຣະວິນຍານບໍຣິສຸດຈະສະເດັດມາເຖິງພວກທ່ານ ແລະພວກທ່ານຈະເປັນພະຍານຝ່າຍເຮົາໃນກຸງເຢຣູຊາເລັມ ຕລອດທົ່ວແຂວງຢູດາຍກັບແຂວງຊາມາເຣັຽ ແລະຈົນເຖິງທີ່ສຸດປາຍແຜ່ນດິນໂລກ"

ເອຊາຢາ 58:10 "ຖ້າເຈົ້າທຸ່ມເທຊີວິດຂອງເຈົ້າໃຫ້ແກ່ຄົນຫິວ ແລະໃຫ້ຄົນທີ່ຫິວກະຫາຍນັ້ນອິ່ມໃຈ ແລ້ວຄວາມສວ່າງຂອງພວກເຈົ້າຈະເກີດແຈ້ງຂຶ້ນໃນທີ່ມືດ"

ດານີເອນ 11:32 "ແຕ່ພວກທີ່ບົວລະບັດພຣະເຈົ້າຈະເຂັ້ມແຂງ ແລະສຳເຣັດຜົນ"

ເພງສັຣເສີນ 37:5 "ຈົ່ງຖວາຍຕົວເອງແດ່ພຣະຜູ້ເປັນເຈົ້າ ຈົ່ງເຊື່ອຟັງພຣະອົງແລະພຣະອົງຈະຊ່ວຍເຫລືອເຈົ້າ"

1.6 ພຣະຄຳຂອງພຣະເຈົ້າຕັກເຕືອນເຮົາໃຫ້ຣະວັງຄວາມຜິດທີ່ຈະຕົກເຖິງເຮົາ

ເອເຊກຽນ 33:7-8 ມະນຸດເອີຍ ບັດນີ້ເຮົາຈະແຕ່ງຕັ້ງໃຫ້ເຈົ້າເປັນຜູ້ເຝົ້າຍາມຊົນຊາດອິສຣາເອນທັງຫມົດ ຈົ່ງນຳຖ້ອຍຄຳທີ່ເຮົາບອກໃຫ້ໄປຕັກເຕືອນເຂົາ ຖ້າເຮົາປະກາດວ່າ ມີຄົນຊົ່ວຜູ້ນຶ່ງກຳລັງຈະຕາຍ ແຕ່ເຈົ້າບໍ່ຕັກເຕືອນໃຫ້ລາວປ່ຽນຊີວິດໃຫມ່ ລາວກໍຈະຕາຍເສັຽຍ້ອນບາບຂອງຕົນເອງ ແລ້ວເຮົາກໍຈະຖືວ່າການຕາຍຂອງຜູ້ນັ້ນເປັນຄວາມຜິດຂອງເຈົ້າ

## 2. ເປັນແຜນການອັນຍິ່ງໃຫຍ່ຂອງພຣະເຈົ້າ

ພຣະເຈົ້າໄດ້ມີແຜນການຊ່ວຍມະນຸດໃຫ້ຣອດພົ້ນ ເພາະເຫດທີ່ມະນຸດຫລົງຜິດ ແລະຕົກລົງໄປໃນ

ຄວາມຜິດບາບ ແຕ່ດ້ວຍຄວາມຮັກຂອງພຣະເຈົ້າ ພຣະອົງໄດ້ລົງທຶນຢ່າງຫລວງຫລາຍ ເພື່ອໃຫ້ມະນຸດໄດ້ກັບຄືນຫາພຣະເຈົ້າ ເພື່ອໃຫ້ມະນຸດຣອດພົ້ນຈາກວົງກັມແຫ່ງການຫລົງຜິດນັ້ນ ຊຶ່ງເປັນແຜນການທີ່ຍາກ ແລະຊັບຊ້ອນເຫລືອທີ່ມະນຸດຈະເຂົ້າໃຈໄດ້ ຈະເຫັນໄດ້ວ່າເມື່ອພຣະເຈົ້າຊົງສ້າງໂລກພຣະອົງພຽງແຕ່ຕັດສັ່ງ ຄຳຕັດສັ່ງຂອງພຣະເຈົ້າສາມາດເນຣະມິດສ້າງຟ້າ ສ້າງດິນ ສ້າງສິ່ງທີ່ມີຊີວິດທັງມວນ ກະທັ້ງດວງເດືອນດວງດາວ ແລະແສງສວ່າງແຮງກ້າຂອງດວງອາທິດ ແລະການຊ່ວຍມະນຸດໃຫ້ຣອດພົ້ນນັ້ນ ພຣະອົງຕ້ອງລົງທຶນຢ່າງຫລວງຫລາຍ ພຣະອົງຕ້ອງເລືອກເອົາຊົນຊາດນຶ່ງອອກມາເປັນແບບຢ່າງ ພຣະອົງຕ້ອງປະທານພຣະບັນຍັດຂອງພຣະອົງ ເພື່ອມະນຸດຈະໄດ້ຮູ້ຈັກເຖິງກົດເກນແຫ່ງຄວາມຊອບທັມ ພຣະອົງໄດ້ປະທານຜູ້ເຜີຍພຣະທັມຫລາຍຄົນໃນຫລາຍຍຸກຫລາຍສະມັຍ ເພື່ອປ່າວປະກາດໃຫ້ມະນຸດຮູ້ຈັກນໍ້າພຣະທັຍ ແລະພຣະປະສົງຂອງພຣະເຈົ້າ ບໍ່ພຽງແຕ່ເທົ່ານັ້ນພຣະອົງໄດ້ປະທານພຣະບຸດອົງດຽວອັນເປັນທີ່ຮັກຂອງພຣະອົງສະເດັດມາບັງເກີດເປັນມະນຸດເພື່ອຕາຍ ເພື່ອເປັນເຄື່ອງບູຊາໄຖ່ບາບເທິງໄມ້ກາງແຂນ ເພື່ອລຶບຣອຍຜິດບາບທີ່ມະນຸດໄດ້ທຳໄວ້ແຕ່ດັ່ງເດີມ ເພື່ອຊ່ວຍຈິດວິນຍານຂອງມະນຸດທີ່ຫລົງຫາຍນັ້ນໃຫ້ຣອດພົ້ນ ນອກຈາກນັ້ນແລ້ວພຣະເຈົ້າໄດ້ຣວມກຳລັງ ແລະຣິດທານຸພາບຂອງພຣະອົງຄື ຕຣີເອການຸພາບ ແມ່ນຄວາມຮັກຂອງພຣະບິດາ ໂດຍການເສັຽສະລະຂອງພຣະບຸດ ແລະໂດຍການເລົ້າໂລມນຳພາຂອງພຣະວິນຍານບໍຣິສຸດທີ່ຈະນຳພາໃຫ້ມະນຸດ ແຕ່ລະຄົນມາເຖິງຄວາມເຊື່ອ ມາເຖິງຄວາມພົ້ນ ພຣະຄຸນ ແລະການລົງທຶນຢ່າງຫລວງຫລາຍນີ້ ພຣະເຈົ້າໄດ້ເປັນຜູ້ເລີ້ມຕົ້ນ ພຣະອົງໄດ້ເຮັດພາກສ່ວນຂອງພຣະອົງສຳເຣັດແລ້ວ ແຕ່ຄວາມຣອດພົ້ນຍັງໄປບໍ່ຣອດບໍ່ເຖິງມະນຸດ ເພາະມະນຸດຂາດຄວາມຮ່ວມມືກັບພຣະເຈົ້າ ຄວາມຣອດພົ້ນຈະສົມບູນໄດ້ກໍຕໍ່ເມື່ອ ມີຜູ້ນຳເອົາຂ່າວປະເສີດນີ້ອອກປ່າວປະກາດ ບອກເລົ່າໃຫ້ຜູ້ທີ່ຫລົງຫາຍໄດ້ຮູ້ຈັກ ແລະໄດ້ຮັບເອົາໄວ້ເປັນສົມບັດເປັນມໍຣະດົກສ່ວນຕົວ ເປັນເຣື້ອງທີ່ມະນຸດແຕ່ລະຄົນຈະຕ້ອງຮັບເອົາດ້ວຍປະສົບການຂອງຕົນເອງ ດ້ວຍເຫດນີ້ແຫລະ ວຽກງານການປ່າວປະກາດຂ່າວປະເສີດຈຶ່ງເປັນງານທີ່ຍິ່ງໃຫຍ່ສູງສຸດຕ້ອງໃຊ້ພລັງງານ ແລະເຫື່ອແຮງຂອງຄົນຢ່າງມະຫາສານເພື່ອຊ່ວຍມະນຸດທົ່ວໃຕ້ຟ້າໃຫ້ມາເຖິງຄວາມພົ້ນ ແຜນການອັນຍິ່ງໃຫຍ່ຂອງພຣະເຈົ້າທີ່ມີພຣະຄຸນອັນໃຫຍ່ຫລວງນີ້ ຮຽກຮ້ອງໃຫ້ເຮົາຕ້ອງມີສ່ວນຮ່ວມໃນແຜນການປ່າວປະກາດຂ່າວປະເສີດ

### 3. ເປັນຄວາມຮັບຜິດຊອບຂອງຜູ້ເຊື່ອທຸກຄົນ

ພຣະເຈົ້າໄດ້ໃຊ້ທຸກວິທີທາງທີ່ຈະນຳມະນຸດໃຫ້ຫລຸດພົ້ນຈາກໂທດແຫ່ງຄວາມບາບ ແລະໃຫ້ພົ້ນຈາກການຮັບບາບກັມໃນແດນນະຣົກ ແຕ່ຄວາມຫວັງນີ້ຈະສຳເຣັດບໍ່ໄດ້ຫາກວ່າມະນຸດບໍ່ຮ່ວມມືກັບພຣະອົງ ປະຊາຊົນກຸ່ມແຣກທີ່ມີຄວາມສຳຄັນ ແລະມີບົດບາດຫລາຍທີ່ສຸດທີ່ສາມາດຊ່ວຍໃຫ້ແຜນການຂອງພຣະເຈົ້າສຳເຣັດນັ້ນ ແມ່ນຄຣິສຕຽນຜູ້ເຊື່ອທຸກຄົນທີ່ໄດ້ຮັບປະສົບການຂອງການບັງເກີດໃຫມ່ ທີ່ໄດ້ຮັບການປະທັບຕຣາ ແລະຫມາຍໄວ້ແລ້ວຈາກພຣະເຈົ້າ ຈະເປັນຜູ້ສື່ຂ່າວປະເສີດນີ້ ແລະຈະເປັນຜູ້ນຳເອົາພຣະພອນອັນຍິ່ງໃຫຍ່ນີ້ໃຫ້ແຜ່ຂຍາຍອອກໄປກໍຕາມ ຜູ້ໃດທີ່ຍອມໃຫ້ພຣະເຈົ້າໄດ້ໃຊ້ຈະໄດ້ຮັບບຳເຫນັດຣາງວັນຊີວິດໃນວັນສຸດທ້າຍ ດັ່ງໃນພຣະທັມໂຢຮັນ 4:36 ກ່າວວ່າ "ຜູ້ກ່ຽວກໍກຳລັງໄດ້ຮັບຄ່າຈ້າງ ແລະກຳລັງຣົບໂຮມຜົນໄວ້ສຳຫລັບຊີວິດອັນຕລອດໄປ ເພື່ອທັງຜູ້ຫວ່ານ ແລະຜູ້ກ່ຽວຈະຊົມຊື່ນຍິນດີພ້ອມກັນ" ແລະພຣະທັມອີກຂໍ້ນຶ່ງແມ່ນ 2 ຕີໂມທຽວ 4:8 ກ່າວວ່າ "ແຕ່ນີ້ຕໍ່ໄປພວງມາລັຍຄືຣາງວັນແຫ່ງຄວາມຊອບທັມ ຊົງຈັດໄວ້ຖ້າເຮົາແລ້ວ ຊຶ່ງອົງພຣະຜູ້ເປັນເຈົ້າຜູ້ພິພາກສາອັນຍຸດຕິທັມ ຈະຊົງປະທານແກ່ເຮົາໃນວັນນັ້ນ ແລະບໍ່ແມ່ນແກ່ເຮົາຜູ້ດຽວ ແຕ່ຈະຊົງປະທານຣາງວັນແກ່ຄົນທັງປວງທີ່ມີໃຈຍິນດີໃນການຊົງສ່ອງສວ່າງມາປາກົດຂອງພຣະອົງ"

ແນ່ນອນທີ່ສຸດຊີວິດການນຳຜູ້ຫລົງຫາຍມາຖວາຍແກ່ພຣະເຈົ້າ ບໍ່ແມ່ນສິ່ງງ່າຍແຕ່ຕ້ອງເຕັມໄດ້ດ້ວຍຄວາມເສັຽສະລະ ຍອມແຍກຕົວອອກເພື່ອຖວາຍການຮັບໃຊ້ແດ່ພຣະເຈົ້າຢ່າງແທ້ຈິງ ຍອມທົນທຸກແຕ່ເຖິງຢ່າງນັ້ນຄວາມຍິນດີກໍເຕັມລົ້ນໃນຈິດໃຈ ເພາະໄດ້ບົວລະບັດຮັບໃຊ້ພຣະຜູ້ເປັນເຈົ້າ ແລະໄດ້ເຫັນມະນຸດທີ່ຫລົງຢູ່ໃນຄວາມບາບກັບໃຈໃຫມ່ຄືນສູ່ອ້ອມອົກຂອງພຣະເຈົ້າ ດັ່ງພຣະຄຳຂອງພຣະເຢຊູຄຣິສທີ່ຕັດວ່າ "ດັ່ງນັ້ນແຫລະ ເຮົາບອກທ່ານທັງຫລາຍວ່າ ຈະມີຄວາມປິຕິຍິນດີໃນສວັນ ເພາະເຫັນແກ່ຄົນບອກສິບທັມຄົນດຽວທີ່ຖິ້ມໃຈເກົ່າເອົາໃຈໃຫມ່ ຫລາຍກວ່າຈະຍິນດີກັບຄົນສິນທັມເກົ້າສິບເກົ້າຄົນທີ່ບໍ່ຕ້ອງການຖິ້ມໃຈເກົ່າເອົາໃຈໃຫມ່" (ລກ 15:7)

**4. ຄວາມຈຳເປັນທີ່ເຫັນຢູ່ຕໍ່ຫນ້າ ເປັນວຽກງານທີ່ຮຽກຮ້ອງໃຫ້ປ່າວປະກາດ**

ອາຈານໂປໂລກ່າວໄວ້ໃນພຣະທັມ 2 ໂກຣິນໂທ 5:14 "ດ້ວຍວ່າຄວາມຮັກຂອງພຣະຄຣິສຊົງບັງຄັບເຮົາຢູ່" ເພາະເຫດວ່າເຮົາທັງຫລາຍໄດ້ຮັບພຣະຄູນຈາກພຣະເຈົ້າ ເຫັນເຖິງການເສັຍສະລະຂອງພຣະອົງແລ້ວ ເຮັດໃຫ້ເຮົາທັງຫລາຍຢາກຕອບແທນຄູນຂອງພຣະເຈົ້າ ໂດຍທີ່ເຮົາເຫັນເຖິງຄວາມຈຳເປັນທີ່ຢູ່ຕໍ່ຫນ້າຂອງເຮົາທັງຫລາຍ ທີ່ພວກເຮົາທັງຫລາຍຈະມົດງຽບຢູ່ບໍ່ໄດ້ຈຳເປັນຕ້ອງໄດ້ລົງມືກະທຳແລະຮ່ວມມືກັບພຣະເຈົ້າ ເພື່ອຊ່ວຍກູ້ວິນຍານຈິດຂອງມະນຸດມາເຖິງຄວາມພົ້ນໃນພຣະອົງ ຊຶ່ງວຽກງານຊ່ວຍມະນຸດໃຫ້ຣອດພົ້ນໄດ້ຮັບການຮຽກຮ້ອງມາຈາກຫລາຍທາງ

4.1 ການຮຽກຮ້ອງມາຈາກທາງເທິງ ແມ່ນພຣະເຈົ້າຜູ້ເອີ້ນເຮົາ ພຣະອົງເປັນຜູ້ແຕ່ງຕັ້ງໃຫ້ເຮົາອອກໄປເຮັດວຽກງານຂອງພຣະອົງ ພຣະອົງໃຫ້ມະນຸດມີໂອກາດຮັບໃຊ້ພຣະອົງຖວາຍຄວາມຈົງຮັກພັກດີຕໍ່ພຣະອົງ

4.2 ການຮຽກຮ້ອງຈາກພາຍໃນເຮົາ ຜູ້ເຊື່ອທີ່ກັບໃຈບັງເກີດໃຫມ່ ມີພຣະວິນຍານຂອງພຣະເຈົ້າທີ່ຊົງສະຖິດຢູ່ ພຣະວິນຍານຂອງພຣະເຈົ້າທີ່ຢູ່ພາຍໃນຕົວເຮົານີ້ແຫລະ ຮ້າວຈິດໃຈເຮົາໃຫ້ຮ້ອນຮົນໃຫ້ອອກໄປຮັບໃຊ້ປ່າວປະກາດຂ່າວປະເສີດ ທຸກ ໆ ຄົນທີ່ມີຄວາມເຊື່ອແທ້ຈິງຍອມມີປະສົບການອັນນີ້

4.3 ການຮຽກຮ້ອງຈາກພາຍນອກ ເຮົາມອງເຫັນສັງຄົມສິ່ງແວດລ້ອມ ຄວາມສັບສົນວຸ້ນວາຍຄວາມທຸກຍາກລຳບາກ ສົງຄາມ ອິພຍົບລີ້ພັຍ ການອຶດຢາກ ຄວາມບາບ ການໂສໂຄກ ການທຳລາຍການເອົາປຽບ ຄວາມບໍ່ຮູ້ ຄວາມຫລົງຜິດ ການເຈັບປ່ວຍ ຄວາມຕາຍ ສິ່ງເຫລົ່ານີ້ເຮັດໃຫ້ເຮົາຄິດອີຕົນສົງສານ ຄິດເມດຕາເອັນດູຕໍ່ທຸກຄົນທີ່ຕ້ອງປະສົບກັບຄວາມທຸກຍາກ ຊຶ່ງຮຽກຮ້ອງໃຫ້ເຮົາຕ້ອງໄດ້ບົວລະບັດ ແລະຊ່ວຍເຫລືອ

4.4 ການຮຽກຮ້ອງຈາກທາງລຸ່ມ ໃນພຣະທັມລູກາ 16:27 ໄດ້ກ່າວເຖິງຄຳເອີ້ນຮ້ອງຂໍຈາກລາຊະໂຣ ໃຫ້ເຮົາໄປປະກາດຂ່າວປະເສີດຕໍ່ຍາດພີ່ນ້ອງຂອງເຮົາ ເພື່ອວ່າເຂົາຈະໄດ້ຮັບຄວາມພົ້ນ ແລະບໍ່ຕ້ອງໄປຮັບໂທດບາບກັມໃນບ່ອນໄຟນະຣົກ ຄຳຮຽກຮ້ອງຂໍ້ນີ້ຄືງຈະເປັນບົດຮຽນແກ່ເຮົາທັງຫລາຍ ທີ່ຈະບໍ່ມິດເສີຍບໍ່ລະເລີຍໃນການປ່າວປະກາດຂ່າວປະເສີດແກ່ຍາດສະນິດມິດສະຫາຍ ຕລອດຈົນເຖິງເພື່ອນບ້ານໃກ້ເຮືອນຄຽງຂອງເຮົາທັງຫລາຍ ກ່ອນທີ່ຈະສວາຍເກີນໄປ

4.5 ຄຳຮຽກຮ້ອງໃນຖານະທີ່ເຮົາມີຕຳແຫນ່ງຫນ້າທີ່ ເຮົາທຸກຄົນມັກການມີກຽດແລະໄດ້ຕຳແຫນ່ງຫນ້າທີ່ ເປັນຜູ້ຮັບຜິດຊອບວຽກງານໃນຄຣິສຈັກ ເຮົາຕ້ອງສຳນຶກແລະຮັບຜິດຊອບວ່າ ທຸກເທື່ອທີ່ຄຣິສຈັກໄດ້ແຕ່ງຕັ້ງຫນ້າທີ່ແກ່ເຮົານັ້ນ ເຮົາຕ້ອງປະຕິບັດຕົວໃຫ້ສົມກັບຫນ້າທີ່ຕຳແຫນ່ງ ຕ້ອງປ່າວປະກາດເປັນພະຍານໃຫ້ສົມກັບທີ່ໄດ້ຮັບມອບພາຣະຫນ້າທີ່ ບໍ່ແມ່ນເປັນພຽງກັມການຫລືເຈົ້າຫນ້າທີ່ແຕ່ໃນນາມເທົ່ານັ້ນ

## ສອງ. ຂ້າພະເຈົ້າປ່າວປະກາດພຣະຄຣິສ

ຜູ້ທີ່ມີຄວາມເຊື່ອໃນພຣະເຢຊູຄຣິສ ແລະໄດ້ປະສົບການການບັງເກີດໃຫມ່ຢ່າງແທ້ຈິງ ຈະມີຊີວິດ ແລະຄວາມຮູ້ສຶກຢາກປ່າວປະກາດເຣື່ອງຣາວຂ່າວປະເສີດຂອງພຣະເຢຊູຄຣິສ ຢາກເລົ່າສູ່ຍາດຕິພີ່ນ້ອງ ຢາກຢູ່ຮ່ວມກັບພີ່ນ້ອງຄຣິສຕຽນທີ່ມີຄວາມຮ້ອນຮົນ ຢາກຟັງພຣະຄຳຂອງພຣະເຈົ້າ ຢາກຮູ້ຈັກຫລາຍຂຶ້ນ ມີໄຟຂອງພຣະວິນຍານບໍຣິສຸດຂອງພຣະເຈົ້າທີ່ຕິດຢູ່ໃນຈິດໃຈຂອງຕົວເອງ ຢາກເຫັນ ຢາກໃຫ້ພຣະຄຳຂອງພຣະເຈົ້າເຖິງຫູ ເຖິງໃຈຂອງພໍ່ແມ່ອ້າຍນ້ອງ ຣວມທັງຄົນທົ່ວ ໆ ໄປທີ່ເຮົາຮູ້ຈັກ ອາການທີ່ກ່າວມານີ້ແຫລະເປັນອາການຂອງຂ້າພະເຈົ້າຜູ້ຢາກປ່າວປະກາດເຣື່ອງພຣະຄຣິສ

"ຂ້ານ້ອຍຈື່ຄວາມໄດ້ວ່າ ໃນເຊົ້າວັນນັ້ນຫລັງຈາກວັນທີ່ຂ້ານ້ອຍໄດ້ຕ້ອນຮັບພຣະເຢຊູຄຣິສໄວ້ໃນຈິດໃຈຂອງຂ້ານ້ອຍແລ້ວນັ້ນ ຂ້ານ້ອຍຕື່ນເຕັ້ນ ຮ້ອນຮົນໃຈຢາກບອກຫມູ່ສຫາຍເຖິງເຣື່ອງທີ່ຂ້ານ້ອຍຫາກໍ່ໄດ້ຮັບປະສົບການທີ່ຕ້ອນຮັບພຣະເຢຊູຄຣິສໄວ້ໃນຊີວິດຈິດໃຈຂອງຂ້ານ້ອຍ ເຖິງວ່າເວລານັ້ນຂ້ານ້ອຍຍັງອາຍຸນ້ອຍຢູ່ ແຕ່ຂ້ານ້ອຍຮູ້ຈັກພຣະທັມໂຢຮັນບົດທີ່ 3 ຂໍ້ 16 ເຮັດໃຫ້ຂ້ານ້ອຍຮູ້ວ່າພຣະເຈົ້າຊົງຮັກຄົນຫມົດທັງໂລກ ຈຶ່ງໄດ້ສົ່ງພຣະເຢຊູລົງມາຊ່ວຍມະນຸດໃຫ້ຮອດພົ້ນ"

ຄຳພະຍານຂ້າງເທິງຄົງຈະເປັນປະສົບການຂອງຄົນຫລາຍຄົນບໍ່ວ່າທ່ານຈະເປັນຜູ້ເຖົ້າ ເດັກນ້ອຍ ຫລືຄົນທີ່ຍັງຫນຸ່ມຢູ່ກໍຕາມ ຜູ້ທີ່ມີພຣະວິນຍານບໍຣິສຸດຢູ່ ຄົນເຫລົ່ານີ້ຮ້ອນຮົນໃນເຣື່ອງຂ່າວປະເສີດ ແລະຢາກເລົ່າສູ່ໃຫ້ຜູ້ອື່ນຟັງ ທັງຍັງໄດ້ພະຍາຍາມດຳເນີນຊີວິດໃຫ້ຖືກຕ້ອງດີງາມທີ່ສຸດ ເພື່ອບໍ່ໃຫ້ຄົນອື່ນຕຳຫນິ ເພາະຮູ້ສຶກຕົວວ່າເປັນຕົວແທນຂອງພຣະເຈົ້າ ເປັນທູຕແຫ່ງຂ່າວປະເສີດແມ່ນວ່າບໍ່ກ້າອ້າປາກເວົ້າໃຫ້ເຂົາຟັງກໍຕາມ ແຕ່ໃຈແມ່ນຢາກເວົ້າອີຫລີ ຫາກແຕ່ວ່າຄວາມຢ້ານມາກັ້ນເຮົາໄວ້

ເມື່ອຂ້າພະເຈົ້າປ່າວປະກາດຂ່າວປະເສີດຂອງພຣະຄຣິສ ມີເຫດຜົນອັນໃດທີ່ມີຄວາມຮູ້ສຶກຢາກປະກາດ ແຕ່ບໍ່ມີຄວາມກ້າຫານ ຄຳຕອບໃນເຣື່ອງນີ້ແຍກອອກໄດ້ 2 ປະການຄື

**ປະການທຳອິດ** ພຣະລັກສນະຂອງພຣະເຈົ້າທີ່ຢູ່ໃນຕົວເຮົາ (The image of God in our soul) ໃນຄວາມເປັນມະນຸດຂອງເຮົານັ້ນ ແຕ່ຕົ້ນເດີມທີພຣະເຈົ້າໄດ້ສ້າງເຮົາໄວ້ຕາມແບບລັກສນະຂອງພຣະເຈົ້າຕັ້ງແຕ່ອາດາມ ເອວາ ແຕ່ເມື່ອທັມຊາດຂອງມະນຸດຕົກໃນຄວາມບາບແລ້ວ ມະນຸດກໍຂາດຈາກພຣະສີຣິ(ຫລືສງ່າຣາສີ)ຂອງພຣະເຈົ້າ ແລະມະນຸດບໍ່ສາມາດເຂົ້າໃຈນ້ຳພຣະທັຍແລະພຣະປະສົງຂອງພຣະເຈົ້າໄດ້ ແຕ່ເມື່ອມະນຸດກັບຄືນດີຫາພຣະເຈົ້າ ໄດ້ຕ້ອນຮັບເອົາພຣະເຈົ້າເຂົ້າມາໃນຊີວິດ ໃນຈິດວິນຍານຂອງຕົວ ເຮົາໄດ້ພຣະສີຣິແລະສງ່າຣາສີຂອງພຣະເຈົ້າຄືນມາ ໂດຍການສຖິດຢູ່ຂອງພຣະວິນຍານບໍຣິສຸດ ເຮັດໃຫ້ເຮົາເຂົ້າໃຈນ້ຳພຣະທັຍແລະພຣະປະສົງຂອງພຣະເຈົ້າ ເຮັດໃຫ້ເຮົາເກີດໃຈຮ້ອນຮົນເຮັດໃຫ້ເຮົາຢາກເຂົ້າໃກ້ພຣະເຈົ້າ ແລະເຂົ້າໃກ້ພີ່ນ້ອງຄຣິສຕຽນ ແລະຢາກນຳເອົາຄົນອື່ນເຂົ້າມາມີສ່ວນເຂົ້າມາຮັບປະສົບການການບັງເກີດໃຫມ່ ດັ່ງທີ່ເຮົາໄດ້ຮັບແລ້ວ ເພາະວ່າເຮົາໄດ້ຮູ້ຈັກແລະເຂົ້າໃຈພຣະເຈົ້າ ດ້ວຍເຫດນີ້ແຫລະຄວາມຮູ້ສຶກເຣື່ອງການປ່າວປະກາດພຣະຄຣິສຈຶ່ງໄດ້ເກີດຂຶ້ນ ເຮັດໃຫ້ຂ້ານ້ອຍ (ແມ່ນຕົວທ່ານເອງ) ປ່າວປະກາດພຣະຄຣິສ

**ປະກາດທີ່ສອງ** ລັກສນະຂອງມະນຸດ ມະນຸດມີເນື້ອຫນັງຄວາມຮູ້ສຶກກ່ຽວກັບໂລກແລະສັງຄົມທີ່ຢູ່ ເຮົາມີຄວາມອາຍ ມີຄວາມຢ້ານກົວ ຢ້ານຜິດຜູ້ອື່ນ ຢ້ານເຂົາເວົ້ານຳຫລັງ ບໍ່ພຶ່ງພໍໃຈໃນຕົວເອງ ດັ່ງ

ນັ້ນລັກສນະຝ່າຍກາຍຂອງມະນຸດນີ້ເອງເປັນຕົວດຶງຖ່ວງເຮົາໃຫ້ການປ່າວປະກາດເປັນໄປໃນລັກສນະທີ່ຕ້ອງຄ່ອຍເບິ່ງຄ່ອຍຣະວັງ ຖ້າວ່າຄອຍອາສັຍໄຟແຫ່ງພຣະວິນຍານແຕ່ຝ່າຍດຽວບາງເທື່ອຈະເກີດການຮຸນແຮງຈົນເກີນໄປ ອັນນີ້ແຫລະສອນໃຫ້ເຮົາຮູ້ຈັກວ່າການຮູ້ຈັກເປັນພະຍານຢ່າງຖືກຕ້ອງສົມດູນນັ້ນ ຈຶ່ງເປັນສິ່ງຈຳເປັນທີ່ສຸດ ຜູ້ທີ່ເປັນພະຍານຕ້ອງຂໍເພິ່ງຣິດເດດຂອງພຣະເຈົ້າ ແລະອາສັຍພຣະວິນຍານນຳພາ ແລະກໍຕ້ອງໃຫ້ຜູ້ຮັບຟັງນັ້ນຮັບໄດ້ ແລະເຂົ້າໃຈໄດ້ໃນຖານະທີ່ເຂົາຍັງບໍ່ທັນມີປະສົບການດ້ານຄວາມເຊື່ອ ຄືກັບເມັດພືດທີ່ຫາກໍຈະຖືກຫວ່ານລົງໄປແລ້ວໃສ່ປຸຍຫລາຍ ຄວາມແຮງຂອງປຸຍກໍຈະເຮັດໃຫ້ເມັດພືດນັ້ນຕາຍໄປ ຫລືເອົາຜັກອ່ອນ ໆ ຕົ້ມໄຟແຮງ ໆ ຜັກກໍຈະຊ້ຳໄດ້ ດັ່ງນັ້ນ ເຫດຜົນທັງສອງປະການທີ່ກ່າວມາທາງເທິງຈຶ່ງເປັນບົດຮຽນໃຫ້ເຮົາໄດ້ເຂົ້າໃຈເຖິງລັກສນະການຊົງນຳຂອງພຣະເຈົ້າ

## ສາມ. ຄຣິສຈັກຂອງຂ້າພະເຈົ້າປະກາດພຣະຄຣິສ

ຕາມທີ່ເຮົາໄດ້ຮູ້ຈັກແລ້ວວ່າຄຣິສຈັກເປັນສຖາບັນທີ່ສຳຄັນທີ່ສຸດທີ່ພຣະຄຣິສໄດ້ສຖາປນາໄວ້ໃນໂລກນີ້ ເປັນພຣະກາຍທີ່ປາກົດໃຫ້ມະນຸດໄດ້ເບິ່ງເຫັນໄດ້ ເຮັດວຽກສົມພັນກັນແລະກັນ ອັນເປັນການສາມັກຄີທົມກັນ ແລະເປັນຊ່ອງທາງທີ່ມະນຸດສາມາດບົວລະບັດຮັບໃຊ້ພຣະເຈົ້າໂດຍຜ່ານທາງວຽກງານແລະກິຈການຂອງຄຣິສຈັກ ດັ່ງນັ້ນຄຣິສຈັກຈຶ່ງຕ້ອງອາສັຍເຣື່ອງການປະກາດເປັນເຣື່ອງສຳຄັນ ທຸກ ໆ ໜ່ວຍງານໃນຄຣິສຈັກບໍ່ວ່າຈະເປັນດ້ານການສັງຄົມສົງເຄາະ (Social Work) ການລ້ຽງເດັກນ້ອຍ (Day Care) ໂຮງຮຽນວັນອາທິດ (Sunday School) ກິຈການຂອງພໍ່ເຮືອນ (Brotherhood) ຄນະນັກຮ້ອງ (Choir) ຕລອດໄປຈົນເຖິງການນມັສການໃນເຊົ້າວັນອາທິດ ການບົວລະບັດທຸກ ໆ ດ້ານຂອງຄຣິສຈັກມີຈຸດສູນກາງຄືຕ້ອງການນຳຄົນມາເຖິງອົງພຣະຜູ້ເປັນເຈົ້າ ຄຣິສຈັກຕ້ອງມີຫົວໃຈດ້ານການປ່າວປະກາດ ແລະເປັນພະຍານເຖິງຂ່າວປະເສີດຂອງພຣະເຢຊູຄຣິສ ມີຜູ້ເລົ່າເຣື່ອງນຶ່ງຊຶ່ງຂໍອ້າງອີງມາເປັນຄຳສົມທຽບກັບຄຣິສຈັກທີ່ບໍ່ມັກການປະກາດ ບໍ່ມັກເປັນພະຍານດັ່ງນີ້

"ຂ້ອຍເຫັນຊາຍໜຸ່ມນັ່ງຢູ່ໃນເຮືອນ ເບິ່ງໜ້າຂອງລາວງາມເຈົ້າຊູ້ຫລາຍ ລາວໄວ້ຜົມຊົງທັນສມັຍຕາຂອງລາວດຳເສາະໃສ ຄິ້ວດົກ ແຖມຍັງມີຮອຍຍິ້ມທີ່ຮິມປາກ ໜ້າຕາລາວດີ ຂ້ອຍຄິດຢູ່ໃນໃຈ ແຕ່ເມື່ອຂ້ອຍຍ່າງເຂົ້າປະຕູເຮືອນຂອງລາວ ແຕ່ບໍ່ໄດ້ເຫັນລາວຢືນຂຶ້ນຕ້ອນຮັບ ໂອ໋ ຂ້ອຍຮູ້ສຶກຕົກໃຈ ຮ່າງກາຍລາວເບິ່ງອ່ອນແຮງບໍ່ມີກຳລັງ ລາວເປັນເປ້ຽລ່ອຍນີ້ ເຄື່ອນໄຫວໄດ້ແຕ່ຄໍແລະຫົວຂອງເຮົາ ແມ່ນເບິ່ງໜ້າຂອງລາວງາມຫລາຍ ແຕ່ຕົວຂອງລາວບໍ່ຕຶງເລີຍ ຂ້ອຍຮູ້ສຶກວ່າຊີວິດຂອງຊາຍໜຸ່ມຜູ້ນີ້ສົມທຽບກັບຄຣິສຈັກຫລາຍ ໆ ຄຣິສຈັກໃນປັດຈຸບັນ" (ຕົວຢ່າງຈາກ Biblical Basis of Mission ໜ້າ 71 ໂດຍ Avery T. Willis, Jr, Nashville: Tennesse, 1980)

ຄຳສົມທຽບຂ້າງເທິງເຮັດໃຫ້ເຮົາ ເຫັນພາບຂອງຄຣິສຈັກໃນປັດຈຸບັນ ຫາກວ່າຄຣິສຈັກບໍ່ສົນໃຈເຣື່ອງການປ່າວປະກາດຂ່າວປະເສີດແລ້ວ ຄືກັບວ່າ ທາງຫົວມີຊີວິດເຄື່ອນໄຫວໄດ້ຕາມປົກຕິ ແຕ່ເປັນເປ້ຍອ່ອນແຮງທາງຮ່າງກາຍ ບໍ່ມີການເຄື່ອນໄຫວມີຊີວິດຢູ່ແຕ່ບໍ່ແຂງແຮງ

ຄຣິສຈັກຈະປ່າວປະກາດພຣະຄຣິສໄດ້ຍ່ອມຂຶ້ນກັບສມາຊິກທຸກຄົນທີ່ເປັນຕົວປະກອບສ່ວນໃຫ້ເກີດຄຣິສຈັກ ຕົວອາຄານວັຕຖຸສິ່ງຂອງເປັນສ່ວນປະກອບ ເປັນອຸປກອນອຳນວຍຄວາມສະດວກໃນຝ່າຍວັຕຖຸ ແຕ່ຄວາມຈະເຣີນເຕີບໂຕທາງຝ່າຍວິນຍານນັ້ນ ຕ້ອງອາສັຍສມາຊິກຄຣິສຈັກທຸກຄົນມີຄວາມຮ່ວມມືຮ່ວມໃຈກັນ ແລະຮ້ອນຮົນໃນຝ່າຍວິນຍານຮ້ອນຮົນໃນຄວາມເຊື່ອ ແລະຮ້ອນຮົນຢາກນຳຜູ້ຄົນເຂົ້າມາໃກ້ພຣະເຈົ້າ ຈົງຢູ່ຫລາຍ ໆ ເທື່ອເຮົາທໍ້ໃຈເພາະວ່າຜູ້ທີ່ເຮົາອົດທົນໄປນຳເອົາມາເຖິງຄຣິສຈັກນັ້ນຢູ່ບໍ່ພໍເດືອນ

ຫລືບໍ່ພໍປີກໍຫນີຫນ້າເຮົາໄປແລ້ວ ເຮັດໃຫ້ເຮົາອ່ອນແຮງອີກ ເຫດການໃນທໍານອງນີ້ໄດ້ເກີດຂຶ້ນກັບຄຣິສຕຽນເກືອບທຸກຄົນກໍວ່າໄດ້ ແຕ່ສິ່ງທີ່ສໍາຄັນທີ່ສຸດທີ່ຊ່ວຍໃຫ້ເຮົາເຂົ້າໃຈຫລາຍກວ່ານີ້ຄືວ່າ ພຣະເຈົ້າເປັນເຈົ້າຂອງໄຮ່ນາເປັນເຈົ້າຂອງກິຈການຊ່ວຍໃຫ້ຣອດພົ້ນທັງຫມົດ ເຮົາເປັນຜູ້ຕ່າງຫນ້າເປັນຜູ້ຮັບໃຊ້ທີ່ສັດຊື່ ເຮົາມີຫນ້າທີ່ມີຄວາມຮັບຜິດຊອບເພາະພຣະເຈົ້າໄດ້ມອບໃຫ້ແກ່ເຮົາແລ້ວ ບໍ່ວ່າຈະເກີດຜົນຫລືບໍ່ເກີດກໍຕາມ ຂໍໃຫ້ເຮົາໄດ້ເຮັດຕາມນໍ້າພຣະທັຍຂອງພຣະເຈົ້າ ກໍເປັນສິ່ງທີ່ພຣະເຈົ້າຄາດຫວັງເອົາຈາກເຮົາ ພຣະອົງບໍ່ໄດ້ເບິ່ງທີ່ຜົນສໍາເຣັດ ແຕ່ພຣະອົງຊົງເບິ່ງເຫັນຄວາມຈິງໃຈ ຄວາມຕັ້ງໃຈຂອງເຮົາ ພຣະອົງໄດ້ເຮັດໃຫ້ແຜນການການຊ່ວຍມະນຸດໃຫ້ຣອດພົ້ນສໍາເຣັດແລ້ວເທິງໄມ້ກາງເຂນ ອັນເປັນພາກສ່ວນທີ່ຍາກຫລາຍທີ່ສຸດ ສ່ວນຂອງເຮົາກໍຍາກຢູ່ພຣະເຈົ້າຊົງເຂົ້າໃຈພຣະອົງຈຶ່ງໄດ້ປະທານພຣະວິນຍານບໍຣິສຸດມາເປັນຜູ້ຊ່ວຍເຮົາ ພຣະອົງໄດ້ເອີ້ນຜູ້ຮັບໃຊ້ທີ່ສັດຊື່ ຍອມເສັຍສລະຈາກຫລາຍຊາດຫລາຍພາສາ ມາໃຫ້ເຮົາໄດ້ເຫັນໄດ້ສຶກສາໄດ້ເຂົ້າໃຈ ເພື່ອວ່າເຮົາຈະມີພາກສ່ວນອັນສໍາຄັນໃນພຣະກາຍຂອງພຣະຄຣິສ ຄຣິສຈັກຊຶ່ງມີພຣະຄຣິສເປັນສີສະ ແລະເຮົາທັງຫລາຍຜູ້ເຊື່ອປະກອບຕົວກັນຂຶ້ນເປັນພຣະກາຍຂອງພຣະອົງ ເມື່ອສມາຊິກທຸກຄົນຮ້ອນຮົນປ່າວປະກາດພຣຄຣິສ ຄຣິສຈັກກໍປະກາດພຣະຄຣິສຢູ່ໃນຕົວເອງ

# ປື້ມອັສຈັນ

ປື້ມອັສຈັນ ມີສີຕ່າງ ໆ ກັນຫລາຍສີ ເປັນປຶ້ມທີ່ບໍ່ມີຕົວໜັງສື ແຕ່ມີຄວາມອັສຈັນ ທີ່ສາມາດໃຊ້ເລົ່າເຣື່ອງຣາວຂ່າວປະເສີດຂອງພຣະເຢຊູຄຣິສມາດົນນານກວ່າ 130 ປີ ໂດຍທ່ານ Charles Surgeon ໃນ ຄ.ສ. 1866 ຫລັງຈາກນັ້ນເກົ້າປີ ທ່ານ D.L. Moody ໄດ້ໃຊ້ປຶ້ມອັສຈັນນຳເດັກນ້ອຍປະມານ 12,000 ຄົນ ນາງ Ruth Overholtzer ພັຣຍາຂອງທ່ານ J. Irvin Overholtzer ຜູ້ຊຶ່ງກໍ່ຕັ້ງຄນະເຜີຍແຜ່ຄຣິສສາສນາແກ່ເຍົາວະຊົນໄດ້ຄົ້ນພົບແລະຮຽບຮຽງຈັດພິມຂຶ້ນໃຫມ່ໃນປີ 1924 ຄນະນີ້ໄດ້ໃຊ້ປື້ມອັສຈັນນີ້ເປັນອຸປກອນສຳຄັນໃນການນຳເດັກນ້ອຍໃຫ້ເຂົ້າໃຈເຖິງຂ່າວປະເສີດຂອງພຣະເຢຊູຄຣິສ ແລະຕ້ອນຮັບເອົາພຣະອົງໄວ້ເປັນພຣະຜູ້ຊ່ວຍໃຫ້ຣອດພົ້ນ ຄຳອະທິບາຍປື້ມອັສຈັນເປັນພາສາລາວນີ້ໄດ້ເຮັດຂຶ້ນເພື່ອຜູ້ນຳຄຣິສຈັກ ຫລືຜູ້ສອນພຣະຄຳຂອງພຣະເຈົ້າຈະສາມາດນຳເອົາໄປໃຊ້ສອນແລະນຳພາເດັກນ້ອຍໄດ້ເຂົ້າໃຈເຖິງຂ່າວປະເສີດ ຫາກວ່າທ່ານຈະນຳໄປໃຊ້ກັບຜູ້ໃຫຍ່ ຫລືຜູ້ເຖົ້າ ຫລືເດັກນ້ອຍ ກໍຈຳເປັນຕ້ອງແປງແລະເຕີ່ມແຕ່ງຄຳເວົ້າໃຫ້ເຫມາະສົມກັບຄົນແຕ່ລະວັຍ

ປື້ມອັສຈັນ ແຕ່ລະໜ້າມີສີຕ່າງ ໆ ກັນ ຄື ສີທອງ ສີດຳ ສີແດງ ສີຂາວ ແລະສີຂຽວ ແຕ່ລະສີຈະມີຄວາມຫມາຍທີ່ເປັນສັນຍາລັກແຫ່ງຄຳສອນທີ່ປາກົດໃນພຣະຄັມພີ ແຕ່ລະໜ້າຈະມີຂໍ້ພຣະຄັມພີທີ່ສຳຄັນຊຶ່ງເປັນຫົວໃຈຂອງຂ່າວປະເສີດ ຜູ້ເລົ່າຫລືຜູ້ສອນປື້ມອັສຈັນນີ້ຕ້ອງຈື່ຈຳຂໍ້ພຣະຄັມພີແລະເນື້ອເຣື່ອງໄວ້ໃນໃຈ ຊຶ່ງແມ່ນວ່າອາດຈະບໍ່ສາມາດຈື່ຈຳໄດ້ສົມບູນທຸກຄຳເວົ້າຕາມຂໍ້ພຣະຄັມພີ ແຕ່ຕ້ອງໃຫ້ໄດ້ເນື້ອນັຍທີ່ໃກ້ຄຽງທີ່ສຸດ ແລະຕ້ອງໄດ້ຈຸດສຳຄັນຂອງເຣື່ອງ

# ວິທີການສອນຫລືເລົ່າເຣື້ອງ
# ປຶ້ມອັສຈັນ

**ຄຳນຳ**

ຜູ້ສອນ: ຕາມທັມມະດາແລ້ວປຶ້ມໜັງສືຕ້ອງມີຕົວອັກສອນ ຫລືຕົວໜັງສື ຂຽນຢູ່ໃນປຶ້ມ ແມ່ນບໍ່

ຜູ້ຟັງ: ແມ່ນ

ຜູ້ສອນ: ແຕ່ມື້ນີ້ ຈະຂໍສະແດງປຶ້ມອັສຈັນທີ່ສຸດ ແມ່ນປຶ້ມນີ້ (ຈົກອອກມາໃຫ້ຜູ້ຟັງເບິ່ງ) ເປັນປຶ້ມທີ່ບໍ່ມີຕົວໜັງສື ບໍ່ມີຮູບພາບປາກົດໃຫ້ເຫັນ (ເປີດໃຫ້ເບິ່ງຫລາຍ ໆ ໜ້າ) ແຕ່ປຶ້ມນີ້ສາມາດເລົ່າເຣື້ອງສຳຄັນທີ່ສຸດ ທີ່ພຣະເຈົ້າຕ້ອງການໃຫ້ມະນຸດທຸກຄົນໄດ້ຮູ້ຈັກ ເຮົາເອີ້ນປຶ້ມນີ້ວ່າ "ປຶ້ມອັສຈັນ"

ຜູ້ຟັງ: (ນັ່ງເບິ່ງ ຕັ້ງໃຈຟັງ)

ຜູ້ສອນ: ຕາມທັມມະດາເວລາເຮົາຈົກປຶ້ມໃດ ປຶ້ມນຶ່ງຂຶ້ນມາ ເຮົາຈະເຫັນສອງໜ້າແລກແມ່ນບໍ່ ຄື ໜ້າປົກ ແລະຫລັງປົກ (ສະແດງໃຫ້ຜູ້ຟັງໄດ້ເບິ່ງ)

## ໜ້າສີທອງ

ສຳລັບປຶ້ມອັສຈັນນີ້ເຮົາເຫັນໜ້າປົກແລະຫລັງປົກເປັນສີທອງ ຊຶ່ງເຕືອນໃຈແກ່ເຮົາເຖິງເຣື້ອງຂອງສວັນ ພຣະເຢຊູຕັດວ່າ

"ໃນຜາສາດພຣະບິດາຂອງເຮົາມີທີ່ຢູ່ຫລາຍບ່ອນ ຖ້າບໍ່ມີເຮົາຄົງໄດ້ບອກພວກທ່ານແລ້ວ ເພາະເຮົາໄປຈັດແຈງບ່ອນໄວ້ສຳລັບທ່ານທັງຫລາຍ ເມື່ອເຮົາໄປຈັດແຈງບ່ອນໄວ້ສຳລັບພວກທ່ານແລ້ວ ເຮົາຈະກັບມາອີກຮັບທ່ານໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດພວກທ່ານຈະຢູ່ທີ່ນັ້ນເໝືອນກັນ" (ຢຮ 14:2-3)

ເມື່ອຕອນທີ່ພຣະເຢຊູເປັນຂຶ້ນຈາກຕາຍແລ້ວ ພຣະອົງກຳລັງຈະໄດ້ສະເດັດຂຶ້ນສູ່ສວັນ ພຣະອົງບອກກັບພວກສາວົກວ່າ ພຣະອົງຈະສະເດັດຄືນມາໃໝ່ ມາຮັບພວກເຮົາໄປສວັນກັບພຣະອົງ ຜູ້ທີ່ຈະໄດ້ໄປສວັນແມ່ນຜູ້ທີ່ເຊື່ອພຣະເຢຊູຄຣິສ ຄົນທັງຫລາຍທີ່ໄດ້ເຊື່ອພຣະເຢຊູທັງທີ່ກຳລັງມີຊີວິດຢູ່ ຫລືທີ່ຕາຍໄປແລ້ວ ກໍຈະເປັນຂຶ້ນມາຈາກຄວາມຕາຍ ພຣະເຢຊູຈະຮັບເຂົາໄປຢູ່ເທິງສວັນອັນເປັນບ່ອນບໍຣິມສຸກກະເສມ ທີ່ນັ້ນເປັນບ່ອນທີ່ພຣະເຈົ້າຊົງສຖິດຢູ່ກັບຜູ້ທີ່ເຊື່ອພຣະອົງຈະໄດ້ຮັບແຕ່ຄວາມສຸກສຳຣານ ແລະພຣະອົງຈະປະທານພຣະພອນແລະບຳເໜັດຣາງວັນແກ່ເຮົາທັງຫລາຍ ທີ່ນັ້ນເຮົາຈະບໍ່ມີຄວາມຕາຍອີກແລະບໍ່ມີການຮ້ອງໄຫ້ເສັຽໃຈ ບໍ່ມີຄວາມທຸກບໍ່ມີການເຈັບເປັນ ແຕ່ເປັນບ່ອນແຫ່ງສັນຕິສຸກແລະມີຄວາມງາມຫລາຍທີ່ສຸດ ປະຕູບົນສວັນເຮັດດ້ວຍໄຂ່ມຸກຖນົນກໍປູດ້ວຍທອງຄຳ ພວກເຮົາຢາກໄປບໍ (ເບິ່ງພຣະທັມພຣະນິມິດ 21:10-27 ເຕີ່ມ ເພື່ອຄວາມເຂົ້າໃຈແຈ້ງຂອງຕົວຜູ້ສອນ) ເປີດ

## ໜ້າສີດຳ

ໜ້າເສັຽດາຍອີຫລີ ເຖິງວ່າພວກເຮົາຢາກໄປ ແຕ່ໄປບໍ່ໄດ້ ໜ້າສີດຳນີ້ບອກເຮົາວ່າ ມະນຸດໄປເຖິງພຣະເຈົ້າບໍ່ໄດ້ ເພາະມະນຸດຕົກໃນຄວາມມືດ ແລະເຮັດບາບໃຈດຳເໝືອນໜ້າສີດຳນີ້ ມະນຸດເນຣະຄຸນບໍ່ຢາກຮູ້ຈັກພຣະເຈົ້າ ບໍ່ຕ້ອນຮັບພຣະເຈົ້າ ພຣະທັມໂຣມ 3:23 ກ່າວວ່າ

"ດ້ວຍວ່າຄ່າຈ້າງຂອງຄວາມຜິດບາບຄືຄວາມຕາຍ ແຕ່ຂອງພຣະຣາຊທານອັນໂຜດມາແຕ່ພຣະເຈົ້າ ກໍຄືຊີວິດອັນຕລອດໄປເປັນນິດໃນພຣະຄຣິສຄືພຣະເຢຊູເຈົ້າຂອງພວກເຮົາ"

ໃຜແດ່ຢາກຢູ່ໃນຄວາມມືດ ຫລືຢູ່ໃນຄວາມບາບ ບໍ່ມີຈັກຄົນດອກຢາກຢູ່ນຳຄວາມມືດຫລືຢາກຢູ່ນຳຄວາມບາບ ໃຜກໍຢາກຢູ່ນຳຄວາມສວ່າງ ຢາກຢູ່ນຳພຣະເຈົ້າ ເພາະພຣະເຈົ້າເປັນຄວາມສວ່າງ ໃນພຣະເຈົ້າຄວາມມືດບໍ່ມີຄວາມບາບກໍບໍ່ມີຄືກັນ ຫລາຍກວ່ານັ້ນອີກ ພຣະເຈົ້າຊົງຮັກເຮົາ ຊົງຮັກມະນຸດ ພຣະອົງບໍ່ດີໃຈທີ່ເຫັນມະນຸດຕົກຢູ່ໃນຄວາມມືດຫລືຄວາມບາບ ແຕ່ພຣະ

ອົງຕ້ອງການໃຫ້ເຮົາມາພົບກັບຄວາມສວ່າງ ກັບຄືນມາພໍ້ກັບພຣະອົງ ພຣະອົງຕ້ອງການໃຫ້ເຮົາຕ້ອນຮັບພຣະອົງ ແລະມີຊີວິດຢູ່ນໍາພຣະອົງ ພຣະເຢຊູເປັນພຣະບຸດຂອງພຣະເຈົ້າ ເຮົາກໍຈະໄດ້ເປັນເຈົ້າຟ້າຍິງແລະເຈົ້າຟ້າຊາຍ ພວກເຮົາຈະມີສິດໄດ້ຂຶ້ນໄປເທິງຟ້າ ຂຶ້ນໄປເທິງສວັນ ເມື່ອເຮົາຕ້ອງລາຈາກໂລກນີ້ໄປ ເຮົາກໍບໍ່ຕ້ອງຢ້ານວ່າ ເຮົາຈະຕົກນະຮົກຫມົກໄໝ້ ແຕ່ຈະໄດ້ໄປຢູ່ສວັນທາງເທິງ ທີ່ມີແຕ່ຄວາມສຸກສະບາຍດັ່ງນັ້ນແຫລະ ເປີດ

## ຫນ້າສີແດງ

ພຣະທັມໂຣມ 3:16 ຈຶ່ງໄດ້ສອນເຮົາວ່າ "ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ"

ພຣະເຢຊູຄຣິສໄດ້ຍາດເອົາເຮົາແລະໄຖ່ເຮົາອອກຈາກບາບ ອອກຈາກຄວາມມືດ ມາສູ່ຄວາມສວ່າງ ມາສູ່ຄວາມຈິງຂອງພຣະເຈົ້າ ພຣະເຢຊູຮັກເຮົາຫລາຍທີ່ສຸດ ພຣະທັມໂຢຮັນສະບັບຕົ້ນ 1:7 ກ່າວອີກວ່າ "ພຣະໂລຫິດຂອງພຣະເຢຊູຄຣິສພຣະບຸດຂອງພຣະອົງໄດ້ຊົງຊໍາຣະເຮົາທັງຫລາຍຈາກຜິດບາບຫມົດສິ້ນ" ຫາກວ່າເຮົາຍອມເຊື່ອຟັງພຣະອົງ ຍອມສາຣະພາບບາບແລະຂໍພຣະອົງຍົກໂທດໂຜດເຮົາໃຫ້ພົ້ນບາບ ເຮົາຈໍາເປັນຕ້ອງໄດ້ຕ້ອນຮັບພຣະເຢຊູເຂົ້າມາໃນຊີວິດໃນຈິດໃຈຂອງເຮົາແລ້ວ ພຣະທັມໂຢຮັນສະບັບຕົ້ນ 1:7 ບອກວ່າ ພຣະໂລຫິດຂອງພຣະອົງກໍຈະເປັນຄ່າໄຖ່ແກ່ເຂົາທັງຫລາຍ ເຮັດໃຫ້ເຮົາຂາວສະອາດບໍ່ມີບາບ ຫມົດກັມ ຫມົດເວຣ ເພາະວ່າພຣະເຢຊູໄດ້ຕາຍໄຖ່ບາບເຮົາແລ້ວເທິງໄມ້ກາງແຂນ

## ຫນ້າສີຂາວ

ສິ່ງທີ່ນ່າອັສຈັນທີ່ສຸດ ແມ່ນວ່າ ເມື່ອເຮົາໄດ້ຕ້ອນຮັບພຣະເຢຊູຄຣິສເປັນພຣະຜູ້ຊ່ວຍໃຫ້ຣອດພົ້ນແລ້ວ ພຣະອົງສັນຍາວ່າຈະປະທານຊີວິດທີ່ເກີດ

ໃຫມ່ແກ່ເຮົາ ໃຫ້ເຮົາຕັ້ງຕົ້ນຊີວິດໃຫມ່ທີ່ຂາວສະອາດກັບພຣະອົງ ພຣະທັມໂຢຮັນສະບັບຕົ້ນ 1:9 ບອກແກ່ເຮົາວ່າ

"ຖ້າເຮົາທັງຫລາຍສາຣະພາບຜິດບາບຂອງພວກເຮົາ ພຣະອົງຊົງສັດຊື່ແລະທ່ຽງທັມ ຈະຊົງໂຜດຍົກບາບຂອງພວກເຮົາ ແລະຈະຊົງໂຜດຊໍາຣະລ້າງເຮົາທັງຫລາຍຈາກການອະທັມຫມົດສິ້ນ"

ຜູ້ທີ່ຕ້ອນຮັບພຣະອົງຈະໄດ້ຮັບພຣະວິນຍານບໍຣິສຸດຂອງພຣະເຈົ້າມາສຖິດຢູ່ໃນຊີວິດໃນຈິດໃຈຂອງເຮົາ ຊື່ຂອງເຮົາຈະຖືກຈົດໄວ້ໃນທະບຽນແຫ່ງຊີວິດ (ພນ 3:5) ເຮົາຈະມີຊີວິດອັນຕລອດໄປເປັນນິດ ເຫມືອນດັ່ງທີ່ພຣະເຢຊູໄດ້ຊົງເປັນຂຶ້ນຈາກຕາຍ ແລະໄດ້ສະເດັດຂຶ້ນສູ່ສວັນ ພຣະອົງເປັນພຣະເຈົ້າທີ່ມີຊີວິດເປັນຢູ່ຕລອດໄປ

[ໃຫ້ຢຸດສອນ]

ແລ້ວຖາມຜູ້ຟັງວ່າເຂົາຄິດເຫັນແນວໃດ ມີຄໍາຖາມຫລືບໍ່ ໃຫ້ຜູ້ສອນກ່າວຄໍາເຊີນຊວນໃຫ້ຜູ້ຟັງໄດ້ເຂົ້າໃຈ ແລະພ້ອມທີ່ຈະຕ້ອນຮັບພຣະເຢຊູຄຣິສ ຖ້າຜູ້ຟັງພ້ອມທີ່ຈະເຊື່ອ ກໍຂໍໄດ້ນໍາຜູ້ຟັງຮັບເຊື່ອ ໂດຍການອະທິຖານນໍາກັນດ້ວຍຄໍາອະທິຖານງ່າຍ ໆ ດັ່ງນີ້

"ຂໍພຣະເຈົ້າຜູ້ມີຣິດເດດສູງສຸດໄດ້ໂຜດຍົກບາບຜິດຂອງຂ້ານ້ອຍ ແລະປະທານຊີວິດໃຫມ່ແກ່ຂ້ານ້ອຍ ທີ່ຈະຕັ້ງຕົ້ນເດີນໄປກັບພຣະອົງທຸກມື້ ຂໍພຣະອົງຊົງສຖິດຢູ່ນໍາຂ້ານ້ອຍ ຂ້ານ້ອຍຂໍເປັນບຸດຂອງພຣະອົງຕລອດໄປ ອະທິຖານມາໃນນາມພຣະເຢຊູຄຣິສ ອາເມນ"

## ຫນ້າສີຂຽວ

ພຣະທັມເປໂຕສະບັບສອງ 3:18 ກ່າວວ່າ "ແຕ່ຂໍໃຫ້ທ່ານທັງຫລາຍຈະເຣີນຂຶ້ນໃນພຣະຄຸນແລະໃນຄວາມຮູ້ ຊຶ່ງມາຈາກພຣະເຢຊູຄຣິສອົງພຣະຜູ້ເປັນເຈົ້າ ພຣະຜູ້ໂຜດໃຫ້ພົ້ນຂອງເຮົາທັງຫລາຍ ພຣະກຽດຈົ່ງມີແດ່ພຣະ

ອົງນັ້ນທັງໃນປັດຈບັນແລະຕລອດໄປເປັນນິດ"

ຫນ້າສີຂຽວນີ້ ເຕືອນເຮົາໃຫ້ຮູ້ຈັກວ່າ ເມື່ອເຮົາໄດ້ຕ້ອນຮັບພຣະເຢຊູຄຣິສແລ້ວ ເຮົາທັງຫລາຍຈະໄດ້ຊີວິດໃຫມ່ ຊີວິດເກົ່າເຮົາຖິ້ມແລ້ວ ຄືກັບຕົ້ນໄມ້ທີ່ເກີດຊີວິດໃຫມ່ ປົ່ງໃບຂຽວອອກຮັບແສງແດດແລະຈະເຣີນເຕີບໂຕໂດຍການອ່ານພຣະຄຳຂອງພຣະເຈົ້າໂດຍການໄປເຊີດ ແລະໂດຍການສາມັກຄີທັມກັບພີ່ນ້ອງຄຣິສຕຽນ ເຮົາຕ້ອງມີຊີວິດທີ່ເກີດຜົນອອກໃບຂຽວ ບໍ່ຮ່ຽວແຫ້ງ ບໍ່ທຸກອຸກໃຈຢູ່ຜູ້ດຽວ ແຕ່ເຮົາຕ້ອງເຂົ້າເຝົ້າພຣະເຈົ້າເປັນປະຈຳ ຕ້ອງອ່ານພຣະຄັມພີ ຕ້ອງຮຽນຮູ້ຈັກການອ້ອນວອນບໍ່ຂາດ ເຮົາຈະຮຽນຮູ້ຈັກພຣະເຢຊູຫລາຍຂຶ້ນແລະໃຫ້ພຣະອົງແປງຊີວິດຂອງເຮົາໃຫ້ດີຂຶ້ນທຸກມື້ ໂດຍການເຊື່ອຟັງທຳຕາມພຣະບັນຊາຂອງພຣະອົງ ອັນນີ້ແຫລະແມ່ນການຈະເຣີນເຕີບໂຕໃນຊີວິດທີ່ເກີດໃຫມ່ໃນພຣະເຈົ້າ ແລະເຮົາເອີ້ນຕົວເຮົາວ່າເປັນຄຣິສຕຽນ ຄືຜູ້ຕິດຕາມພຣະຄຣິສ ເພາະວ່າໃນມື້ສຸດທ້າຍເຮົາຈະໄດ້ໄປຢູ່ນຳພຣະເຈົ້າ (ປິດປຶ້ມໃຫ້ເຫັນຫນ້າສີທອງອີກ) ພວກເຮົາຈະໄດ້ຄອບຄອງມໍຣະດົກທີ່ພຣະເຈົ້າສັນຍາຈະປະທານໃຫ້ແກ່ເຮົາ ຄືແຜ່ນດິນສວັນແລະຊີວິດອັນຕລອດໄປເປັນນິດ ເພາະວ່າພຣະເຈົ້າໄດ້ໄຖ່ເຮົາໃຫ້ພົ້ນຈາກບາບກັມເວນຂອງນະຣົກແລ້ວ ແລະເຮົາທັງຫລາຍໄດ້ເປັນບຸດຂອງພຣະເຈົ້າ ອາເມນ

**ປື້ມອັສຈັນນີ້**

[illegible]

ໄດ້ຮຽບຮຽງຂຶ້ນຈາກປະສົບການການສອນທີ່ໄດ້ຮັບໃຊ້ພຣະເຈົ້າ
ໃນຄນະເຜີຍແຜ່ຄຣິສສາສນາແກ່ເຍົາວະຊົນໃນປະເທດໄທຍ໌ເກືອບສິບປີ

ຈັດພິມໂດຍ
**ໂຮງຮຽນພຣະຄຣິສທັມລາວ**

# ບົດທີ 5

## ພຣະວິນຍານບໍຣິສຸດນຳພາໃຫ້ເກີດໝາກຜົນ
## ວິທີການເກັບກ່ຽວຜົນແລະການທະນອມວິນຍານ

### ນຶ່ງ. ພຣະວິນຍານບໍຣິສຸດນຳພາໃຫ້ເກີດໝາກຜົນ

ວິທີການປະກາດຂ່າວປະເສີດມີຫລາຍວິທີ ຫລາຍຮູບແບບ ຕາມແຕ່ຜູ້ທີ່ມີຄວາມສາມາດເປັນພິເສດໄດ້ສຶກສາຄົ້ນຄວ້າຫາປະສົບການມາ ບໍ່ວ່າຈະເປັນວິທີການແບບໃດກໍຕາມ ການປ່າວປະກາດຈະເກີດໝາກຜົນຝ່າຍວິນຍານໄດ້ນັ້ນ ຈຳເປັນຕ້ອງເພິ່ງອາສັຍພຣະວິນຍານບໍຣິສຸດເປັນຜູ້ນຳພາໃຫ້ເກີດໝາກຜົນ ຫລາຍເທື່ອເຮົາພົບວ່າ ການປ່າວປະກາດທີ່ມີແຕ່ວິທີການເທົ່ານັ້ນ ຈະເຮັດໃຫ້ຂາດຣິດເດດ ຂາດການນຳພາຂອງພຣະວິນຍານບໍຣິສຸດ ບາງເທື່ອເກີດຜົນພຽງຊົ່ວຄາວບໍ່ຍັ້ງຢືນ ເຮັດໃຫ້ຜູ້ປ່າວປະກາດຂ່າວປະເສີດທໍ້ອົກທໍ້ໃຈ ໝົດຄວາມຫວັງທີ່ຈະນຳຜູ້ນຶ່ງຜູ້ໃດໃຫ້ມາເຖິງພຣະເຈົ້າ ເຮົາທັງຫລາຍຮູ້ດີວ່າວຽກງານການປ່າວປະກາດຂ່າວປະເສີດ ແລະການນຳຄົນທີ່ຫລົງເສັຽມາເຖິງພຣະເຈົ້ານັ້ນ ເປັນນໍ້າພຣະທັຍແລະພຣະປະສົງຂອງພຣະອົງ ພຣະເຈົ້າເປັນເຈົ້າຂອງວຽກງານ ແລະເປັນແຜນການທີ່ພຣະອົງຕ້ອງການຊ່ວຍມະນຸດໃຫ້ຣອດພົ້ນ ເຮົາຜູ້ເຊື່ອທັງຫລາຍເປັນດັ່ງຄົນງານ ຫລືອຸປະກອນ ທີ່ພຣະເຈົ້າໃຊ້ເຮົາທັງຫລາຍ ເປັນຜູ້ຮ່ວມງານກັບພຣະອົງດ້ວຍເຫດນີ້ພຣະເຈົ້າຈຶ່ງຕ້ອງເປັນຜູ້ຮັບຮູ້ ເປັນຜູ້ຮັບຜິດຊອບນຳພາໃຫ້ເກີດຜົນໂດຽຣິດເດດ ແລະການນຳພາຂອງພຣະວິນຍານບໍຣິສຸດ ພຣະອົງພ້ອມຢູ່ສະເໝີທີ່ຈະຊ່ວຍເຮົາໃນທຸກຍາມ ໃຫ້ຜູ້ເຊື່ອໄດ້ປ່າວປະກາດຂ່າວປະເສີດ ແຕ່ຫາກວ່າ ມີບາງເທື່ອທີ່ປະກາດແລ້ວບໍ່ເກີດຜົນທັ້ງ ໆ ທີ່ຜູ້ປ່າວປະກາດໄດ້ເຮັດຖືກຕ້ອງທຸກຢ່າງ ແລະພຣະວິນຍານກໍໄດ້ຊົງນຳພາແລ້ວ ແຕ່ຍັງບໍ່ເກີດຜົນອີກ ສະນັ້ນກໍແມ່ນວ່າຜູ້ຟັງບໍ່ຍອມຮັບເອົາຂ່າວປະເສີດ ບໍ່ຍອມເປີດຈິດໃຈໃຈຕ້ອນຮັບພຣະເຈົ້າດັ່ງນັ້ນແລ້ວເຮົາຈະພົບວ່າການປ່າວປະກາດທີ່ເກີດຜົນພ້ອມສົມບູນໄດ້ນັ້ນມີຢູ່ 3 ພາກສ່ວນຄື ພຣະວິນຍານບໍຣິສຸດນຳພາ ຜູ້ປະກາດໄດ້ຕຽມຕົວພ້ອມແລ້ວທີ່ຈະປະກາດພຣະຄຳຂອງພຣະເຈົ້າ ແລະຜູ້ຟັງພ້ອມທີ່ຈະຕ້ອນຮັບເອົາ

### ສອງ. ໜ້າທີ່ຂອງພຣະວິນຍານບໍຣິສຸດ

#### ກ. ເສີມພລັງອຳນາດໃນການປະກາດ

ກິຈການ 1:8 ກ່າວວ່າ "ແຕ່ທ່ານທັງຫລາຍຈະໄດ້ຮັບພຣະຣາຊທານຣິດເດດ ເມື່ອພຣະວິນຍານບໍຣິສຸດ ຈະສະເດັດມາເຖິງພວກທ່ານ ແລະພວກທ່ານຈະເປັນພະຍານ ຝ່າຍເຮົາໃນກຸງເຢຣູຊາເລັມຕລອດທົ່ວແຂວງຢູດາຍກັບແຂວງຊາມາເຣັຽ ແລະຈົນເຖິງທີ່ສຸດປາຍແຜ່ນດິນໂລກ" ເພາະເຫດວ່າພຣະ

ວິນຍານບໍລິສຸດ ຂອງພຣະເຈົ້າ ສາມາດເສີມແຮງໃຫ້ເຮົາປ່າວປະກາດພຣະຄຣິສ ໄດ້ດ້ວຍຈິດໃຈທີ່ກະຕືລືລົ້ນ ແລະຊົມຊື່ນຍິນດີມີພລັງອຳນາດ ເຮັດໃຫ້ການປະກາດເກີດຜົນດີຫລາຍ ກວ່າການເຮັດໄປຕາມວິທີການຂອງມະນຸດຊື່ ໆ ຫລືເຮັດຮຽນແບບຜູ້ອື່ນ ໃນພຣະທັມກິຈການ ໄດ້ກ່າວເຖິງທ່ານເປໂຕ ທີ່ເທສນາປ່າວປະກາດຂ່າວປະເສີດໂດຍຣິດເດດ ແລະການນຳພາຂອງພຣະວິນຍານບໍລິສຸດ (ກິຈການ 2:41)

ພຣະທັມມັດທາຍ 12:28 ພຣະເຢຊູໄດ້ອ້າງເຖິງຣິດເດດອຳນາດທີ່ພຣະອົງໃຊ້ໃນການຂັບໄລ່ຜີວ່າເປັນຣິດເດດຈາກພຣະເຈົ້າ ຊຶ່ງພຣະເຢຊູຄຣິສໄດ້ອາສັຍຣິດເດດຂອງພຣະວິນຍານບໍລິສຸດໃຫ້ນຳຫນ້າຜູ້ເຊື່ອໂດຍສະຖິດຢູ່ ແລະນຳພາໃຫ້ເກີດຜົນໃນຕົວຂອງຜູ້ເຊື່ອທີ່ຕິດຕາມພຣະອົງ ໃນເວລາທີ່ພຣະເຢຊູສົ່ງສາວົກ 12 ຄົນ ແລະຜູ້ເຊື່ອອີກ 70 ຄົນໃຫ້ອອກໄປປະກາດເປັນຄູ່ ໆ (ລູກາ 9:1-6, 10:1-24) ແລະພວກເຂົາໄດ້ອອກປ່າວປະກາດ ໂດຍຣິດເດດຂອງພຣະວິນຍານບໍລິສຸດ ສາມາດຂັບໄລ່ຜີ ແລະສາມາດເຮັດໃຫ້ຄົນເຈັບປ່ວຍດີພະຍາດໄດ້ ອັນເປັນການອັດສະຈັນຢ່າງໃຫຍ່ຫລວງ

ດັ່ງນັ້ນແລ້ວໃນເວລາທີ່ເຮົາອອກປ່າວປະກາດຂ່າວປະເສີດ ເຮົາຕ້ອງສຳນຶກວ່າພຣະວິນຍານບໍລິສຸດເປັນແຫລ່ງພລັງອຳນາດ ອັນສູງສຸດ ທີ່ເຮົາຕ້ອງອ້ອນວອນ ຂໍການຊົງນຳພາ ແລະຕ້ອງສຳນຶກຢູ່ສະເມີວ່າ ອົງພຣະວິນຍານບໍລິສຸດ ແມ່ນຜູ້ນຳພາໃຫ້ເກີດຜົນ ບໍ່ແມ່ນຕົວເຮົາ ເຮົາເປັນພຽງກະບອກສຽງຫລືເຄື່ອງມືທີ່ພຣະເຈົ້າໃຊ້ ເປັນດັ່ງທໍ່ນ້ຳທີ່ນຳເອົານ້ຳບໍລິສຸດ ໃສສະອາດມາສູ່ມວນມະນຸດ ຫລືນຳເອົາພຣະຄຳແຫ່ງຄວາມຈິງຂອງພຣະເຈົ້າມາເປີດເຜີຍ ໃຫ້ມະນຸດໄດ້ຮັບຟັງແລະຕ້ອນຮັບເອົາໄວ້ ຫາກວ່າເຮົາມີຄວາມເຂົ້າໃຈ ຢ່າງຖືກຕ້ອງດັ່ງນີ້ແລ້ວ ບໍ່ວ່າເຮົາຈະຍ່າງໄປທາງໃດຫລືພົບພໍ້ກັບໃຜ ເຮົາຕ້ອງມີຄວາມຕັ້ງໃຈແລະວ່ອງໄວຕໍ່ການນຳພາຂອງພຣະວິນຍານບໍລິສຸດ ໂດຍພ້ອມສະເມີທີ່ຈະໃຫ້ພຣະວິນຍານໄດ້ໃຊ້ຕົວເຮົາໃນການປ່າວປະກາດທັງໂດຍທາງສ່ວນຕົວ ຫລືກັບຄົນທີ່ເປັນກຸ່ມໃຫຍ່

ຜູ້ເຊື່ອທຸກຄົນມີສິດເທົ່າທຽມກັນຫມົດໃນການ "ສະແວງຫາຣິດເດດຈາກພຣະວິນຍານບໍລິສຸດ" ເພື່ອໃຊ້ໃນການປ່າວປະກາດຂ່າວປະເສີດໃຫ້ເກີດຜົນ ການຊົງນຳຂອງພຣະວິນຍານບໍລິສຸດຈະຊ່ວຍໃຫ້ເຮົາບໍ່ຢ້ານກົວ ບໍ່ທໍ້ຖອຍ ບໍ່ອິດອ່ອນໃຈ ພຣະວິນຍານບໍລິສຸດຂອງພຣະເຈົ້າ ຈະຊ່ວຍເສີມແຮງ ເສີມພລັງຄວາມເຊື່ອໃຫ້ເຮົາເຂັ້ມແຂງ ເຮັດໃຫ້ເຮົາເກີດຄວາມຮັກ ຄວາມສົງສານ ແລະມີຄວາມບໍລິສຸດໃຈຕໍ່ຜູ້ທີ່ເຮົາປະກາດ ແຕ່ເຮົາຕ້ອງຣະລຶກຢູ່ສເມີວ່າ ໃນເມື່ອພຣະວິນຍານບໍລິສຸດປະທານຣິດເດດແກ່ເຮົາແລ້ວເຮົາຈະບໍ່ອວດຕົວ ບໍ່ຕ້ອງອວດອ້າງຄວາມສຳຄັນຂອງຕົນເອງ ບໍ່ຕ້ອງອ້າງນາມຂອງພຣະເຈົ້າມາຂົ່ມຄົນ ແຕ່ຕ້ອງຖ່ອມໃຈລົງ ແລະຣະວັງການດຳເນີນຊີວິດຂອງຕົນເອງໃຫ້ດີໃຫ້ບໍລິສຸດ ຖືກຕ້ອງຕາມນ້ຳພຣະທັຍຂອງພຣະເຈົ້າ

ໂອ້ອວດຕົນ

ຕົວຢ່າງທ່ານ ສົນສົມ ໄດ້ຮັບເຊື່ອພຣະເຢຊູຄຣິສໃນປີ ຄ.ສ.1973 ທ່ານ ສົນສົມ ມີອາຊີບເປັນຄຣູ ພ້ອມພັຣຍາໄດ້ຮັບການຊົງນຳຈາກພຣະເຈົ້າ ໃຫ້ຫນີເຂົ້າໄປຢູ່ໃນສູນອົພຍົບ ນອກກຸງພະນົມເປັນ (Phanom Penh) ຊຶ່ງເປັນສູນອົພຍົບ ທີ່ຍັງບໍ່ທັນມີຜູ້ໃດເປັນຄຣິສຕຽນ ທ່ານສົນສົມໄດ້ໃຊ້ຕູບຫລັງນ້ອຍ ໆ ເປັນບ່ອນປະກາດຂ່າວປະເສີດ ໃນເວລາພຽງ 6 ເດືອນມີຄົນມາຊຸມນຸມກັນເປັນຫລາຍສິບ ແລະພຽງເວລາ 2 ປີເທົ່ານັ້ນ ມີຄົນເປັນພັນຄົນ ໄດ້ເຂົ້າມາຮັບເຊື່ອ ທ່ານສົນສົມບໍ່ເຄີຍ ຜ່ານການຝຶກອົບຮົມ ໃນເຣື່ອງການປ່າວປະກາດຂ່າວປະເສີດ ແຕ່ທ່ານປ່າວປະກາດຂ່າວປະເສີດໄດ້ຜົນ ຍ້ອນການນຳພາຂອງພຣະວິນຍານບໍລິສຸດ ທີ່ຊູໃຈທ່ານໃຫ້ເກີດຄວາມກ້າຫານ ແລະຍອມເສັຽສະລະເວລາໃນການນຳຜູ້ຄົນມາເຖິງພຣະເຈົ້າ

## ຂ. ພຣະວິນຍານບໍຣິສຸດນຳພາໃຫ້ຜູ້ເຊື່ອບັງເກີດໃໝ່

ພຣະທັມໂຢຮັນ 16:12-13 ກ່າວວ່າ "ເຮົາຍັງມີອີກຫລາຍສິ່ງ ທີ່ຈະບອກແກ່ທ່ານທັງຫລາຍ ແຕ່ດຽວນີ້ ພວກທ່ານບໍ່ອາດຈະທົນໄດ້ ແຕ່ເມື່ອພຣະອົງນັ້ນຄື ພຣະວິນຍານແຫ່ງຄວາມຈິງ ຈະສະເດັດມາແລ້ວ ພຣະອົງຈະນຳທ່ານທັງຫລາຍໄປສູ່ຄວາມຈິງທັງຫມົດ ເພາະພຣະອົງຈະບໍ່ກ່າວແຕ່ລຳພັງຂອງພຣະອົງເອງ ແຕ່ພຣະອົງຊົງໄດ້ຍິນສິ່ງໃດກໍ່ຈະຊົງກ່າວສິ່ງນັ້ນ ແລະຈະຊົງປະກາດໃຫ້ທ່ານທັງຫລາຍຮູ້ເຖິງສິ່ງເຫລົ່ານີ້ທີ່ຈະເກີດຂຶ້ນ" ເພາະວ່າຫນ້າທີ່ຂອງອົງພຣະວິນຍານບໍຣິສຸດ ຄືການບັນດານໃຫ້ມະນຸດ ເກີດການສຳນຶກບາບ ແລະເກີດການຄືນດີກັບພຣະເຈົ້າ (2 ໂກຣິນໂທ 5:17-21)

ພຣະທັມໂຢຮັນ 3:5-7 ກ່າວວ່າ "ຖ້າຜູ້ໃດບໍ່ໄດ້ບັງເກີດມາຈາກນ້ຳ ແລະຈາກພຣະວິນຍານ ຜູ້ນັ້ນຈະເຂົ້າແຜ່ນດິນຂອງພຣະເຈົ້າບໍ່ໄດ້ ຊຶ່ງບັງເກີດຈາກເນື້ອກາຍກໍເປັນເນື້ອກາຍ ແລະຊຶ່ງບັງເກີດຈາກພຣະວິນຍານກໍເປັນວິນຍານ ຢ່າປລາດໃຈທີ່ເຮົາບອກທ່ານວ່າ ທ່ານທັງຫລາຍຈຳເປັນຕ້ອງບັງເກີດມາໃຫມ່" ພຣະເຢຊູໄດ້ເນັ້ນສອນ ເຣື່ອງການບັງເກີດໃຫມ່ໂດຽພຣະວິນຍານແກ່ນີໂກເດມຢ່າງເຂັ້ມແຂງ ແທ້ຈິງແລ້ວຕົວພຣະເຢຊູຄຣິສ ກໍໄດ້ບັງເກີດຈາກນາງມາຣີອາ ໂດຽຣິດເດດຂອງພຣະວິນຍານບໍຣິສຸດ ແລະໂດຽຣິດເດດແຫ່ງພຣະວິນຍານບໍຣິສຸດ ອົງດຽວກັນນີ້ແຫລະ ທີ່ຈະນຳຜູ້ຟັງໃຫ້ກັບໃຈ ບັງເກີດໃຫມ່ ຊຶ່ງການບັງເກີດໃຫມ່ໃນຕົວຂອງຜູ້ເຊື່ອທຸກ ໆ ຄົນນັ້ນ ເປັນການອັດສະຈັນທີ່ແຕ່ລະຄົນຈະໄດ້ຮັບປະສົບການນີ້ເປັນການສ່ວນຕົວ ແລະເປັນຄວາມຫມັ້ນໃຈຕລອດໄປ ຈົນກວ່າພຣະເຢຊູຈະສະເດັດມາຮັບເຮົາໃຫ້ເຂົ້າສ່ວນໃນແຜ່ນດິນສວັນ

## ຄ. ພຣະວິນຍານບໍຣິສຸດຊົງເອີ້ນ ແລະຈັດຕຽມທັມມິກຊົນໃຫ້ເປັນຜູ້ຮັບໃຊ້

ຫາກວ່າເຮົາໄດ້ສຶກສາພຣະຄັມພີຕອນເຫລົ່ານີ້ຄື ເອເຟໂຊ 4:11-12; 1 ໂກຣິນໂທ 12: 4-30; ໂຣມ 12:6-8 ແລ້ວເຮົາຈະພົບວ່າ ພຣະວິນຍານບໍຣິສຸດເປັນຜູ້ຊົງຈັດຕຽມຜູ້ເຊື່ອ ຫລືທັມມິກຊົນໃຫ້ໄດ້ຮັບຂອງປະທານຕ່າງ ໆ ກັນ ເພື່ອການຮັບໃຊ້ບົວລະບັດໃຫ້ຄຣິສຈັກຈະເຣີນໃຫຽ່ຂຶ້ນ ເຮົາຕ້ອງຍອມຮັບອີກວ່າ ຂອງປະທານຢ່າງນຶ່ງໃນຈຳນວນຫລາຍ ໆ ຢ່າງນັ້ນ ໃຫ້ລາງຄົນເປັນຜູ້ປະກາດຂ່າວປະເສີດ ເຮັດໃຫ້ພີ່ນ້ອງບາງຄົນໃນຄຣິສຈັກ ມີຄວາມສາມາດໃນດ້ານການປະກາດ ອັນເປັນຂອງປະທານພິເສດ ທີ່ຜູ້ນັ້ນໄດ້ຮັບແລະເຮັດໃຫ້ການປະກາດຂອງໄດ້ເກີດຜົນຫລາຍກວ່າຜູ້ອື່ນ ອັນນີ້ບໍ່ໄດ້ຫມາຍຄວາມວ່າ ຜູ້ອື່ນບໍ່ຕ້ອງປະກາດ ຫລືປະຖິ້ມພາຣະໄວ້ ໃຫ້ແກ່ຜູ້ທີ່ມີຂອງປະທານດ້ານການປະກາດ ເປັນຜູ້ເຮັດວຽກແຕ່ພຽງຜູ້ດຽວ ເພາະວ່າຜູ້ທີ່ໄດ້ຮັບຂອງປະທານດ້ານອື່ນ ໆ ເມື່ອເອົາຂອງປະທານຈາກພຣະເຈົ້າອອກຮັບໃຊ້ ກໍ່ຈະນຳພາໃຫ້ເກີດຜົນໃນດ້ານການປະກາດຄືກັນ ນອກຈາກນີ້ເຮົາຈະພົບອີກວ່າ ພຣະວິນຍານບໍຣິສຸດໄດ້ຈັດຕຽມໃຫ້ຜູ້ຮັບໃຊ້ແຕ່ລະຄົນໃຫ້ມີຂອງປະທານ ຫລາຍກວ່ານຶ່ງຢ່າງ ອາດຈະເປັນສອງຫລືສາມຢ່າງ ກໍເປັນໄດ້ທີ່ເຮົາສາມາດມາຮັບໃຊ້ໃນຣາຊກິຈດ້ານການປ່າວປະກາດຂ່າວປະເສີດໃຫ້ເກີດຫມາກຜົນ

ຂ້າພະເຈົ້າເຊື່ອຫມັ້ນຢ່າງແນ່ນອນທີ່ສຸດວ່າ ພຣະວິນຍານບໍຣິສຸດຍັງຄົງເອີ້ນແລະນຳພາໃຫ້ຜູ້ຮັບໃຊ້ອອກໄປປ່າວປະກາດຂ່າວປະເສີດແກ່ບຸກຄົນອື່ນ ໆ ທີ່ມີຄວາມຕ້ອງການຝ່າຍວິນຍານ ຄືຄວາມຣອດພົ້ນ ຊຶ່ງຜູ້ຮັບໃຊ້ຫລາຍ ໆ ທ່ານໄດ້ເປັນພະຍານວ່າ ມີປະສົບການຂອງການນຳພາຈາກພຣະວິນຍານບໍຣິສຸດໃຫ້ຮູ້ຈັກຟັງ ໃຫ້ຮູ້ຈັກເວົ້າ ໃຫ້ຮູ້ຈັກໄປ ໃຫ້ຮູ້ຈັກລໍຖ້າ ໃຫ້ຮູ້ຈັກສັງເກດ ໃຫ້ຮູ້ຈັກຄິດ ໃຫ້ຮູ້ຈັກພິຈາຣະນາ

ໃຫ້ຮູ້ຈັກຮັກສາ ໃຫ້ຮູ້ຈັກສິ່ງສານຮັກແພງ ໃຫ້ຮູ້ຈັກບົວລະບັດ ໃຫ້ຮູ້ຈັກສັ່ງສອນ ໃຫ້ຮູ້ຈັກການປຮູ້ມປາມ ໃຫ້ຮູ້ຈັກການສົງເຄາະ ໃຫ້ຮູ້ຈັກການປະກາດ ແລະເກັບກ່ຽວຫມາກຜົນ ທັງຫມົດນີ້ເປັນງານທີ່ພຣະວິນຍານບໍຣິສຸດເຮັດຢູ່ໃນຕົວຂອງເຮົາ ທີ່ໄດ້ປະທານໃຫ້ເພື່ອຮັບໃຊ້ພຣະອົງ ເຮົາຕ້ອງວ່ອງໄວແລະເປີດຈິດໃຈຂອງເຮົາຮັບການນໍາພາຈາກອົງພຣະວິນຍານບໍຣິສຸດ ເອເມນ

**ງ. ການເກັບກ່ຽວຫມາກຜົນຝ່າຍວິນຍານ**

ພຣະທັມລູກາ 5:4-5 "ຈົ່ງພາຍເຮືອອອກໄປບ່ອນເລິກ ແລ້ວຢ່ອນມອງຂອງພວກທ່ານລົງຈັບປາ" ຊີໂມນທູນຕອບວ່າ "ອາຈານເຈົ້າເອີຍ ພວກຂ້ານ້ອຍໄດ້ຫາຈົນ ອິດເມື່ອຍຫມົດຄືນກໍບໍ່ໄດ້ຫຍັງ ແຕ່ຂ້ານ້ອຍຈະຢ່ອນ ມອງລົງຕາມຄໍາຂອງນາຍ"

ເຣື່ອງການຊິດເບັດ (ຕຶກເບັດ) ເປັນເຣື່ອງທີ່ຫລາຍ ໆ ຄົນມີປະສົບການ ແລະພາກັນມ່ວນຊື່ນຫລາຍ ຫາກວ່າມີປາກິນເບັດ ໂດຽສະເພາະຢ່າງຍິ່ງ ໃນຍາມທີ່ຢ່ອນເບັດລົງທີ່ໃດ ກໍໄດ້ປາຂຶ້ນມາທັນທີ ເຮັດໃຫ້ຜູ້ຄົນພາກັນຕິດອົກຕິດໃຈ ຢາກກັບຄືນໄປຫາທີ່ເກົ່າທີ່ໄດ້ປາຫລາຍນັ້ນເລື້ອຍ ໆ ບາງຄົນກໍເຖິງກັບລົງທຶນຊື້ຫາເຄື່ອງມືຣາຄາແພງ ໆ ເພື່ອຈະໄດ້ປາມາຫລາຍ ໆ ໃນພຣະຄັມພີຂ້າງເທິງ ພຣະເຢຊູຄຣິສບໍ່ແມ່ນຊາວປະມົງອາຊີບ ແຕ່ພຣະອົງໄດ້ສະແດງໃຫ້ຊາວປະມົງອາຊີບເຫລົ່ານັ້ນເຂົ້າໃຈເຖິງນໍ້າພຣະທັຍແລະພຣະປະສົງຂອງພຣະເຈົ້າ ພຣະອົງຕ້ອງການໃຫ້ສາວົກຂອງພຣະອົງຮູ້ວ່າ ຈຸດປະສົງໃຫຍ່ຄືການນໍາຄົນມາເຖິງພຣະເຈົ້າຫລາຍເທົ່າໃດກໍຍິ່ງດີ ເຮົາຕ້ອງເຮັດໄວ ໆ ໃຫ້ຖືກຈຸດ ໃຫ້ຖືກກັບບ່ອນຂອງມັນ ການຊິດເບັດໄດ້ປາທີລະຕົວກໍດີຢູ່ ແຕ່ການແກ່ມອງ(ລາກອວນ)ໃຫ້ໄດ້ປາຂຶ້ນມາຫລາຍ ໆ ນັ້ນ ພາໃຫ້ແຜ່ນດິນຂອງພຣະເຈົ້າ ເກີດການອັດສະຈັນຂຍາຍໃຫຍ່ອອກໄປ ເກີດການສັຣເສີນຂອບຄຸນພຣະເຈົ້າ

ຄໍາວ່າ "ລາກອວນ" [ແກ່ມອງ] ປັນຄໍາທີ່ນໍາມາໃຊ້ທ່າມກາງນັກເທສນາແລະຜູ້ຮັບໃຊ້ ຊຶ່ງມີຄວາມຫມາຍວ່າ ການເຊື້ອເຊີນຂອງຜູ້ເທສນາ ຫລືການນໍາພາໃຫ້ຜູ້ໃດຜູ້ນຶ່ງເກີດການຕັດສິນໃຈທີ່ຈະຕິດຕາມພຣະຄຣິສ ເຮົາໄດ້ພົບກັບຄໍາວ່າ "ການເກັບກ່ຽວ" ຊຶ່ງກໍມີຄວາມຫມາຍອັນດຽວກັນຄື ການນໍາໃຫ້ຜູ້ນຶ່ງຫລືອາດຈະເປັນກຸ່ມ ໃຫ້ເກີດການຕັດສິນໃຈຮັບເຊື່ອ ຍອມຮັບວ່າພຣະເຢຊູຄຣິສ ພຣະບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່ເປັນພຣະຜູ້ຊ່ວຍໃຫ້ຮອດ ຜູ້ຮັບເຊື່ອຍິນດີມອບຊີວິດ ຂອງຕົນທີ່ຈະຕິດຕາມ ເປັນສາວົກຂອງພຣະອົງ ການລາກອວນ ການເກັບກ່ຽວຜົນ ການນໍາວິນຍານ ເປັນການຊັກຊວນເຊື້ອເຊີນຂອງຜູ້ປ່າວປະກາດ ແລະຂອງນັກເທດທີ່ຕ້ອງການນໍາພາ ໃຫ້ຜູ້ຟັງຍອມຮັບພຣະຄຣິສຕໍ່ຫນ້າມະນຸດ ດັ່ງໃນພຣະທັມລູກາ 12:8 "ເຮົາບອກທ່ານທັງຫລາຍວ່າ ທຸກຄົນທີ່ຈະຮັບເຮົາຕໍ່ຫນ້າມະນຸດ ບຸດມະນຸດກໍຈະຮັບຜູ້ນັ້ນຕໍ່ຫນ້າພວກເທວະດາ ຂອງພຣະເຈົ້າເຫມືອນກັນ" ດັ່ງນັ້ນແລ້ວຜູ້ປະກາດ ຫລືນັກເທດ ຈໍາເປັນຕ້ອງໄດ້ເຂົ້າໃຈ ແລະຮັກສາເຣື່ອງນີ້ຢ່າງຈິງຈັງ ພ້ອມກັບຝຶກແອບຕຽມຕົວໃຫ້ພ້ອມ ເພື່ອການລາກອວນ [ແກ່ມອງ] ຫລືການເກັບກ່ຽວນັ້ນຈະສໍາເຣັດຜົລສໍາເຣັດ ດ້ວຍຄວາມຣາບຣື່ນ

ການເຊື້ອເຊີນນໍາວິນຍານ ການລາກອວນ [ແກ່ມອງ] ການເກັບກ່ຽວຜົນເປັນຈຸດສຸດຍອດຂອງການເທສນາຫລືການປ່າວປະກາດ ຫລືການເປັນພະຍານ ຫາກວ່າບໍ່ມີສ່ວນນີ້ແລ້ວ ຄໍາເທສນາ ຄໍາປະກາດ ຄໍາສັ່ງສອນກໍຈະບໍ່ສົມບູນ ຄືກັບຫນັງລະຄອນທີ່ບໍ່ມີຕອນຈົບ ແຕ່ເຮົາກໍຕ້ອງຍອມຮັບວ່າ ມີລະຄອນບາງເຣື່ອງ ທີ່ຕ້ອງມີຕໍ່ຕອນສອງ ຫລືຕອນສາມ ຫລືຕາມທີ່ອັກສອນປາກົດໃນຫນ້າທີວີວ່າ To be continue ແລ້ວຜູ້ເບິ່ງກໍຮ້ອງອອກມາວ່າ ອ້າ.....ຫນ້າເສັຽດາຍ ການເຊື້ອເຊີນໃຫ້ຜູ້ຟັງເກີດການຕັດສິນໃຈ ກໍເຂົ້າທໍານອງດຽວກັນນີ້ ຈະມີຫລາຍເທື່ອທີ່ປາກົດວ່າ ເຮົາບໍ່ສາມາດລາກອວນຫລືເກັບ

ກ່ຽວພັນໃນເວລານັ້ນ ແຕ່ເຮົາຕ້ອງຕັ້ງໄວ້ໃນໃຈຂອງເຮົາວ່າ ເຮົາຈະຕ້ອງຕໍ່ເຣື້ອງນີ້ໃໝ່ ໃນຄາວໜ້າ ຄື To be continue ບໍ່ຍອມຂາດໄປ ຫລືສິ້ນສຸດພຽງເທົ່ານີ້

ມີນັກເທດຜູ້ທີ່ເຂັ້ມແຂງເຕືອນສະຕິພວກເຮົາຊຶ່ງເປັນຜູ້ປະກາດວ່າ "ຣະວັງໄວ້ເດີ ຫາກເຈົ້າບໍ່ນຳວິນຍານ ບໍ່ເຊີນຊວນໃຫ້ ເກີດການຕັດສິນໃຈ ຕ້ອນຮັບຂ່າວປະເສີດຂອງພຣະຄຣິສ ຜູ້ທີ່ເຮົາເປັນພະຍານນັ້ນ ອາດຈະຫລົງຫາຍໃນພາຍຫລັງ ຫລືພາດໄປຈາກຂ່າວປະເສີດ ໃນວັນສຸດທ້າຍເລືອດຂອງຜູ້ກະທຳຜິດ ຈະຍ້ອນຄືນມາຕໍ່ວ່າເຮົາໄດ້ ແຕ່ຖ້ານັກເທດ ແລະຜູ້ປະກາດຮູ້ຈັກການນຳວິນຍານທຸກເທື່ອ ເລືອດຂອງຜູ້ທີ່ເຮັດບາບຈະບໍ່ຢູ່ນຳເຮົາ ແລະບໍ່ສາມາດຟ້ອງຮ້ອງເຮົາຕໍ່ໜ້າພຣະເຈົ້າໄດ້

ໃນພຣະຄັມພີອົພຍົບ 32:26 ທ່ານໂມເຊ ເສັຍໃຈຫລາຍທີ່ເຫັນປະຊາຊົນອິສຣາເອລ ຜູ້ເຊື່ອພຣະເຈົ້າ ແຕ່ຍັງມີສອງໃຈທີ່ໄປຂາບໄຫວ້ "ງົວຄຳ" ໂມເຊໄດ້ຮ້ອງຂຶ້ນວ່າ "ຜູ້ໃດຢູ່ຝ່າຍພຣະຜູ້ເປັນເຈົ້າ ໃຫ້ຜູ້ນັ້ນມາຫາເຮົາ

ພາຍຫລັງຕໍ່ມາເມື່ອໂຢຊວຍໄດ້ເປັນຜູ້ນຳພາແທນທ່ານໂມເຊ ທ່ານໂຢຊວຍໄດ້ຮ້ອງຖາມ ອິສຣາເອລໃຫ້ຕັດສິນໃຈເປັນເດັດຂາດ ທ່ານໄດ້ເອີ້ນຊາວອິສຣາເອລທຸກຕະກູນທີ່ເມືອງຊີເຄມ ທ່ານກ່າວວ່າ "ຈົ່ງຕັດສິນໃຈໃນມື້ນີ້ວ່າ ພວກທ່ານຈະຮັບໃຊ້ຜູ້ໃດ ຈະຮັບໃຊ້ພຣະຂອງປູ່ຍ່າຕາຍາຍ ທີ່ປະເທດເມໂຊໂປຕາເມັຍ ຫລືພຣະຂອງຊາວອາໂມຣິດ ໃນແຜ່ນດິນ ທີ່ພວກທ່ານອາສັຍຢູ່ນີ້ ແຕ່ເພິ່ນວ່າ **ຂ້າພະເຈົ້າແລະຄອບຄົວຂອງຂ້າພະເຈົ້າຈະຮັບໃຊ້ພຣະຜູ້ເປັນເຈົ້າ** ໂຢຊວຍ 24:15 (ຈົ່ງອ່ານໂຢຊວຍ 24:14-48)

ພຣະເຢຊູຕັດກັບ ຊີໂມນເປໂຕ ແລະອັນເດອາວ່າ "ຈົ່ງຕາມເຮົາມາ ແລະເຮົາຈະບັນດານໃຫ້ພວກເຈົ້າເປັນຜູ້ຫາຄົນ" ມັດທາຍ 4:19

ທ່ານເປໂຕກ່າວໃນວັນເພັນເຕຄໍສະເຕ ຊັກຊວນໃຫ້ປະຊາຊົນຖິ້ມໃຈເກົ່າເອົາໃຈໃໝ່ ແລະຄົນຈຳນວນສາມພັນຄົນໄດ້ເຊື່ອຮັບຟັງຖ້ອຍຄຳຂອງທ່ານ (ກິຈການ 2:38-42)

ທ່ານໂປໂລໄດ້ກ່າວ ເປັນພະຍານເຖິງຂ່າວປະເສີດ ຊັກຊວນໃຫ້ຄົນເຫລົ່ານັ້ນຕັດສິນໃຈ ເບິ່ງຂໍ້ພຣະຄັມພີເຫລົ່ານີ້

- ທ່ານໂປໂລປະກາດທີ່ ເມືອງເອເຟໂຊ ກິຈການ 19:8 (ອ່ານ ກຈ 19:1-10)
- ທ່ານໂປໂລຊັກຊວນກະສັດ ອາຄຣິປາ ໃຫ້ຊົງຮັບເຊື່ອ ກິຈການ 26:26 (ອ່ານ ກຈ 26:24-29)
- ທ່ານໂປໂລປະກາດໃນກຸງໂຣມ ກິຈການ 28:28 (ອ່ານ ກຈ 28:19-31)

ໃນຖານະທີ່ເຮົາເປັນຜູ້ປະກາດ ເຮົາຕ້ອງຍອມຮັບວ່າ ການຊັກຊວນຫລືການຮຽກຮ້ອງໃຫ້ເກີດການຕັດສິນໃຈນັ້ນເປັນໜ້າທີ່ຂອງເຮົາ ແລະເປັນພາກສ່ວນທີ່ຂາດບໍ່ໄດ້ ເຮົາຕ້ອງສະເນີຄວາມຮັກຂອງພຣະເຈົ້າ ໃຫ້ຜູກມັດຈິດໃຈຜູ້ຟັງ (2 ໂກຣິນໂທ 5:14) ແລະຮຽກຮ້ອງໃຫ້ເກີດການຄືນດີກັນກັບພຣະເຈົ້າ (2 ໂກຣິນໂທ 5:20) ເພື່ອເປັນປະຈັກພະຍານຕໍ່ໜ້າມະນຸດ ຕໍ່ໜ້າຄຣິສຈັກ ເຖິງການຕັດສິນໃຈເລືອກເອົາອົງພຣະຜູ້ເປັນເຈົ້າ ເປັນພຣະເຈົ້າຜູ້ທ່ຽງແທ້ແຕ່ອົງດຽວ

**ສາມ. ວິທີການລາກອວນ [ແກ່ມອງ] ຫລືເກັບກ່ຽວຫມາກພົນ**

ວິທີລາກອວນມີຫລາຍແບບ ຫລາຍວິທີການ ຊຶ່ງນັກເທດ ຫລືຜູ້ປະກາດຕ້ອງຮຽນຮູ້ ແລະນຳໄປ

ໃຊ້ໃຫ້ເຫມາະສົມກັບ ຄວາມຖະນັດຊິນເຄີຍຂອງຕົນ ຫລືຮູ້ຈັກການສັງເກດວ່າ ນັກເທດຜູ້ອື່ນເຂົາເຮັດແນວໃດ ເກີດຜົນຢ່າງໃດ ຮຽນຮູ້ຈັກການນຳຄົນເຊື່ອ ເປັນສ່ວນບຸກຄົນ ຫລືລາຍບຸກຄົນ ຫລືນຳຄົນເຊື່ອເປັນກຸ່ມໃຫຍ່ ຫລືການຟື້ນຟູທີ່ມີຈຳນວນຄົນຫລາຍ ໆ ຕ້ອງມີວິທີການທີ່ນຸ່ມນວນ ລະອຽດອ່ອນ ແຕ່ແຈ່ມແຈ້ງແນ່ນອນບໍ່ສັບສົນ ບໍ່ເປັນແບບຂອງການຕີ້ ຫລືບັງຄັບເອົາ ດັ່ງນັ້ນໃຫ້ນັກສຶກສາ ຕັ້ງຂໍ້ສັງເກດ ເມື່ອເຂົ້າປະຊູມໃນທີ່ຕ່າງ ໆ ເມື່ອເຫັນການເຊີນຊວນ ຫລືການນຳພາໃຫ້ຜູ້ຟັງ ເກີດການຕັດສິນໃຈ ເຊັ່ນການຊັກຊວນໃຫ້ຜູ້ຟັງຍົກມືຂຶ້ນ ລຸກຢືນຂຶ້ນ ເດີນອອກມາທາງຫນ້າ ໂດຍມີຜູ້ຕ້ອນຮັບ ຫລືຜູ້ນຳພາໃຫ້ເດີນມາທາງຫນ້າ ມີການຄຸເຂົ່າ ອ້ອນວອນຫນ້າທັມມາສ ຫລືອາດຈະນຳພາໄປຍັງອີກຫ້ອງນຶ່ງ ທີ່ໄດ້ຈັດຕຽມໄວ້ແລ້ວນັ້ນ ແລະມີການສົນທະນາເປັນການສ່ວນຕົວ ເພື່ອຄວາມແນ່ໃຈ (Confirm) ເຖິງຈຸດປະສົງຂອງຜູ້ທີ່ກ້າວອອກມາ ທາງຫນ້ານັ້ນວ່າ ເຂົາຕ້ອງການໃຫ້ພຣະເຈົ້າ ຊ່ວຍເຫລືອເຂົາ ໃນດ້ານໃດ ຕ້ອງການກັບໃຈໃຫມ່ ຕ້ອງການຮັບເຊື່ອ ຕ້ອງການສາຣະພາບບາບ ຕ້ອງການຄວາມແນ່ໃຈ ໃນຄວາມຣອດພົ້ນ (ຜູ້ທີ່ເຄີຍຮັບເຊື່ອມາແລ້ວ) ຕ້ອງການຄຳໄຫ້ວວອນ ອະທິຖານເປັນພິເສດ ເພື່ອບັນຫາທີ່ຜູ້ນັ້ນປະສົບຢູ່ ຕ້ອງການດີພະຍາດ ຕ້ອງການຖວາຍຕົວຮັບໃຊ້ພຣະເຈົ້າ ຕ້ອງການຮຽນພຣະຄັມພີ ເພື່ອຕຽມຕົວເອງເປັນຜູ້ຮັບໃຊ້ໃນອານາຄົດ ສິ່ງຕ່າງ ໆເຫລົ່ານີ້ເປັນຕົ້ນ ການລາກອອນຫລືການແກ່ມອງນົບ ຕ້ອງຮູ້ຈັກຕຽມຕົວໃຫ້ພ້ອມ ແລະຫາຜູ້ຊ່ວຍ ເພື່ອຮັບກັບສະຖານະການທີ່ເກີດຂຶ້ນ

ສ່ວນເຣື້ອງການຊັກນຳໃຫ້ເກີດການຕັດສິນໃຈເປັນສ່ວນຕົວນັ້ນ ເປັນເຣື້ອງທີ່ຕ້ອງຝຶກຝົນຄືກັນສ່ວນຫລາຍ ຕ້ອງວ່ອງໄວໃນດ້ານຄວາມຮູ້ສຶກ (Sentsitive) ແລະຍອມຮັບຮູ້ຜູ້ທີ່ເຮົານຳພາ ບໍ່ວ່າເຂົາຈະຕັດສິນໃຈໄປໃນດ້ານໃດ ເຮົາຕ້ອງຍອມຮັບ ແລະໃຫ້ກຽດ ໃຫ້ອິສຣະພາບແກ່ຜູ້ນັ້ນ ໂດຍບໍ່ປະນາມ ບໍ່ບັງຄັບ ແຕ່ສາມາດໃຊ້ຂໍ້ພຣະຄຳ ເຫລົ່ານີ້ຊ່ວຍເຫລືອໃຫ້ເຂົາ ສາມາດຕັດສິນໃຈໄດ້ໄວຂຶ້ນ (ໃຫ້ເບິ່ງຂໍ້ພຣະຄັມພີເຫລົ່ານີ້)

- ຜູ້ທີ່ຕ້ອນຮັບພຣະເຢຊູ ແມ່ນໄດ້ຕ້ອນຮັພຣະເຈົ້າ — ໂຢຮັນ 13:20
- ຮັບເຊື່ອດ້ວຍປາກດ້ວຍໃຈ — ໂຣມ 10:9
- ຈົ່ງສາຣະພາບບາບ — 1 ໂຢຮັນ 1:9
- ຈົ່ງຕ້ອນຮັບພຣະອົງ — ໂຢຮັນ 1:12
- ຄວາມຣອດເປັນດັ່ງຂອງຂວັນ — ເອເຟໂຊ 2:8-9
- ພຣະເຈົ້າສາມາດລົບລ້າງບາບທ່ານ — ກິຈການ 3:19
- ພຣະເຈົ້າຊົງໂຜດປະທານຊີວິດ — 1 ໂຢຮັນ 5:11-13
- ຈົ່ງຮັບບັບຕິສມາ — ກິຈການ 2:38, ມັດທາຍ 28:19
- ພຣະເຈົ້າຊົງປະທານຊີວິດທີ່ຄົບສົມບູນ — ໂຢຮັນ 10:10
- ພຣະເຢຊູເປັນຄວາມສວ່າງ — ໂຢຮັນ 8:12
- ພຣະເຢຊູເປັນທາງນັ້ນ — ໂຢຮັນ 14:6
- ພຣະເຢຊູຊົງເປັນຊີວິດ — ໂຢຮັນ 6:35
- ຈົ່ງໄປນມັສການພຣະເຈົ້າບໍ່ຂາດ — ເຮັບເຣີ 10:25
- ຈົ່ງອ່ານພຣະຄັມພີ — 2 ຕີໂມທຽວ 2:15
- ຈົ່ງອ້ອນວອນ ອະທິຖານ — 1 ເທຊະໂລນິກ 5:17

## ສີ່. ຣິດອຳນາດທີ່ໃຊ້ໃນການລາກອວນ [ແກ່ນອງ]

ການລາກອວນ ຫລືການເກັບກ່ຽວຜົລ ຕ້ອງໃຊ້ຂອງປະທານທຸກຊນິດ ຕ້ອງອາໄສຣິດອຳນາດການອະທິຖານຂອງຕົວເອງ ແລະຜູ້ອື່ນ ໆ ທີ່ຢູ່ເບື້ອງຫລັງ ເຮົາຕ້ອງມີການຕຽມຕົວໃຫ້ພ້ອມ ແລະຝຶກແອບຕົນເອງໃນທຸກ ໆ ດ້ານ ທັງຄວາມເວົ້າ ກິຣິຍາວາຈາ ການດຳເນີນຊີວິດ ທີ່ມີແບບຢ່າງທີ່ດີ ແລະເພິ່ງອາສັຍຣິດອຳນາດ ການຊົງນຳພາຂອງພຣະວິນຍານບໍຣິສຸດ ການຮູ້ຈັກໃຊ້ພຣະຄຳຂອງພຣະເຈົ້າ ໃຫ້ຖືກຕ້ອງກັບເຫດການ ແລະໂອກາດ ແລະໃຫ້ຖືກຕ້ອງກັບຜູ້ຟັງ ໃຫ້ຕົງກັບຄວາມຕ້ອງການຂອງເຂົາ ຕ້ອງຮູ້ຈັກການໃຊ້ຕົວຢ່າງ ຄຳສົມທຽບ ຄຳອຸປະມາ ຄຳແນະນຳ ຄຳພະຍານແລະຕົວຢ່າງຊີວິດ ຕ້ອງຮູ້ຈັກບອກເຖິງຂ່າວປະເສີດ ແລະການເປັນພຣະຄຣິສພຣະຜູ້ໂຜດໃຫ້ພົ້ນຂອງພຣະເຢຊູຄຣິສໃຫ້ແຈ່ມແຈ້ງ ຕ້ອງຮູ້ຈັກການແນະນຳໃຫ້ເກີດການຄືນດີ ການໃຫ້ອະພັຍການຍົກໂທດ ການມີຄວາມຮັກ ຄວາມເມດຕາສົງສານ ແລະທີ່ສຳຄັນທີ່ສຸດແມ່ນ ການກ່າວຄຳຊັກຊວນໃຫ້ເກີດການຕັດສິນໃຈ

ໃນຕອນສຸດທ້າຍຂອງການເຊີນຊວນ ແມ່ນການອະທິຖານຮ່ວມກັນໃນຕອນຈົບ ການກ່າວຄຳແນະນຳເພື່ອຜູ້ຮັບເຊື່ອ ຈະສາມາດດຳເນີນຊີວິດຄຣິສຕຽນທີ່ຈະເຣີນເຕີບໂຕຕໍ່ໄປ ທັງຫມົດນີ້ນັກເທດຫລືຜູ້ປະກາດຕ້ອງກະທຳດ້ວຍຄວາມກະຕືລືລົ້ນ ດ້ວຍຄວາມຫມັ້ນໃຈ ແລະໄວ້ວາງໃຈໃນພຣະເຈົ້າ ເພິ່ງພາໃນພຣະຄຳ ຖວາຍກຽດ ແລະຫມາກຜົນທັງມວນແດ່ພຣະເຈົ້າ ບໍ່ແມ່ນເພື່ອຊື່ສຽງຂອງຕົນເອງ

## ຫ້າ. ການຖນອມວິນຍານ

ໂຣມ 15:16 ກ່າວວ່າ "ບໍ່ແມ່ນທ່ານທັງຫລາຍໄດ້ເລືອກເອົາເຮົາ ແຕ່ຝ່າຍເຮົາໄດ້ເລືອກເອົາພວກທ່ານ ແລະໄດ້ແຕ່ງຕັ້ງທ່ານທັງຫລາຍ ເພື່ອໃຫ້ໄປເກີດຜົລ ແລະເພື່ອຜົລຂອງພວກທ່ານ ຈະຕັ້ງຢູ່ຖາວອນ ເພື່ອວ່າເມື່ອທ່ານທັງຫລາຍຈະທູນຂໍ ສິ່ງໃດຈາກພຣະບິດາໃນນາມຂອງເຮົາ ພຣະອົງກໍຈະຊົງປະທານສິ່ງນັ້ນແກ່ພວກທ່ານ"

ກິຈການ 2:42 ກ່າວວ່າ "ເຂົາໄດ້ຕັ້ງຫມັ້ນຄົງຢູ່ໃນຄຳສອນຂອງອັຄສາວົກ ໃນການຮ່ວມໃຈກັນໃນການຫັກເຂົ້າຈີ່ ແລະໃນການໄຫວ້ວອນ"

ຄວາມຣອດພົ້ນທີ່ພຣະເຈົ້າປະທານແກ່ມະນຸດນັ້ນ ເປັນຄວາມຣອດພົ້ນອັນຖາວອນ ຜູ້ເຊື່ອເຣີ່ມຕົ້ນດ້ວຍການຕັດສິນໃຈຍອມຮັບເຊື່ອຕໍ່ຫນ້າມະນຸດ ຍອມປະກາດຄວາມເຊື່ອ ໂດຽການຮັບບັພຕິສມາ ແຕ່ຫລັງຈາກນີ້ແລ້ວຍັງມີຄວາມສຳຄັນທີ່ຕ້ອງມີການບຳຣຸງລ້ຽງ ແລະຖນອມວິນຍານໃຫ້ຈະເຣີນເຕີບໃຫຽ່ໂດຍທີ່ຜູ້ປະກາດຫລືນັກເທສ ບໍ່ອາດຈະປ່ອຍປະລະເລີຍໄວ້ ມີບາງເທື່ອທີ່ນັກເທສຫລືຜູ້ປ່າວປະກາດບໍ່ສາມາດດຳເນີນການລ້ຽງດູວິນຍານຈິດ ດັ່ງເດັກນ້ອຍ ໆ ທີ່ເພິ່ງເກີດໃຫມ່ນີ້ໄດ້ ຜູ້ປະກາດ ຫລືນັກເທດຈຳເປັນຕ້ອງໄດ້ມີແຜນການ ຫລືຫາຫົນທາງທີ່ຈະມີ ຜູ້ມາຮັບຊ່ວງຕໍ່ທີ່ຈະລ້ຽງດູວິນຍານຈິດ ທີ່ເກີດໃຫມ່ນີ້ຕໍ່ໄປ ຕົວຢ່າງນີ້ງທີ່ເຮົາເຫັນເດັ່ນຊັດຄື ທ່ານ ບິລລີ ເກລແຮມ (Billy Graham) ທ່ານເປັນຜູ້ປະກາດທົ່ວສະຫະຣັດອະເມຣິກາແລະເກືອບທົ່ວໂລກ ທ່ານເກັບກ່ຽວຜົນຫລືລາກອວນຫລາຍທີ່ສຸດ ຄັ້ງລະເປັນພັນ ໆ ຄົນແຕ່ທ່ານບໍ່ສາມາດລ້ຽງດູວິນຍານຈິດ ທີ່ເກີດໃຫມ່ເຫລົ່ານັ້ນໄດ້ ທ່ານຕ້ອງໄດ້ປະກາດ ແລະຂໍຮ້ອງໃຫ້ຄຣິສຈັກປະຈຳທ້ອງຖິ່ນ ຫລືທົ່ວເມືອງທີ່ທ່ານໄປປະກາດນັ້ນ ໃຫ້ຜູ້ຮັບໃຊ້ ໃຫ້ຄຣິສຕຽນ ໃຫ້ຜູ້ນຳ ນຳພາເອົາຜູ້ທີ່ບັງເກີດໃຫ່ມນັ້ນ ໄປເບິ່ງແຍງລ້ຽງດູກັນຕໍ່ໄປ ໂດຍທີ່ທ່ານມອບໄວ້ໃຫ້ແຕ່ລະຄະນະແຕ່ລະນິກາຍທີ່ໄດ້ນຳເອົາຄົນມາຮັບຟັງຂ່າວປະເສີດໂດຽນຳພາຄົນເຫລົ່ານັ້ນກັບຄືນໄປ ຍັງຄຣິສຈັກຂອງໃຜຂອງລາວ ເພື່ອ

ທະນຸຖະໜອມເບິ່ງແຍງ ແລະລ້ຽງດູໃຫ້ເຕີບໃຫຍ່ຕໍ່ໄປ

**ຫົກ. ສິ່ງທີ່ຕ້ອງເຮັດໃນການທະນຸຖະໜອມວິນຍານ**

1. ນຳພາໃຫ້ຜູ້ເກີດໃໝ່ໄປນະມັສການ ແລະເຂົ້າເປັນສະມາຊິກຂອງຄຣິສຈັກໃດ ຄຣິສຈັກນຶ່ງທີ່ມີຄວາມເຊື່ອຖືກຕ້ອງຕາມພຣະຄັມພີ ແລະບໍ່ຫ່າງໄກຈົນເກີນໄປ ເພື່ອຄວາມສະດວກໃນການຕິດຕໍ່ ແລະການເຂົ້າຮ່ວມສາມັກຄີທັມ

2. ສິດຍາພິບາລຕ້ອງໃຫ້ການອົບຮົມ ເຣື່ອງການເປັນສະມາຊິກໃໝ່ ສອນເຖິງກົດຣະບຽບຂອງຄຣິສຈັກ ແລະຄວາມຜູກພັນ ສາມັກຄີທັມຮ່ວມກັນ ການຖວາຍຊັພ ແລະຄວາມຮັບຜິດຊອບ ໃນການເປັນສະມາຊິກຂອງຄຣິສຈັກ

3. ເຂົ້າຮັບການຝຶກອົບຮົມ ການສຶກສາພຣະຄັມພີ ຮຽນຮູ້ພຣະຄຳຂອງພຣະເຈົ້າໃຫ້ສົມບູນໝົດເຫລັ້ມໃນພຣະຄັມພີເດີມແລະໃໝ່ ເພື່ອເຂົ້າໃຈນ້ຳພຣະທັຍພຣະປະສົງຂອງພຣະເຈົ້າ ໃນທຸກແງ່ມຸມຂອງຊີວິດ

4. ຈັດໃຫ້ເກີດສັງຄົມໃໝ່ ຄືສັງຄົມຄຣິສຕຽນ ເພື່ອການປ່ຽນແປງຊີວິດໃໝ່ຂອງຜູ້ນັ້ນຈະໄດ້ເຕີບໃຫຍ່ຂຶ້ນ ໃນຖານະທີ່ເປັນຄຣິສຕຽນທີ່ດຳເນີນຕາມເສັ້ນທາງຊີວິດໃໝ່ ຊຶ່ງຈຳເປັນຕ້ອງຖິ້ມຊີວິດແລະສັງຄົມແບບເກົ່າໃຫ້ໝົດສິ້ນ ເພື່ອຈະໄດ້ຮັບຊີວິດໃໝ່ ເປັນແບບຄຣິສຕຽນ ແລະຈະມີແຕ່ຄວາມຊົມຊື່ນຍິນດີຕໍ່ໄປ

5. ນຳພາໃຫ້ມີຄວາມຮັບຜິດຊອບ ແລະເກີດການຮັບໃຊ້ຊຶ່ງກັນແລະກັນ ສອນເຂົາເຖິງເຣື່ອງຄວາມຮັກທີ່ພີ່ນ້ອງຄຣິສຕຽນເຄີຍມີຕໍ່ກັນ ໃຫ້ຮູ້ຈັກເບິ່ງແຍງດູແລຊ່ວຍເຫລືອກັນແລະກັນ ແນະນຳໃຫ້ເຂົາຮູ້ຈັກເບິ່ງແຍງດູແລ ຄົນອື່ນພ້ອມທັງໃຫ້ມີຄວາມຮູ້ ຄວາມເຂົ້າໃຈ ແລະຮູ້ຈັກຮັບຜິດຊອບໃນວຽກການຂອງຄຣິສຈັກ ຕາມຄວາມເໝາະສົມກັບຄວາມຮູ້ຄວາມສາມາດຂອງເຂົາເຈົ້າ

## ຄຳແນະນຳສຳຫລັບຜູ້ປ່າວປະກາດຂ່າວປະເສີດ

ຈົ່ງຣະລຶກຢູ່ສະເໝີວ່າ ທ່ານເປັນຜູ້ຮັບໃຊ້ພຣະຄຣິສ ເປັນທູດຂອງພຣະອົງ ພຣະອົງຈະອວຍພຣະພອນທ່ານແລະນຳພາທ່ານ ນີ້ເປັນວຽກງານ ແລະຢູ່ໃນຄວາມຮັບຜິດຊອບຂອງພຣະເຈົ້າຕາມແຜນການແລະພຣະປະສົງຂອງພຣະອົງ ທ່ານຕ້ອງໄຫ້ວວອນຢູ່ບໍ່ຂາດ ແລະຕ້ອງບັງຄັບຊີວິດຈິດໃຈຂອງທ່ານໃຫ້ມີຄວາມເຊື່ອໝັ້ນຄົງ ທ່ຽງຕົງຖືກຕ້ອງຢູ່ສະເໝີ ອ້ອນວອນໃຫ້ພຣະວິນຍານບໍຣິສຸດຊົງນຳພາ ໃນວຽກງານການປະກາດຂ່າວປະເສີດນີ້ ໃຫ້ຈິດໃຈຂອງທ່ານສະງົບ ແລະມີໃຈຖ່ອມລົງ ທ່ານຄວນອະທິຖານທຸກຄັ້ງກ່ອນອອກໄປປະກາດ ໃນເວລາທີ່ກຳລັງປະກາດ ແລະຫລັງຈາກທີ່ທ່ານໄດ້ປະກາດແລ້ວ ທ່ານສາມາດຂໍໃຫ້ພຣະເຈົ້າຊົງຊ່ວຍໃຫ້ເກີດຜົນ ຄື

1. ຂໍພຣະເຈົ້ານຳພາທ່ານໃຫ້ພົບກັບຜູ້ທີ່ຕ້ອງການ ແລະພ້ອມທີ່ຈະຮັບຂ່າວປະເສີດ
2. ຂໍພຣະເຈົ້າໄປລ່ວງໜ້າກ່ອນທ່ານ ເພື່ອຕຽມພ້ອມສະຖານະການແລະໂອກາດດີທີ່ພ້ອມຈະໃຫ້ ທ່ານໄດ້ປ່າວປະກາດ

3. ຂໍພຣະອົງຊົງດົນບັນດານໃຈ ຕໍ່ຜູ້ທີ່ເຮົາຈະປະກາດນັ້ນ ໃຫ້ເຂົາມີຈິດໃຈອ່ອນລົງພ້ອມທີ່ຈະຮັບຟັງຂ່າວປະເສີດ ໃຫ້ເຂົາມີຈິດໃຈ ສແວງຫາຄວາມຣອດພົ້ນ
4. ຂໍການເຕັມລົ້ນດ້ວຍພຣະວິນຍານບໍຣິສຸດ ປະກອບດ້ວຍຣິດເດດ ຄວາມກ້າຫານ ມີຄວາມເວົ້າຈາທີ່ຖືກຕ້ອງ ພ້ອມກັບໃຊ້ພຣະຄໍາຂອງພຣະເຈົ້າ ເພື່ອຈະໄຂໃຈຜູ້ຟັງ ໃຫ້ເປີດອອກຕ້ອນຮັບຂ່າວປະເສີດ
5. ຂໍສະຕິປັນຍາ ແລະພິກໄຫວ ທີ່ຈະສາມາດເຂົ້າໃຈຜູ້ທີ່ເຮົາປະກາດ ແລະຮູ້ເຖິງຄວາມຕ້ອງການຂອງເຂົາ ແລະຮູ້ຈັກແກ້ໄຂເຫດການຫາກມີຂໍ້ຜິດພາດ ຫລືການປິດບັງບຽດບຽນຂອງມານ ເພື່ອເຮົາຈະໄດ້ຮັບໄຊຊະນະ ແລະເກັບກ່ຽວຜົນຝ່າຍວິນຍານໄດ້ສໍາເຣັດ
6. ຂໍຄວາມເຊື່ອ ໃຫ້ຕົວຂອງທ່ານເອງ ມີຄວາມເຊື່ອຢ່າງເຕັມບໍຣິບູນ ສົມບູນທຸກຢ່າງ
7. ຂໍໃຫ້ຜູ້ຮັບຟັງຂ່າວປະເສີດກ້າຫານ ແລະກ້າຕັດສິນໃຈຕ້ອນຮັບພຣະເຈົ້າ